ນິທານ

# ກ່ຳກາດ່ຳ



ຖອດເປັນຮ້ອຍແກ້ວ

ໂດຍ : ພ. ພວງສະບາ

# ນິທານ

# ກ່ຳກາດຳ

ພິມເທື່ອທີ I

ຖອດເປັນຮ້ອຍແກ້ວ

ໂດຍ: ພ. ພວງສະບາ

ສຳນັກພິມ ແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

ວຽງຈັນ 1996

ສະຫງວນລິຂະສິດ

ຮັບຜິດຊອບການພິມຈຳໜ່າຍ: ສີວຽງແຂກ ກອນນີວົງ

ຄະນະຈັດທຳເທື່ອທີ່ 1

-ບຸນຊູ ພັນທະວີໄຊ

-ບຸນນອງ ໄຊຍະເສນ

ດັດແກ້ມາແກັດ, ເຂົ້າໜ້າ: ນ.ອຳພາ

ແຕ້ມໜ້າປົກໂດຍ: ຄຳເພັດ

- ພິມທີ່ ໂຮງພິມຊາວໜຸ່ມ

- ລທບ ໑໘/ພຫປ ໔໙.໑໔.໙໕

- ຈຳນວນ ໔.000 ຫົວ

ຂະໜາດ 13×19 ຊ.ມ.

# ຜູ້ຮິບໂຮມຮຽບຮຽງ

ນິທານທ້າວກ່ຳກາດຳ ຖືວ່າເປັນວັນນະຄະດີພື້ນເມືອງຂອງ ລາວອີກເລື່ອງໜຶ່ງ ເຊິ່ງເປັນທີ່ນິຍົມຊົມຊອບຢ່າງແຜ່ຫລາຍໃນໝູ່ມະຫາຊົນທັງຈາກການອ່ານແລະການເລົ່າດ້ວຍປາກເປົ່າສືບທອດກັນ ມາເປັນເວລາດົນນານ, ເນື້ອໃນຂອງເລື່ອງ ໄດ້ພັນລະນາເຖິງຄວາມຂັດແຍ່ງແລະຄວາມເຫລື່ອມລ້ຳຕ່ຳສູງຂອງຄົນໃນສັງຄົມບໍ່ວ່າທາງ ຮູບຮ່າງຜິວພັນຫລືຊົນຊັ້ນແລະຊັ້ນຄົນ. ໂດຍສະເພາະຕົວລະຄອນເອກໃນເລື່ອງລະຫວ່າງທ້າວກ່ຳກາດຳແລະນາງລຸນນັ້ນມີຄວາມແຕກຕ່າງກັນປານຟ້າກັບດິນ, ແຕ່ບໍ່ມີສິ່ງໃດຈະກັ້ນກາງຄວາມຮັກໄດ້ ຍ້ອນ ສຽງແຄນເຂົ້າເຖິງດວງໃຈ.

ທ້າວກ່ຳກາດຳໃຊ້ສຽງແຄນແຫ່ງສິລະປະສັກສິດເປັນສື່ກາງ, ເພື່ອກໍ່ສ້າງຄວາມຮັກ, ຄວາມອີດູ, ຄວາມຮູ້ຄວາມເຂົ້າໃຈຂຶ້ນໃນຫົວ ໃຈຂອງນາງລຸນສາວງາມແຫ່ງເມືອງເປັງຈານເຮັດໃຫ້ນາງຮູ້ສຶກ ມ່ວນແມ້ງສະອອນໃຈແລະໃນທີ່ສຸດນາງກໍໄດ້ມອບຄວາມຮັກໃຫ້ທ້າວກ່ຳກາດຳ. ດ້ວຍພົນສະເໜ່ຂອງສຽງແຄນນີ້ ເມື່ອຜູ້ໃດໄດ້ອ່ານຫລື ໄດ້ຟັງເລື່ອງທ້າວກ່ຳກາດຳແລ້ວຫລາຍຄົນກໍ່ຢາກຮູ້ບັນຫາແຄນແລະການຂັບລຳຊຶ່ງມີການຕິດພັນກັບຢ່າງແໜ້ນສະໜິດກາຍເປັນສຽງສັກ ສິດໜ້າອັດສະຈັນ.

ນິທານທ້າວກ່ຳກາດຳ ມີເປົ້າໝາຍຢາກສ່ອງແສງໃຫ້ເຫັນຄວາມສາມັກຄີປຸ້ມລຸມກັນເປັນນ້ຳໜຶ່ງໃຈດຽວເພື່ອພ້ອມກັນປົກປັກຮັກ ສາ

ແລະສ້າງບ້ານແປງເມືອງຢ່າງພ້ອມພຽງກັນ ຄືກັບລູກແຄນທີລວມກັນຢູ່ໃນເຕົ້າ ສາມາດປະສານສຽງເກາະກ່າຍກັນຢ່າງເປັນລະບົບເອກະພາບກັນໃນເຕົ້າດຽວ, ເພາະວ່າໃນຕອນອາລຳພາບົດຂອງເລື່ອງນີ້ ນັກປະພັນໄດ້ຂຽນພັນລະນາຖ່າຍທອດຄວາມຮູ້ສຶກໃນໃຈ ເຊິງ ສະໄຫມອານາຈັກລ້ານຊ້າງເສຍບ້ານເສຍເມືອງ ປະຊາຊົນໄດ້ພາ ກັນແຕກສະຫລຸຍພ່າຍເພາະບ້ານແຕກແຊກຂາດ, ທັງໄດ້ພັນລະນາ ເຊິງຄວາມຄິດຮອດຫາກັນລະຫວ່າງຜົວເມຍແລະລູກທີ່ຕ້ອງພັດພາກ ຈາກກັນໄປຄົນລະທິດລະທາງ.

ນັກປະພັນໄດ້ຂຽນເລື່ອງນີ້ຂຶ້ນມາອາດແນໃສ່ເພື່ອປຸກລະ ດົມຮຽກຮ້ອງໃຫ້ທຸກຄົນມີຄວາມສາມັກຄີຮັກແພງປຸ້ມລຸມກັນປົກປັກຮັກ ສາແລະສ້າງບ້ານແປງເມືອງ ຮັກຖິ່ນກຳເນີດຂອງຕົນ ຮ່ວມປະສານກັນເຂົ້າຄືກັບລູກແຄນຢູ່ໃນເຕົ້າ ເພື່ອສ້າງສາພັດທະນາບ້ານເກີດເມືອງນອນຄ້າຍຄືກັບລູກແຄນບໍ່ລືມເຕົ້າ.

ທ່ານຜູ້ອ່ານໜັງສືແລະຮັກແພງນິທານທ້າວກ່ຳກາດຳສະບັບ ທີເປັນຮ້ອຍກອງນັ້ນມີຜູ້ຂຽນອອກເຜີຍແຜ່ທັງສະບັບໃບລານແລະສະບັບພິມເປັນເຫລັ້ມມາແລ້ວ. ເທື່ອນີ້ຂ້າພະເຈົ້າໄດ້ພະຍາຍາມຖອດ ອອກເປັນບົດຮ້ອຍແກ້ວຈາກ (ສະບັບຂອງຫໍສະໝຸດແຫ່ງຊາດ) ເພື່ອໃຫ້ ຜູ້ອ່ານເຂົ້າໃຈເນື້ອໃນໄດ້ງ່າຍ. ທັງໄດ້ຈັດແບ່ງເປັນຕອນໆຕື່ມ ອີກເພາະສະບັບເດີມນັ້ນບໍ່ໄດ້ແບ່ງເປັນຕອນໄວ້ເລີຍ. ແຕ່ການຖອດຈາກຮ້ອຍກອງມາເປັນຮ້ອຍແກ້ວກໍ່ບໍ່ແມ່ນເລື່ອງງ່າຍດາຍແລະທັງ ເປັນເທື່ອທຳອິດໃນການຖອດເປັນຮ້ອຍແກ້ວ. ສະນັ້ນຈຶ່ງບໍ່ປາສະຈາກ ໄດ້

ຄວາມຂາດຕົກບົກພ່ອງ ແຕ່ຫວັງວ່າຈະໄດ້ຮັບຄວາມຮ່ວມມື ຊ່ວຍເຫລືອຈາກທ່ານຜູ້ອ່ານແລະທ່ານຜູ້ຮູ້ທັງຫລາຍເພື່ອຈະໄດ້ດັດແປງແກ້ໄຂໃນໂອກາດຕໍ່ໄປ.

ວຽງຈັນ,ວັນທີ 15/8/1992

ດ້ວຍຄວາມຮັກແພງ.

ພ.ພວງສະບາ

# ຫຍໍ້ເລື່ອງ

ທ້າວກ່ຳກາດຳຫລືວ່າທ້າວເທດອິນທະຄີ ເປັນລູກຂອງ ນາງຫລ້ານ້ອຍ, ພໍ່ຂອງທ້າວຊື່ວ່າແນວໃດບໍ່ປະກົດແລະນາງຫລ້ານ້ອຍກັບຜົວ ນັ້ນເປັນຄົນບ້ານໃດກໍບໍ່ກ່າວ ໄວ້ຄືກັນພຽງແຕ່ເວົ້າວ່າຜົວເມຍຄູ່ນັ້ນເອົາກັນແລ້ວກໍສ້າງເຮືອນແປງຊານຢູ່ຄອນຊາວບ້ານເຂດເມືອງອິນທະຖະປັດຖະນະຄອນນານ ໄດ້ເຖິງເຈັດປີບໍ່ມີລູກມາເກີດນຳ.

ມື້ໜຶ່ງນາງຫລ້ານ້ອຍກັບຜົວ ໄດ້ຕົກລົງກັນສິທຽນແຕ່ງຂັນບູຊາ ອະທິຖານ ໄຫວ້ວອນເຖິງພະອິນເພື່ອຂໍລູກມາເກີດດອນຝ່າຍພະອິນ ໄດ້ ຮູ້ເຖິງຄວາມປາຖະໜາຂອງນາງຫລ້ານ້ອຍກັບຜົວເຊັ່ນນັ້ນແລ້ວກໍແຕ່ງໃຫ້ທ້າວເທດອິນທະຄີ (ຕໍ່ມາເປັນທ້າວກ່ຳກາດຳ) ພ້ອມດ້ວຍນາງ ຈຸນລະນີພາກັນລົງມາເກີດໃນເມືອງມະນຸດ, ກ່ອນຈະລົງມາພະອິນ ໄດ້ມອບແຫວນແລະເສື້ອສິດຳເຫລື້ອມ ໃຫ້ທັງສອງວ່າຖ້າຕ້ອງການສິ່ງ ໃດໃຫ້ເອົາແຫວນແກ່ວງທາຈະສົມປາຖະໜາທຸກອັນ.

ເມື່ອສິ່ງເປັນທີ່ຮຽບຮ້ອຍແລ້ວ ກໍອະນຸຍາດໃຫ້ທັງສອງລົງສູ່ ພື້ນໂລກມະນຸດ ແຕ່ບັງເອີນລົມ ໄດ້ພັດເອົາທັງສອງຈາກກັນ ໄປຄົນລະທິດລະທາງ ນາງຈຸນລະນີຕົກ ໄປເກີດໃນເມືອງເປັງຈານ ສ່ວນ ທ້າວເທດອິນທະຄີກໍຕົກ ໄປເກີດໃນເຂດເມືອງອິນທະປັດຖະນະຄອນ.

ໃນເວລາຕໍ່ມາ ນາງຫລ້ານ້ອຍກໍຖືພາມານ ເມື່ອຄົບກຳໜົດ ກໍເກີດລູກອອກມາເປັນຜູ້ຊາຍ ແຕ່ວ່າມີຮູບຮ່າງຜິວພັນກ່ຳດຳພີປານວ່າບໍ່ແມ່ນຄົນເອົາໂລດ. ຈຶ່ງເຮັດໃຫ້ນາງຫລ້ານ້ອຍບໍ່ພໍໃຈເກີດມີ ຄວາມ

ລັງກຽດຕໍ່ລູກຈີນບໍ່ຢາກແນມເບິ່ງ ມີແຕ່ຜູ້ເປັນຜົວທີ່ໝັ້ນປົວລະບັດ ຮັກສາລູກ.

ທ້າວເທດອິນທະຄີບໍ່ພຽງແຕ່ຮູບບໍ່ງາມທັ້ນ ເມື່ອໃຫຍ່ຂຶ້ນມາພໍ່ຫັດປາກຫັດເວົ້າໄດ້ ແຕ່ກໍ່ບໍ່ຍອມປາກບໍ່ຍອມຈາຫລີແນ່ນແຕ່ຈະຍິ້ມຈະຫົວກໍຍັງບໍ່ມີເລີຍ ຍິ່ງພາໃຫ້ນາງຫລ້ານ້ອຍມີຄວາມລະອາຍແລະຕັ້ງຂໍ້ລັງກຽດຄຽດຊັງຕໍ່ລູກຕື່ມຂຶ້ນ. ໃນທີ່ສຸດນາງຫລ້ານ້ອຍກໍ່ໄດ້ເອົາ ທ້າວເຂົ້າໃສ່ແພ ໄຫລລ່ອງນ້ຳຫນີຈາກບ້ານຈາກເມືອງ ທ້າວໄດ້ໄປຄ້າງຢູ່ທີ່ຫາດຊາຍກາງນ້ຳເປັນເວລາດົນນານດ້ວຍຄວາມທຸກຍາກລຳບາກ.

ຕໍ່ມາພະອິນຈຶ່ງແຕ່ງໃຫ້ກາດຳລົງມາເອົາທ້າວອອກຈາກຫາດຊາຍໄປປະໄວ້ແຄມຝັ່ງນ້ຳ, ທ້າວຈຶ່ງໄດ້ໄປອາໄສຢູ່ນຳຍ່າເຖົ້າຮັກສາສວນຂອງນາງລຸນ ລູກສາວຂອງພະຍາເມືອງເປັງຈານ. ທ້າວອາໄສຢູ່ນຳຍ່າເປັນເວລານານສົມຄວນມື້ຫນຶ່ງທ້າວເຫັນຍ່າຮ້ອຍດອກໄມ້ ໄປຖວາຍນາງລຸນທ້າວຈຶ່ງຂໍຮ້ອຍນຳ, ເມື່ອຍ່າອະນຸຍາດທ້າວຈຶ່ງ ຮ້ອຍເປັນຮູບນານາອັນຈົບງາມແລ້ວຍ່າກໍ່ນຳໄປຖວາຍນາງລຸນ ປະກົດວ່ານາງລຸນມີຄວາມຊື່ນຊົມນຳ ຮວດດອກໄມ້ ທັງພ່ອງຢາກເຫັນ ຫນ້າເຈົ້າຂອງຮວດ ດອກໄມ້.

ຄືນຫນຶ່ງທ້າວກໍ່າກາດຳໄດ້ຄອບຍ່າໄປທ່ຽວຫລິ້ນໃນເມືອງແລ້ວຢືມແຄນພວກຜູ້ບ່າວເປົ່າ ປະກົດວ່າສຽງແຄນຂອງທ້າວດັງມ່ວນແມ້ງສະອອນໃຈຄົນທັງເມືອງໃຜໆກໍພາກັນລຸກນັ່ງຟັງ. ພະຍາເມືອງແລະນາງລຸນກໍ່ຫລົງໄຫລໃນສຽງແຄນຂອງທ້າວຈົນໄດ້ສັ່ງໃຫ້ທ້າວເຂົ້າພົບແລະເປົ່າແຄນໃຫ້ຟັງ.

ໃນທີ່ສຸດທ້າວກ່ຳກາດຈຳກໍໄດ້ນາງລຸນມາເປັນເມຍຢູ່ຊ້ອນ ດ້ວຍຄ່າສອດສິນດອງອັນມະຫາສານມີທັງຂ້ອຍຂ້າມ້າໃຊ້ ເຂົ້າຂອງເງິນ ຄຳແລະຂົວເງິນຂົວຄຳ ແຕ່ທ້າວກໍຕອບສະຫນອງໄດ້, ພະຍາເມືອງ ຈຶ່ງຈັດພິທີແຕ່ງດອງໃຫ້ທັງສອງຕາມຣີດຄອງປະເພນີແລ້ວສະເຫວີຍລາດບ້ານເມືອງເຊິ່ງເປັນເມືອງໃຫ່ມທີ່ພະອິນນິມິດໃຫ້ດ້ວຍຄວາມຜາ ສຸກຣົ່ມເຢັນທຸກປະການ.

# 1: ບັ້ນທ້າວກ່ຳກາດຳລົງມາເກີດ

ກ່າວເຖິງຜົວເມຍຄູ່ໜຶ່ງ ຜູ້ເປັນເມຍຊື່ວ່າ ນາງຫລ້ານ້ອຍ ທັງສອງໄດ້ສົມສູ່ຢູ່ຮ່ວມເປັນຜົວເມຍກັນຕາມຮີດຄອງປະເພນີແລະ ໄດ້ສ້າງຢ້າວແປງເຮືອນຢູ່ຮ່ວມກັບຊາວບ້ານຊາວເມືອງນັບເປັນເວລາໄດ້ເຈັດປີປາຍ. ແຕ່ວ່າຜົວເມຍຄູ່ນີ້ຍັງບໍ່ທັນມີລູກເຕົ້າເຫລົ່າກໍພໍຈະສືບຢ້າວແທນເຮືອນເທື່ອ, ໃນຄືນໜຶ່ງຂະນະທີ່ຄູ່ຜົວເມຍນອນຮ່ວມກັນນັ້ນຈຶ່ງໄດ້ລົມກັນດ້ວຍຄວາມນ້ອຍເນື້ອຕ່ຳໃຈ ເພາະວ່າບໍ່ມີ ລູກສືບຕະກູນ ຄືກັບຊາວບ້ານຊາວເມືອງເພິ່ນ, ຜູ້ເປັນຜົວໄດ້ ເວົ້າດອນເມຍວ່າ ຮັກລູກເພິ່ນນັ້ນຮັກເສຍດາຍເປົ່າ ມັນບໍ່ຄືລູກທີ່ ເກີດຈາກອຸທອນກ້ອນເລືອດຂອງເຮົາເອງດອກ. ດຽວນີ້ພວກເຮົາກໍຢາກໄດ້ລູກມາເກີດນຳ ແຕ່ຫາກວ່າເອົາກັນມານານກໍ່ໄດ້ເຈັດປີປາຍ ແລ້ວກໍຍັງບໍ່ມີລູກມີເຕົ້ານຳກັນເທື່ອ.

ດັ່ງນັ້ນ, ຜູ້ເປັນຜົວຈຶ່ງສະເໜີຄຳເຫັນຕໍ່ເມຍວ່າ ພວກເຮົາ ຈຶ່ງພ້ອມກັນສີຫຽນໄຫວ້ວອນເຖິງພະອິນຕິນປະເສີດ ເພື່ອຂໍລູກນຳເພິ່ນພໍໄດ້ມາສືບເຊື້ອແທນແນວ, ຝ່າຍນາງຫລ້ານ້ອຍຜູ້ເປັນເມຍໄດ້ ຍິນຜົວເວົ້ານຳຄືແນວນັ້ນ ກໍມີໃຈຊຸ່ມຊື່ນຍິນດີແລະເວົ້າວ່າ ເຈົ້າຄິດໄດ້

ແນວນັ້ນແມ່ນດີຫລາຍຂ້ອຍເອງກໍເຫັນດີນຳທຸກຢ່າງ, ຈາກນັ້ນທັງສອງ
ຈຶ່ງພ້ອມກັນສິດທຽມໄດ້ຮອຍຄູ່ ເຂົ້າຕອກທັງດອກໄມ້ມີພ້ອມຊູ່ອັນ.

ຫລັງຈາກກະກຽມເຄື່ອງສັກກາລະບູຊາ ເປັນທີ່ຮຽບຮ້ອຍ ແລ້ວ
ທັງສອງໄດ້ພາກັນລົງໄປສູ່ວັດແຫ່ງຫນຶ່ງແລ້ວກໍພາກັນຍໍຂັນທຽນ ແລະ
ດອກໄມ້ຂຶ້ນໃສ່ຫົວພ້ອມທັງຕັ້ງສັດຈາອະທິຖານເຖິງບຸນຍາປາລະ' ມີ
ແລະສິ່ງສັກສິດທັງຫລາຍທັງປວງ ຕະຫລອດເຖິງເທວະບຸດ ເທ ວະ
ດາຈົ່ງຊ່ອຍຊູ້ຍູ້ຫນູນ ຂໍໃຫ້ສິ່ງສັກສິດດັ່ງກ່າວ ຈຶ່ງໄດ້ນຳເອົາ ຄຳ
ວິງວອນນີ້ໄປຂາບໄຫວ້ຕໍ່ພະອິນ; ຝ່າຍເທວະບຸດ ເທວະດາ ຈຶ່ງ
ຟ້າວຮັບເອົາຂັນດອກໄມ້ຂອງຄູ່ຜົວເມຍແລ້ວນຳໄປຂາບ ຖວາຍ ຕໍ່
ພະອິນວ່າດຽວນີ້ຍັງມີນາງຫລ້ານ້ອຍກັບຜົວໄດ້ນຳເອົາຂັນທຽນ ແລະ
ດອກໄມ້ໄຫວ້ວອນເຖິງທ່ານພະອິນ, ທັງສອງປາຖະຫນາ ຢາກໄດ້
ລູກໄປເກີດດອມ ເພາະວ່າຜົວເມຍຄູ່ນີ້ບໍ່ມີພົງພັນສືບ ຕະກູນ ແທນ
ເຊື້ອ.

ຝ່າຍພະຍາອິນເມື່ອໄດ້ຮູ້ຄືແນວນັ້ນກໍຈຶ່ງຮັບເອົາ ຂັນດອກໄມ້ຈາກ
ເທວະດາ ຈາກນັ້ນພະອິນກໍສັ່ງໃຫ້ເຈົ້າຫລ້ານ້ອຍທ້າວເທດ ອິນທະຄີ
ກັບນາງຈຸນລະນີໃຫ້ພາກັນລົງມາເກີດໃນເມືອງມະນຸດ,ພະອິນ ໄດ້
ເອົາແຫວນທຳມະໂລງສຸບໃສ່ນິ້ວມືໃຫ້ແກ່ທ້າວ ພ້ອມດ້ວຍ ເສື້ອ ສີ
ຫລາກເຫລື້ອມແຕ່ຫາກເປັນເສື້ອສີດຳ. ເມື່ອທ້າວໃສ່ເສື້ອເຂົ້າ ຫຸ້ມ
ໂຕແລ້ວງາມປານວ່າຄຳຢູ່ໃນເບົ້າ.

ກ່ອນທີ່ທ້າວຈະລົງມາເກີດໃນເມືອງມະນຸດນັ້ນພະອິນກໍໄດ້ສັ່ງ ກັບ
ທ້າວວ່າ ຖ້າລົງໄປເກີດແລ້ວຫາກມີຄວາມປະສົງຢາກ ສະ ເຫວີຍ

ລາດບ້ານເມືອງແລ້ວໃຫ້ຍົກແຫວນແກ່ວມາທາງເບື້ອງພະອິນ, ຖ້າ
ຫາກຂາດເຂີນເງີນຄຳເຂົ້າຂອງໃຫ້ເອົາແຫວນແກ່ວລົງໄປ ທາງ
ເມືອງນາກພຸ້ນ ແລະອີກອັນໜຶ່ງໃຫ້ເຈົ້າຮູ້ຕື່ນເດີກລຸກເຊົ້າສາເກດ
ເກສາ ເຖິງຍາມແລງໃຫ້ພ່ຳເພງສິນແກ້ວ ດັ່ງບົດກອນຂຽນວ່າ

ຄັນເຈົ້າຄຶດໄດ່ສຸກຢູ່ສ້າງ ສະເຫວີຍລາດເປັນພະຍາ
ໃຫ້ເຈົ້າຍໍແຍງຍົກ ແກ່ວແຫວນມາພີ້
ອັນໜຶ່ງຫລອນວ່າເງີນຄຳແກ້ວ ເບົາບາງເຂີນຂາດ
ໃຫ້ເຈົ້າຍໍແກ່ວຊີ້ ລົງນ້ຳນາກຫລວງ ພໍ່ເດີ

ເມື່ອພະຍາອິນຜູ້ເປັນພີ່ສັ່ງແລ້ວ ທ້າວເທດອິນທະຄີ ພ້ອມ ທັງ
ນາງຈຸນລະນີ (ບາງບ່ອນວ່າສຸນລະນີ) ກໍຈຶ່ງພ້ອມພາກັນເຫາະ. ລົງ
ສູ່ໂລກມະນຸດ, ແຕບັງເອີນລົມມິດຕອກພັດໄປຄືນແຈລົມມິດແຖພັດໄປ
ຄືນກ້ຳ, ເຮັດໃຫ້ທ້າວແລະນາງຕົກໄປຢູ່ຄົນລະທິດລະທາງຄືນາງຈຸນ
ລະນີຕົກໄປຢູ່ເມືອງເປັງຈານສ່ວນທ້າວອິນທະຄີກໍຕົກໄປຢູ່ອີກເມືອງ
ໜຶ່ງທີ່ຫ່າງໄກຈາກນາງ.

ບັດນີ້ ຢ້ອນກ່າວເຖິງນາງຫລ້ານ້ອຍ ຄືນນັ້ນນາງໄດ້ນອນຝັນວ່າ
ພິທູນແກ້ວດຳນິນລຸກປະເສີດ ສະເດັດເຂົ້າປາກ ນາງໄດ້ກືນແກ້ວພິ
ທູນສີດຳນັ້ນລົງໄປໃນທ້ອງ ແຕ່ວ່າບໍ່ພໍຄາວແກ້ວພິທູນກໍໄດ້ສະ ເດັດ
ອອກຈາກປາກຕົກມາຄ້າງຢູ່ຝ່າມືຂອງນາງແລະນາງກໍຟ້າວກຳເອົາ
ໄວ້ ບຶດໜຶ່ງນາງພັດແບນມືອອກເບິ່ງ ແກ້ວພິທູນກໍໄດ້ສະເດັດອອກ
ຈາກມືຂອງນາງໄປ ພ້ອມທັງສົ່ງແສງອັນຮຸ່ງເຮືອງໄປທາງ ເບື້ອງ
ໜ້າ, ນາງຫລ້ານ້ອຍສຸດແສນເສຍດາຍທັງຈົ່ມວ່າຖ້າຮູ້ແນວແໜງ

ວ່າກຳເອົາໄວ້ແໜ້ນໆບໍ່ໃຫ້ມັນຫລຸດມືໜີໄປໄດ້.

ພໍນາງຫລ້ານ້ອຍຊວາຕື່ນຂື້ນຈິ່ງໄດ້ແກ້ຄວາມຝັນສູ່ຜົວຟັງ ນາງເວົ້າວ່າລາງຝັນດີຈີ່ງຊີ້ ເປັນໜ້າອັດສະຈັນແທ້ໆ ພໍແກ້ລາງຝັນ ສຸດກໍພໍດີແຈ້ງເປັນມື້ໃໝ່ມາເຊິງ. ຝ່າຍຜູ້ເປັນຜົວໄດ້ຟັງເມຍແກ້ ລາງຝັນສູ່ຟັງດີແນວນັ້ນກໍມີຄວາມດີໃຈຫຸ່ນໆແລະເວົ້າໃຫ້ກຳລັງໃຈຕໍ່ເມຍວ່າ ຝັນຈິ່ງຊີ້ຄືຊິໄດ້ລູກມາເກີດນຳແນ່ນອນແລ້ວ.

ຈາກນັ້ນມາໄດ້ຫລາຍເດືອນ ນາງຫລ້ານ້ອຍກໍບອກຜົວວ່າ ຕົນເອງໄດ້ຖືພາ ເຮັດໃຫ້ຜູ້ເປັນຜົວມີຄວາມດີໃຈຫາອັນປຽບ ບໍ່ໄດ້ ຊາວບ້ານຊາວເມືອງໃຜໄດ້ເຫັນນາງຫລ້ານ້ອຍຖືພາ ກໍພາກັນຫົວເປັນແຊວງ ບາງຄົນກໍເວົ້າຢອກວ່າ ແຕ່ກ່ອນຜົວຄືຊິເປັນມອງຕີ ບໍ່ປັ້ດມົນກຳລັງແລ້ວ ເມຍເລີຍຖືພາມານ, ບາງຄົນກໍເວົ້າວ່າປົ້ນ ອີຫລ້ານ້ອຍມັນຊິມີໂຊກມີລາບແລ້ວຕີ້ນໍ ເພາະວ່າມັນຊິໄດ້ລູກໄດ້ເຕົ້ານຳບ້ານນຳເມືອງເພີ່ນ.

ນັບແຕ່ນາງຫລ້ານ້ອຍໄດ້ຖືພາມານມາກໍເປັນເວລານານໄດ້ ສິບເອັດເດືອນທ້ອງແກ່, ນັ້ນນາງເຈັບທ້ອງຈະອອກລູກຈິ່ງໄດ້ ເອີ້ນຫາຜົວ ຝ່າຍຜູ້ເປັນຜົວໄດ້ຍິນສຽງເມຍເອີ້ນກໍຟ້າວແລ່ນມາຫາ ທັງມາຄ້ຳພາໂຈມເມຍໄວ້, ຝ່າຍນາງຫລ້ານ້ອຍກໍບອກກັບຜົວວ່າ ເຈັບທ້ອງແຮງໆປວດໄປທົ່ວຮ່າງກາຍທັງພ່ອງສົ່ງສຽງຄາງອີນອ້ອຍດ້ວຍຄວາມເຈັບປວດ. ດັ່ງນັ້ນ ຜູ້ເປັນຜົວຈິ່ງຟ້າວແລ່ນໄປເອີ້ນພີ່ນ້ອງບ້ານໃກ້ເຮືອນຄຽງໃຫ້ມາເບິ່ງມາແຍງຊ່ອຍ.

ນາງຫລ້ານ້ອຍເຈັບຢູ່ດົນເຕີບ ພໍໄດ້ລຶກວາມຍາມດີທ້າວຈິ່ງ ປະ

ສຸດອອກ ຜົວຈຶ່ງຟ້າວໂຮມເອົາລູກໄປລ້າງ ໄປສ່ວາຍແລ້ວຊອກເອົາຜ້າແພມາຕຸ້ມມາຫົ່ມເອົາລູກ, ສ່ວນນາງຫລ້ານ້ອຍນັ້ນແນມເບິ່ງ ລູກອອກມານັ້ນດ້ວຍຄວາມຮູ້ສຶກຜິດຫວັງໃນໃຈ ພາໃຫ້ນາງເກີດຄວາມນ້ອຍເນື້ອຕ່ຳໃຈໃນບຸນວາດສະໜາ ໄດ້ແຕ່ຄຶດສັງເວດໂຕເອງ ຢູ່ໃນໃຈວ່າ ໂອຍສັງເວດຕົນເອງເດ ໄດ້ລູກມາກໍບໍ່ຄືລູກ ບ້ານລູກເມືອງເພິ່ນ ຫລຽວເບິ່ງປານໂຕລີງເອົາໂລດ ທັງດຳທັງແຫລ້ຊາວບ້ານຊາວເມືອງຜູ້ໃດເຫັນກໍພາກັນຫົວຂວັນເປັນແຊວງ ດັ່ງບົດກອນຂຽນວ່າ

ແຕ່ນັ້ນຝູງພີ້ນອງ    ຫົວຂວັນຊິຊວ່າ
ອັນວ່າລູກອີຫລ້ານ້ອຍ    ດຳປື້ງກາ
ຕັ້ງວ່າບໍ່ຄືນແທ້    ປານລີງຢູ່ກາງປ່າ
ຕັ້ງວ່າແສນຂີ້ຮ້າຍ    ບໍ່ຄືດ້ານດັ່ງຄົນ

ແຕ່ວ່າຊຸມຊາວບ້ານເຂົາເຈົ້າກໍຄຶດເຫັນໃຈນາງຫລ້ານ້ອຍ ທີ່ໄດ້ລູກຜູ້ຂີ້ເຮີຂີ້ຮ້າຍ, ດັ່ງນັ້ນເຂົາເຈົ້າຈຶ່ງຊັບຊຶ້ມກັນວ່າ ຢ່າໄດ້ພາກັນເວົ້າໄປທົ່ວທິບທົ່ວແດນ ເຫັນແລ້ວຮູ້ແລ້ວກໍໃຫ້ມິດຢູ່ໃນໃຈຂອງ ໃຜຂອງມັນ, ຫລັງຈາກນັ້ນຊຸມຊາວບ້ານທີ່ມາຫຸ້ມເບິ່ງກໍຄ່ອຍໆພາກັນກັບຄືນເມືອເຮືອນໃຜເຮືອນມັນ.

ເມື່ອພີ້ນອງຊາວບ້ານກັບຫນີເມືອຫມົດແລ້ວ ກໍມີແຕ່ຜົວແລະເມຍນັ່ງເຝົ້າກັນຢູ່ ຝ່າຍຜູ້ເປັນເມຍຈຶ່ງເວົ້າຂຶ້ນວ່າ ລູກຂອງເຮົາ ຈັ່ງແມ່ນມັນເປັນເຮີເປັນຮ້າຍເອົາແທ້ເອົາວ່າ ຕັ້ງຫາກດຳຄຶນມິນ ແທ້ຄືລີງຕາຍຊາກ ໂສມຮູບຫນ້າພາງຮ້າຍກ່ວາຊະນີ. ນາງຫລ້າ ນ້ອຍ

ໄດ້ເວົ້ານຳຜົວຕົນວ່າ ຕົນເອງມີຄວາມລະອາຍຊາວບ້ານ ຊາວເມືອງ ໄດ້ລູກມາກໍບໍ່ຄືລູກບ້ານຫລານເມືອງເພິ່ນ ເປັນຮ້າຍກະ ດັດກະດໍ້ ແລະອີກຢ່າງໜຶ່ງກໍຄຶດລະອາຍຊູ້ເກົ່າ ເຂົາຈິມາຫົວ ເຍາະເຍີ້ຍສະນັ້ນນາງຫລ້ານ້ອຍຈຶ່ງບອກໃຫ້ຜົວເອົາລູກໄປໂຜດຖິ້ມ ໄວ້ກາງປ່າດີກວ່າ ລ້ຽງໄວ້ກໍພໍແຕ່ອັບອາຍຂາຍໜ້າລາງ.

ຜູ້ເປັນຜົວໄດ້ເວົ້າດອມເມຍວ່າຈະຮ້າຍດີພີຜອນແນວໃດກໍ ຍັງແມ່ນລູກທີເກີດຈາກອຸທອນກ້ອນເລືອດຂອງເຮົານ່າຈິເອົາໄປ ໂຜດໄປຖິ້ມໄດ້ແນວໃດ, ເປັນແນວໃດກໍ່ອົດສາພະຍາຍາມລ້ຽງເກືອ ໄປກ່ອນ ບາງເທື່ອບຸນມີເມືອໜ້າຫາກຈິໄດ້ເພິ່ງໄດ້ອີງ ດັ່ງບົດ ກອນຂຽນວ່າ

ແຕ່ນັ້ນຜົວກ່າວຕ້ານ    ຈາຕໍ່ເມຍຂວັນ
ຍັງວ່າສາຍໃຈຕົນ    ຈິໂຜດພາຍສັງເດເຈົ້າ
ເຮົາຄ່ອຍທຳພຽນລ້ຽງ    ບຸນຫລາຍຫລອນວ່າໃຫ່ຍ
ລາງເທື່ອບຸນມາກລັ້ນ    ຍັງຈິໄດ້ເພິ່ງພາ ບໍ່ຮູ້

ຝ່າຍຜູ້ເປັນຜົວໄດ້ເອົາໃຈໃສ່ພາກພຽນຄຫ້ຳເມຍຈົນຄົບ ກຳໜົດຮອດມື້ອອກໄຟ. ສ່ວນວ່ານາງຫລ້ານ້ອຍນັ້ນພໍແຕ່ອອກກຳຫວິດ ກໍເພດແອະເພດແອ່ນ ປານວ່າບໍ່ແມ່ນແມ່ລູກອ່ອນເອົາໂລດ, ພວກ ຊາວບ້ານຊາວເມືອງໃຜກໍຖາມເປັນແຊວງວ່າ ລູກຂອງມຶງ ຕາຍ ຫລືວ່າຍັງຢູ່? ນາງຫລ້ານ້ອຍໄດ້ຍິນຊາວບ້ານຖາມຄືແນວນັ້ນກໍຢາກ ຮ້າຍຈິງຕອບວ່າ ສູເຈົ້າຢ່າມາສັ້ນມາຖາມຫາມັນເທາະບັກຕາຍເວນ ອັນນັ້ນເກີນຈັ່ງແມ່ນຂ້ອຍໜ່າຍຂ້ອຍຊັງມັນເອົາແທ້ເອົາວ່າ. ຂ້ອຍ

ຄຶດວ່າຊິເອົາໄປຖິ້ມແລ້ວລະແຕ່ພໍ່ມັນຫາກຫ້າມເອົາໄວ້. ພວກຊາວບ້ານໄດ້ຍິນແນວນັ້ນຈຶ່ງເວົ້າກັບນາງຫລ້ານ້ອຍວ່າ ເອີ... ເປັນແນວໃດກໍໃຫ້ນຶ່ງອຶດສາພາກພຽນລ້ຽງເອົາໄວ້ ເຖິງມັນຈະຮູບຮ້າຍແນວໃດກໍອຶດສາລ້ຽງພໍໄດ້ເອົາໄວ້ເຝົ້າເຮືອນ ເຝົ້າຊານດັ່ງ ບິດກອນຂຽນວ່າ

ໃຫ້ນຶ່ງອຶດສາລ້ຽງ ທຳພຽນປ້ອນມ່ານ ເອົາຖ້ອນ

ເຖິງວ່າໂສມຮູບຮ້າຍ ກໍແພງໄວ້ເຝົ້າເຮືອນ ນັ້ນຖ້ອນ

ນັບແຕ່ນາງຫລ້ານ້ອຍກັບຜົວ ໄດ້ອຶດສາລ້ຽງລູກກໍເປັນເວລາ ໄດ້ຫລາຍເດືອນຈົນຮອດຂວບພໍປາກຕ່ານຈາລະຈາໄດ້ແລ້ວ ແຕ່ປະກົດວ່າລູກຊາຍບໍ່ຍອມປາກຍອມເວົ້ານຳໃຜໝົດເບິ່ງຄືຈັ່ງຊິເປັນ ປາກກືກປາກຕັນຈັ່ງຊັ້ນແຫລະ. ອາການດັ່ງກ່າວຍິ່ງເຮັດໃຫ້ນາງ ຫລ້ານ້ອຍຜູ້ເປັນແມ່ມີຄວາມຄຽດຂຶ້ນເຕີມ ທັງພ່ອງຈົ່ມວ່າ ຕົ້ງຫາກ ເສຍແຮງລ້ຽງມັນມາລ້າງ ມັນບໍ່ຍອມປາກຍອມຈາຫລືແມ່ນແຕ່ຈະຫົວໃສ່ໜ້າກໍບໍ່ເຄີຍມີ, ນາງຫລ້ານ້ອຍຈຶ່ງເວົ້າກັບຜົວອີກວ່າ ເອົາໄປ ຖິ້ມເບາະລ້ຽງໄວ້ມັນກໍປາກບໍ່ເປັນ ຊິອາໄສວ່າບາດມັນໃຫຍ່ໃຫ້ ເຝົ້າເຮືອນເຝົ້າຊານກໍບໍ່ໄດ້ເລື່ອງດອກແນວວ່າປາກບໍ່ເປັນບາດໂຈນມາປຸ້ນມາລັກມັນກໍຊິນັ່ງມືນຕາເບິ່ງຊື່ໆຫັ້ນແຫລະ, ຜູ້ຜົວໄດ້ຍິນຈຶ່ງຮ້າຍໃຫ້ນາງຫລ້ານ້ອຍວ່າ ເປັນຫຍັງມຶງເວົ້າລຳໄລແຕ່ຄວາມເກົ່າ ແທ້ອອກປາກຄຳໜຶ່ງສອງຄຳກໍວ່າແຕ່ເອົາໄປຖິ້ມຍັງວ່າລູກເກີດ ຈາກອູທອນກ້ອນເລືອດແທ້ໆ ບໍ່ແມ່ນໝູແມ່ນໝາເປັນຫຍັງຈຶ່ງຊິເອົາໄປຖິ້ມແຕ່ໝູໝາເພິ່ນຍັງລ້ຽງຫັ້ນດາ. ອັນນຶ່ງຫາກແມ່ນລູກຂອງໂຕ

ແຫ້ງເພິ່ນວ່າຮ້າຍໂຕກໍຍັງວ່າດີ ແນວວ່າເຮົາບໍ່ໄດ້ໄປລັກໄປ ເກັບເອົາລູກໃຜມາລ້ຽງນ໋່າ.

ຝ່າຍນາງຫລ້ານ້ອຍເມືອຖືກຜົວຮ້າຍດ່າຄືແນວນັ້ນກໍບໍ່ປາກບໍ່ ກ້າຖຽງຈຶ່ງອົດສາພະຍາຍາມລ້ຽງຕື່ໄປຈົນວ່າທ້າວໃຫ່ຍໄດ້ ໓ ປີ ຫັດທ່ຽງຈຶ່ງຫັດຍ່າງໄປງມາງ ແຕ່ເດັດຂາດທ້າວບໍ່ຍອມປາກຍອມ ຫົວກັບໃຜໝົດດັ່ງບົດກອນຂຽນວ່າ

ທ້າວກໍບໍ່ປາກຕ້ານ　　ຈາຖິ່ນກໍໃຜ
ຫົວກໍບໍ່ຫົວຫຍັງໝົດ　　ຢູ່ເສີຍດາຍລ້າ
ແມ່ກໍແຈນງແທ້　　ຫຽວຖາມຊູ່ເຊົ້າຄໍ່າ ແລງນັ້ນ
ເຈົ້າກໍບໍ່ປາກຕ້ານ　　ພໍສ້ຽວຖ່ອງຄວາມ
ບຸນບໍ່ສົມປາກເວົ້າ　　ບາດານສະຫວັດຢູ່
ເມືອຈັກໄຂປາກຕ້ານ　　ມັນຊິຮ້ອນໄພ່ເມືອງ
ແຕ໊ນແມ່ແຈ່ມເຈົ້າ　　ເທິງຊັງບັງບຽດ
ກູກໍຖາມຊູ໊　　ນຶ່ງຊ້ຳບໍ່ປາກນໍາ ແທ້ນໍ
ຕັ້ງວ່າເສີຍແຮງລ້ຽງ　　ນຶ່ງມາດາຍດອກ
ອົດພໍມັນປາກເວົ້າ　　ພໍໃຫ້ອຸ່ນໃຈ ແດ່ແມ
ກູກໍບໍ່ຫ່ອນຮູ້　　ແລ້ວເລົ້ານາເຫັນ ດັ່ງນີ້
ຄືນດໍາເປັນຄືນມືນ　　ປາກບໍ່ເປັນສົບນີ້
ກູກໍຊັງໂສມໜ້າ　　ຫູຕາບັກຄືນຖ່ອຍ ຫລາຍເດ
ແມ່ນວ່າລ້ຽງໃຫ່ຍໄວ້　　ເມືອໜ້າກໍບໍ່ດີ ດອກນາ
ກູກໍຫລຽວເຫັນໜ້າ　　ຄືໃຈກູຊິຂາດ ຊັງເດ

ກູຊິເອົາມຶງໄປໄຫລລ່ອງນ້ຳ        ດີແທ້ກ່ວາຍັງ ແທ້ໃດ

ວ່າແລ້ວນາງຫລ້ານ້ອຍກໍ່ຄວາຈັບແຂນຂອງທ້າວດຶງລາກແກ່ ໄປ ຜູ້ເປັນຜົວຈິງຟ້າວຍາດເອົາໄວ້ ທັງເວົ້າກັບເມຍວ່າ ກູວ່າມຶງເວົ້າຫລິ້ນມຶງໂລດເຮັດອິຫລີ ຜົວຈິງເອົາຝາມືຟາດກົກຫູຫມົດແຮງເຮັດໃຫ້ນາງຫລ້ານ້ອຍວາງແຂນຂອງລູກ, ນາງຫລ້ານ້ອຍຄຽດໃຫ້ຜົວຈິງຮ້ອງໄຫ້ທັງດາທັ້ງປ້ອຍທັງທຶບເຮືອນຊານຮ້າຍໃຫ້ຜົວວ່າເຈົ້າຊິ ໜີໄປຕາຍທາງໃດກໍໄປໂລດແຕ່ໃຫ້ເອົາລູກໄປຢູ່ນຳພ້ອມ ແຍກກັນ ຢູ່ເຮືອນໃຜເຮືອນມັນດີກ່ວາ ຜົວຕາຍໆຈັ່ງຊິຫາເອົາຍານໃດກໍໄດ້ ບໍ່ອຶດບໍ່ຢາກດອກ. ຜູ້ເປັນຜົວໄດ້ຍິນຄຳຫມິ່ນປະຫມາດຂອງເມຍ ກໍເອົາຝາມືຕົບກົກຫູຂອງເມຍຕື່ມອີກພ້ອມທັງເອົາຕີນຖີບຈົນນາງຫລ້ານ້ອຍຫົວປັກຫົວຂວ້າແລ່ນຂຶ້ນເມືອເທິງເຮືອນສົ່ງສຽງໄຫ້ດັງລັບບ້ານ

ຝູງຊາວບ້ານໄດ້ຍິນສຽງຮ້ອງໄຫ້ຂອງນາງຫລ້ານ້ອຍໃຜໆກໍຟ້າວແລ່ນຫຸ້ມມາເບິ່ງທັງພ່ອງເວົ້າວ່າ ພວກຕູຕົກໃຈຫມົດຄຶດວ່າມີຜູ້ຮ້າຍຊາຍໂຈນມາປຸ້ນເອົາເຂົ້າຂອງເງິນຄຳ ທີ່ແທ້ພັດແມ່ນຜົວຕີມຶງນໍ ອີຫລ້ານ້ອຍ, ດັ່ງນັ້ນຊາວບ້ານຈິງໄດ້ພາກັນຊັກໃຊ້ໄຕ່ຖາມຜູ້ເປັນ ຜົວວ່າເປັນຫຍັງສູເຈົ້າຈິງຂ້າຈິງຕີກັນຈົນມັນບ້ານມັນເມືອງ ຜູ້ເປັນຜົວຈິງບອກຄວາມຈິງສູ່ຊາວບ້ານຟັງວ່າ ໂຢ່ວ..ຊິບໍ່ໃຫ້ຕີເຮັດ ແນວໃດແນວວ່າມັນຊິເອົາລູກໄປຖົ້ມໄຫລລ່ອງນ້ຳ ມັນລາກແກ່ລູກ ລົງເຮືອນຂ້ອຍຈິງເອົາຝ່າມືຟາດກົກຫູຂອງມັນ ແລ້ວມັນກໍພາໂລໄຫ້ຈົນຟົດບ້ານມັນເມືອງ. ພວກພີ່ນ້ອງຊາວບ້ານໃຜໆກໍພ້ອມທາງຝ່າຍຜົວຫມົດແລະເວົ້າວ່າຈະຂີ້ຮ້າຍທ້າຍປແນວໃດກໍຍັງແມ່ນລູກບໍ່ຫ່ອນ ຊິ

ເອົາໄປຖິ້ມ ເປັນຫຍັງອີຫລ້ານ້ອຍມັນຈິ່ງມີໃຈໂຫດຫ້ຽມຊິເອົາ ຄົນໄປຖິ້ມແບບງ່າຍໆແທ້, ແນວໃດກໍໄດ້ພາກັນລ້ຽງມາພາໃຫຍ່ປານ ນີ້ແລ້ວ ແມ່ນເພິ່ນຊິວ່າຮ້າຍໂຕກໍຕ້ອງວ່າດີ ຖືວ່າເປັນຜູ້ມີບຸນແທ້ ໃດຈິ່ງຄ່ອຍໄດ້ລູກຊາຍມາສືບເຊື້ອແທນແນວດີຈັ່ງຊີ້.

ຫລັງຈາກພວກຊາວບ້ານເລີກໜີເມືອໝົດແລ້ວກໍຍັງແຕ່ຄູ່ ຜົວເມຍນັ່ງຖຽງກັນຢູ່ບໍ່ເລີກບໍ່ແລ້ວ, ເພື່ອບໍ່ຊາຄວາມຍາກຜົວຈິ່ງໂອມເອົາລູກໄປປ້ອນເຂົ້າປ້ອນນ້ຳແລ້ວກໍເອົາລູກໄປເຂົ້ານອນ. ຝ່າຍນາງຫລ້ານ້ອຍຜູ້ເປັນແມ່ກໍເຂົ້ານອນຄືກັນ ພໍແຕ່ທ້າວຮູ້ວ່າແມ່ ນອນຫລັບແລ້ວທ້າວຈຶ່ງເວົ້ານຳພໍ່ ໂດຍຂໍຮ້ອງໃຫ້ພໍ່ອົດສາລ້ຽງທ້າວເອົາໄວ້ດັ່ງບົດກອນຂຽນວ່າ

ພໍເມື່ອເດິກໆແລ້ວ ເຫັນແມ່ນອນຫລັບ
ບາຈຶ່ງໄຂຄຳຈາ ຕໍ່ພໍ່ຕົນຈີ້ຈອຍ
ພໍ່ເອີຍເຈົ້າຈຶ່ງລ້ຽງຂ້ອຍໄວ້ ບຸນຫລາຍຫລອນໄດ້ເພິ່ງ ບໍ່ຮູ້
ອັນວ່າຄຸນພໍ່ນີ້ລືນລົ້ນ ເມື່ອໜ້າຂ້ອຍບໍ່ລືມ ດອກນາ
ອັນວ່າແມ່ຜູ້ນັ້ນ ເຈົ້າຢ່າໝາຍເອົາ
ພໍ່ຈົ່ງໄລມັນເສຍ ຢ່າເອົາມາຊ້ອນ
ຂ້ອຍນີ້ຍົດຕ່ຳຕ້ອຍ ບຸນໄປ່ພໍ່ເຖິງ ເທື່ອນັ້ນ
ຂ້ອຍຈັກເອົາເມຍມາ ໃຫ້ພໍ່ຊົມພໍ່ຮ້ອຍ
ທີ່ວ່າວາດສະໜານ້ອຍ ຍັງໄກໜ້ອຍໜຶ່ງ ພໍ່ເອີຍ
ເຈົ້າຫາກຢ່າໄດ້ຮ້ອນ ນຳຂ້ອຍເຍື່ອງໃດ ພໍ່ເອີຍ

ທ້າວໄດ້ບອກໃຫ້ພໍ່ໄດ້ຮູ້ຕື່ມວ່າແມ່ຜູ້ນັ້ນແຕ່ຊາດກ່ອນເປັນເສືອສ່ວນ

ທ້າວໄດ້ເປັນລູກເສືອໃນປາງນັ້ນ. ທ້າວໄດ້ເວົ້ານຳພໍ່ຢ່າງ ເດັດຂາດວ່າໃຫ້ພໍ່ປ່ອຍປະໃຫ້ທ້າວເປັນໄປຕາມກຳເວນໂລດຢ່າ ໄດ້ຫວງໄດ້ຫ້າມແມ່ຈະເຮັດຈະທຳແນວໃດກໍ່ປ່ອຍຕາມໃຈໂລດເອົາແຕ່ບຸນແຕ່ກຳຂອງລູກເອງບາງເທື່ອໄປທາງໜ້າອາດຈະຮຸ່ງເຮືອງ ກໍ່ເປັນໄດ້. ຝ່າຍຜູ້ເປັນພໍ່ໄດ້ຍິນຄຳເວົ້າທີລູກໄດ້ເວົ້ານຳເປັນ ເທື່ອທຳອິດກໍມີຄວາມດີໃຈຫາອັນປຽບບໍ່ໄດ້ ປານວ່າມີເງິນຄຳເປັນແສນເປັນຕື້.

ຫລັງຈາກພໍ່ລູກລົມກັນໝົດແລ້ວກໍພໍດີແສງຕາເວັນພົ້ນຂອບ ຟ້າອອກມາເປັນມື້ໃໝ່ພໍ່ຈຶ່ງລຸກສ່ວາຍໜ້າດັງໄຟ ບຶດໜຶ່ງທ້າວກໍ ລຸກອອກມາຫາພໍ່. ພໍແຕ່ນາງຫລ້ານ້ອຍຕື່ນນອນພົວກໍເວົ້າສູ່ຟັງວ່າ ຄືນນີ້ລູກເຮົາປາກເວົ້ານຳຂ້ອຍແລ້ວໃດ ດັ່ງນັ້ນນາງຫລ້ານ້ອຍຈຶ່ງ ໄຕ່ຖາມແລະຍົວະອອຍໃຫ້ທ້າວປາກນຳ ທັງເອົາມືຕ້ອຍແກ້ມຕ້ອຍຄາງຢາກໃຫ້ທ້າວປາກນຳ ແຕ່ວ່າເຮັດແນວໃດກໍແລ້ວທ້າວບໍ່ຍອມ ປາກຍອມຈາກັບແມ່ເດັດຂາດດັ່ງບົດກອນຂຽນວ່າ

ແຕ່ນັ້ນແມ່ກໍອອຍຖາມແທ້ ມີຄຳອັນມ່ວນ
ມີເລົ່າເຕາະຕ່ອຍແກ້ມ ບາທ້າວກໍບໍ່ຈາ
ແມ່ກໍວຽນໆອ້ອມ ອອຍຖາມຫລາຍເທື່ອ
ແຕ່ວ່າບາບ່າວທ້າວ ບໍ່ຍອມຕ້ານປາກຄອມ.

ເມື່ອຜູ້ເປັນແມ່ຍົວະແນວໃດອອຍແນວໃດທ້າວກໍບໍ່ຍອມປາກ ນຳຈຶ່ງຮ້າຍຝຶດຮ້າຍຝາດທັງຄຽດໃຫ້ທ້າວແລະເວົ້າວ່າກູຊິເອົາມຶງ ໄປໄຫລລ່ອງນ້ຳມູນແທ້ລະ.



# ໒: ບັ້ນນາງຫລ້ານ້ອຍ
## ເອົາທ້າວໃສ່ແພໄຫລໄປຕາມແມ່ນໍ້າ

ນັ້ນນາງຫລ້ານ້ອຍຜູ້ເປັນແມ່ຄຽດໃຫ້ທ້າວວ່າຖາມແນວໃດ ກໍບໍ່ຍອມປາກນຳ. ດັ່ງນັ້ນ ມັນຈິງສິທຽນໄດ້ເຕັມກຳແລ້ວກໍພາຍ ກະຕ່າຟ້າວອອກຈາກເຮືອນມຸ່ງໜ້າໄປສູ່ເຮືອນໝໍມໍຜູ້ທີ່ເຄີຍ ຫວາຍແມ່ນຢາ ພໍແຕ່ໄປຮອດໝໍມໍນາງຫລ້ານ້ອຍກໍບອກຈຸດປະສົງໃຫ້ ໝໍມໍຮູ້ວ່າ ມັນມີລູກຊາຍຄົນໜຶ່ງສີເນື້ອດຳຄືມິມ ດຽວນີ້ອາຍຸໄດ້ 3 ປີແລ້ວແຕ່ຫາກປາກບໍ່ເປັນ, ຮູບຮ່າງໜ້າຕາກໍບໍ່ຄືຄົນຈັກດີ້ ຄືຜີ ຕາຍຊາກສົບຄືກັບຊະນີຢູ່ປາຍໄມ້ ລ້ຽງມາໄດ້ 3 ປີຈົນຍ່າງແລ້ວແຕ່ມັນບໍ່ຍອມປາກຍອມຫົວນຳໃຜໝົດ; ສະນັ້ນຈຶ່ງຂໍໃຫ້ໝໍໄດ້ທຳ ນາຍທາຍທັກເບິ່ງວ່າມັນຊິດີຊິຮ້າຍຄືແນວໃດຕໍ່ໄປທາງໜ້ານັ້ນ, ດັ່ງ ນັ້ນໝໍມໍຈຶ່ງບາຍເອົາສໍມາຂີດລົງກະດານຕາມລຶກວັນເດືອນປີຂອງທ້າວເກີດຈຶ່ງຮູ້ວ່າທ້າວແມ່ນລູກຂອງພະອິນລົງມາເກີດ.

ເມື່ອໝໍມໍຮູ້ຄືແນວນັ້ນແທນທີ່ຈະບອກຄວາມຈິງໃຫ້ນາງຫລ້ານ້ອຍໄດ້ຮູ້ ແຕ່ມັນພັດຄິດໄດ້ວ່າຖ້າບອກຄວາມຈິງໃຫ້ນາງຫລ້ານ້ອຍ ຮູ້ແລ້ວອິດສາລ້ຽງທ້າວຕໍ່ໄປ ຖ້າທ້າວໃຫຍ່ຂຶ້ນມາຢ້ານວ່າຈະໄດ້ເປັນໃຫຍ່ເປັນໂຕກວ່າມັນ, ດັ່ງນັ້ນໝໍຈຶ່ງບອກກັບນາງຫລ້ານ້ອຍວ່າລູກຂອງມຶງເກີດວັນແຂງເດືອນແຂງໂພດບໍ່ດີ ເປັນຄົນເຂັດຂວາງ ຈັ່ງໄຣ ໃຫ້ມຶງເອົາໄປໄຫລລ່ອງນ້ຳເສຍຢ່າ ໄດ້ລ້ຽງເອົາໄວ້ຕໍ່ໄປເດີ ບົດກອນຂຽນວ່າ

ເມື່ອຈັກທວາຍກ່າວໃຫ້ . ຄຳດລັຽງຕໍ່ ໄປນັ້ນ
ຢ້ານວ່າບຽນໄພ່ນ້ອຍ ຊິເປັນເຈົ້າແຫ່ງກູ ບໍ່ຢ້ຳແລ້ວ
ໝໍຈຶ່ງທວາຍຄຳຮ້າຍ . ຄຳດີອຳເຊື່ອງ ເອົາໄວ້
ມັນວ່າລູກອ່ອນນ້ອຍ ຂວາງແຫ້ຢ່າຫລອນ ລ້ຽງດີ
ໝໍວ່າລູກນ້ອຍເຈົ້າ ຫາກເກີດວັນແຂງ
ເດືອນໜີກເພັງວັນຄານ ລຶກບີນຄີນຮ້າຍ
ອັ໊ນນຄີນຂວາງແຫ້ ຢ່າຫລອນລ້ຽງຕໍ່
ໃຫ້ມຶງເອົາໄປໄຫລລ່ອງນ້ຳ ຢ່າລ້ຽງຕໍ່ໄປ
ຄືນວ່າມຶງເອົາໄວ້ ຊິຂວາງຕາຍໝົດໝູ່
ອີນວ່າຝູງພີ່ນ້ອງ ຊິຕາຍແທ້ຄອບມັນ ແທ້ໃດ

ການທຳນາຍຂອງໝໍກໍບອກພຽງຜົວເມັຍ ເທົ່ານັ້ນບໍ່ກ້າບອກຄັກແນ່ ລະອຽດລະອໍໄດ້ ເພາະຮູ້ວ່າທ້າວແມ່ນຄົນດີ ຖ້າຊິເວົ້າໄປ ຫລາຍ ຫວາຍໄປຫລາຍກໍຢ້ານວ່າບາດພາຍລຸນມາໂຕເອງຊິຢູ່ຍາກ. ຝ່າຍ ນາງຫລ້ານ້ອຍໄດ້ຍິນຄຳໝໍເວົ້າຄືແນວນັ້ນກໍຟ້າວລາໝໍກັບຄືນເມືອ ຫາລູກ ແລະ ໄດ້ເວົ້າຕໍ່ຜົວວ່າບັດນີ້ຂ້ອຍກໍໄປເຖິງເຈົ້າໝໍ ທວາຍ ດວສ່ຽງມາແລ້ວໝໍວ່າຄືນຂຮ້າຍຂວາງບ້ານຢ່າເອົາ ມັນຍັງ ເວົ້າ ຕື່ມວ່າຖ້າເອົາລ້ຽງຕໍ່ໄປແມ່ນຕາຍຈິບຫາຍວາຍວອດຍ້ອນມັນ ໂລດ ແຫລະ, ຜູ້ເປັນຜົວໄດ້ຟັງເມຍເວົ້າແນວນັ້ນກໍກິນບໍ່ເຂົ້າຄາຍບໍ່ອອກ ຄົນຊິຂັດຊິຂວາງເອົາໄວ້ກໍບໍ່ມີປະໂຫຍດຫຍັງເພາະຮູ້ດີວ່າເມຍເປັນ ຄົນຖ່ອຍຊ້າສາມານ ແລະອີກອັນໜຶ່ງກໍຄິດເຖິງຄຳທີ່ທ້າວໄດ້ ເວົ້າ ນຳວ່າ ໃຫ້ປ່ອຍທ້າວໄປຕາມກຳຕາມເວນເສຍກ່ອນ, ຜູ້ເປັນ ຜົວ

ຍັງບໍ່ທັນ ໄດ້ເວົ້າຫຍັງຜູ້ເມຍກໍກູລີກູຈໍດຶງລາກທ້າວແລ່ນ ໄປສູ່ທ່າ ນ້ຳ ພົວຈຶ່ງແລ່ນຕິດຕາມ ໄປ ພໍເຖິງແຄມນ້ຳຜູ້ເມຍກໍກຽມຈະຊຸກທ້າວໃຫ້ ຕາຍ ໄຫລນ້ຳໄປເລີຍໂລດ, ຜູ້ພົວເຫັນແນວນັ້ນຈຶ່ງຍົກຕີນທຳ ເມຍ ຈົນເຊ ໄປ ພ້ອມທັງເວົ້າວ່າ ຄົນນຶ່ງຊິເອົາ ໄຫລນ້ຳແຫ້ງນຶ່ງກໍ່ ໄປ ຊອກເອົາ ໄມ້ມາເຮັດແພກ່ອນດູ ດັ່ງບົດກອນຂຽນວ່າ

ແຕ່ນັ້ນເມຍກໍປະ ຕິປະຕາຟ້າວ ໄປຫາເຣວຣິບ
ມັນກໍ ໄດ້ທ່ອນກ້ວຍ ສອງຕົ້ນຣິບມາ
ກັບທັງຫລົວ 3 ໂຄ້ນ ເອົາຜູກເປັນແພ
ພົວກໍຄາຕົກ ແຕ່ງແພເລີຍແລ້ວ
ພໍ່ຈຶ່ງໂຊມເອົາທ້າວ ປາຄານເຂົ້າໃສ່ ແພນັ້ນ
ນ້ຳຕາພໍ່ ໄຫລຫລັ່ງຍ້ອຍ ຣຳແກ້ມຍ່າວຍືນ

ພໍແຕ່ພໍ່ໂຊມໃສ່ແພແລ້ວທ້າວກໍນັ່ງຕອັດປອັດຢູ່ເທິງກາງແພ ຝູງພີ່ນ້ອງຊາວບ້ານໃພງກໍແນມເບິ່ງທ້າວດ້ວຍຄວາມສົນໃຈຕໍ່ການ ກະທຳຂອງນາງຫລ້ານ້ອຍ, ຜູ້ເປັນພໍ່ ໄດ້ເອົາເຂົ້າປາອາຫານໃສ່ ໄວ້ ໃນແພເພື່ອໃຫ້ທ້າວ ໄດ້ກິນເວລາລ່ອງ ໄປຕາມແພ ພໍ່ ໄດ້ແຂງໃຈສົ່ງ ທ້າວດ້ວຍຄວາມອາ ໄລອາວອນ ດັ່ງບົດກອນຂຽນວ່າ

ຫລອນວ່າບຸນມີເຈົ້າ ໄປເຖິງສະຖິດແຫ່ນ ໃສນັ້ນ
ລູກແຈ່ມເຈົ້າ ຄະນຶງ ໄຫ້ພໍ່ຕົນ ແດ່ເດີ
ຄືນ ໄດ້ສຸກຢູ່ສ້າງ ສະຫວິຍລາດກິນເມືອງ
ໃຫ້ຄະນຶງປິຕາ ພໍ່ຕົນທາງພີ້
ຢ່າ ໄດ້ມີໃຈເວັ້ນ ວາງຄຳພໍ່ສັ່ງ

ພໍ່ຢູ່ບ້ານ          ຄອງເຈົ້າຈື່ມຫາ ແທ້ແລ້ວ

ສັ່ງລູກແລ້ວພໍ່ກໍຍິ້ມກົ້ມຂາບ ໄຫວ້ວອນເຖິງເທບພະອິນໃຫ້ມາເບິ່ງ ມາແຍງທ້າວ, ພໍແຕ່ພໍ່ລູກສັ່ງກັນແລ້ວນາງຫລ້ານ້ອຍກໍຟ້າວຊຸກ ແພ ອອກຈາກຝັ່ງທັງຮ້າຍພິດຮ້າຍຟາດ ຝ່າຍຜົວກໍຄວາຈັບແພຈ່ອງເອົາ ໄວ້ທາງຝ່າຍເມຍກໍຍາດອອກເປັນສິບລະວົນ ຜົວໃຈຮ້າຍຈຶ່ງຈັບໄມ້ ຄ້ອນຟາດຫົວເມຍບາດໜຶ່ງເມຍກໍໄຫ້ທັງປ້ອຍທັງດ່າ ຍາດກັນ ໄປ ກັນມາໃນທີ່ສຸດແພຂອງທ້າວກໍຖືກປ່ອຍໃຫ້ໄຫລໄປຕາມນ້ຳ. ແຕ່ວ່າ ແພຂອງທ້າວບໍ່ໄດ້ໄຫລລ່ອງໄປຕາມກະແສນ້ຳໄຫລ ແພໄດ້ໄຫລຂຶ້ນ ໄປທາງເໜືອໄວ່ງພໍ່ໄດ້ແນມນຳແພຂອງທ້າວຈົນສຸດຊື່ວສາຍຕາແຕ່ ແນມແນວໃດກໍບໍ່ເຫັນທ້າວ ເຫັນແຕ່ໂຂຟອງຖ້ວນແພຂອງທ້າວພົ້ນ ໄດ້ຮ້ອງໄຫ້ຮ່ຳໄຮນຳທ້າວເປັນທີ່ໜ້າເວທະນາສັງສານ, ທັງຈື່ມທຸກ ຈື່ມຍາກນຳທ້າວວ່າ ພໍ່ກໍຫວັງວ່າຈະໄດ້ເຈົ້າມາສືບໜໍ່ແທນແນວລູກ ເອີຍເຫລືອແຮງພໍ່ໄດ້ວິງວອນຂໍເຈົ້າມາເກີດນຳ ແຕ່ແລ້ວເວນກຳ ໄດ້ນຳມາສະໜອງເຈົ້າເຮັດໃຫ້ເຈົ້າໄດ້ພັດພາກຈາກພໍ່ໄປ; ສ່ວນ ຊາວບ້ານໃພງກໍພາກັນຢືນງອຍຕາຝັ່ງແນມນຳແພຂອງທ້າວຈົນ ວ່າ ແພນັ້ນລັບໄປຈາກສາຍຕາຈຶ່ງພາກັນກັບເມືອເຮືອນ.

ຜູ້ເປັນພໍ່ນັ້ນຄິດຮອດຫາລູກຫລາຍ ເວລາຍ່າງກັບຄືນເຮືອນ ນັ້ນ ຈົນເປັນລົມລົ້ມລົງກາງທາງຊາວບ້ານຕ້ອງໄດ້ຊ່ອຍກັນໂຊມ ເອົາ ເມືອສົ່ງຮອດເຮືອນ ພໍແຕ່ແນມເຫັນໜ້າເມຍກໍທັງປ້ອຍທັງດ່າເມຍ ສາລະພັດຢ່າງ. ໃນທີ່ສຸດຜົວເມຍຄູ່ນັ້ນກໍບໍ່ສາມາດຈະຢູ່ຮ່ວມກັນ ໄດ້ ຜູ້ຜົວເປີດໜ່າຍເມຍແຮງຫລາຍຈຶ່ງຂົນເຄື່ອງຂອງໜີເມືອຢູ່ນຳແມ່

ທັງພ່ອງຈື່ມໃຫ້ນາງຫລ້ານ້ອຍຫລາຍສິ່ງຫລາຍປະການ ດັ່ງບົດກອນ
ຂຽນວ່າ

ກູບໍ່ເສຍດາຍແລ້ວ ສານານອິດິນຖ່ອຍ
ລູກມຶງອອກຈາກທ້ອງ ກໍໄຫລນ້ຳລ່ອງເສຍ ນໍ້ເດ
ທັງຫລາຍເພິ່ນຫາກມີລູກນ້ອຍ ຮັກຍິ່ງສະເໜີໃຈ
ອັນມຶງມາເອົາບຸດຕົນ ລ່ອງໄຫລໄລຖິ້ມ
ສິ່ງບໍ່ ປານລ້ຽງ ບາດານໃຫ້ໃຫ່ຍ
ສິ່ງວ່າໄລລູກຖິ້ມ ໄຫລນ້ຳລ່ອງໜີ ນໍ້ເດ

ຍ້ອນກ່າວເຖິງທ້າວທີໄຫລໄປຕາມແພ ກະແສຟອງໄດ້ ຍວາກຍູ້ແພທ້າວໄປເລື້ອຍໆ ນັບເປັນເວລາໄດ້ 7 ມື້ 7 ຄືນ ແພຈຶ່ງໄຫລໄປຈອດຄ້າງຢູ່ຫາດຊາຍກາງນ້ຳແຫ່ງໜຶ່ງ, ທ້າວໄດ້ຄ້າງຢູ່ ຫາດຊາຍກາງນ້ຳໄດ້ຫລາຍມື້ຫລາຍຄືນເຮັດໃຫ້ທ້າວອຶດຫິວ ແຕ່ລະ ມື້ກໍນັ່ງຢູ່ດອນຫາດຊາຍນັ້ນພໍສວາຍມາແດດຮ້ອນກໍລົງອາບນ້ຳຫລິ້ນ ຜູ້ດຽວ, ທ້າວໄດ້ຕົກຄ້າງຢູ່ດອນຫາດຊາຍກາງນ້ຳນັບເປັນເວ ລາໄດ້ 3 ເດືອນພິດເຂົ້າປາອາຫານກໍໝົດ ເຮັດໃຫ້ທ້າວອຶດຫິວ ທົນທຸກທໍລະມານຢູ່ຜູ້ດຽວບໍ່ມີໃຜຫລຽວແລທ້າວເລີຍ.

## ໓: ບັ້ນພະອິນໃຫ້ກາດຳລົງມາເອົາ
## ທ້າວອອກຈາກດອນຊາຍ

ກ່າວເຖິງພະຍາອິນຜູ້ເປັນພໍ່ ທີ່ໄດ້ສົ່ງໃຫ້ທ້າວລົງມາ ເກີດໃນເມືອງມະນຸດ, ນັ້ນພະອິນ ໄດ້ຫລິງຫາທ້າວ ໄປຫລາຍບ່ອນບໍ່ຮູ້ ວ່າທ້າວເທດອິນທະຄີຜູ້ເປັນລູກຊາຍຕົກ ໄປຢູ່ແຫ່ງຫົນໃດ, ພະອິນ ໄດ້ຫລິງລົງມາສູ່ພົບໂລກມະນຸດຈຶ່ງ ໄດ້ເຫັນທ້າວເທດອິນທະຄີລູກ ຊາຍຂອງຕົນຕົກຄ້າງຢູ່ທີ່ຫາດຊາຍກາງນ້ຳພວມປະເຊີນກັບຄວາມ ທຸກຍາກລຳບາກຫລາຍ; ເມື່ອຫລິງເຫັນດີແນວນັ້ນພະອິນຈຶ່ງສັ່ງ ໃຫ້ທ້າວກາດຳເຂົ້າໄປຫາດ່ວນແລ້ວແຈ້ງຈຸດປະສົງໃຫ້ທ້າວກາດຳ ໄດ້ຮູ້ວ່າ ດຽວນີ້ທ້າວເທດອິນທະຄີຜູ້ນ້ອງພວມຕົກລະກຳລຳບາກ ຍາກເຂັນຄ້າງຢູ່ຫາດຊາຍກາງນ້ຳຈະ ໄປຈະມາທາງໃດກໍບໍ່ໄດ້, ພະ ອິນສັ່ງໃຫ້ທ້າວກາດຳລົງ ໄປຊ່ອຍເອົາທ້າວອອກຈາກຫາດຊາຍກາງນ້ຳເອົາໄປໄວ້ໃນເມືອງ ແລະບອກວ່າໃຫ້ເຈົ້າແປງໂຕເປັນກາດຳລົງໄປມື້ນີ້ດຽວນີ້ໂລດ ທ້າວກາດຳຈຶ່ງຮັບປາກກັບພໍ່ພະອິນທັນທີດັ່ງ ບົດກອນຂຽນວ່າ

ແຕ່ນັ້ນສິນຄວນໄຫວ້ — ຂານຄຳຕົນພໍ່<br>
ຄັນວ່າມີດັ່ງນັ້ນ — ຕົນນ້ອຍບໍ່ຂືນ ພໍ່ເອີຍ<br>
ແຕ່ນັ້ນກາດຳນ້ອຍ — ຜັນລົງເມືອງລຸ່ມ<br>
ດັ້ນເມກຟ້າຍ — ເຖິງນ້ອຍຍອດຊາຍ<br>
ຄ້ອນວ່າກາເຖິງແລ້ວ — ພາທີຕານກ່າວ

ເຈົ້າຫາກມາຢູ່ຄ້າງ ໃນເຫດໃດ ນັ້ນເດ
ແຕນັ້ນບາຄານທ້າວ ໄຂຄຳບົນບອກ
ຂ້ອຍກໍມາຢູ່ຄ້າງ ໃນພ້ານານ
ຂ້ອຍກໍອຶດຢາກເຂົ້າ ໄດ້ຂວບຫລາຍວັນ ມາແລ້ວ
ຄັນຈັກໄປທາງໃດ ກໍຫາກຄາວ້ຽນນ້ຳ
ແຕນັ້ນໂສມໄວເຈົ້າ ກາດຳຖາມທີ
ເຈົ້າຈັກໄປຢູ່ສ້າງ ເມືອງກ້ວາງແຫ່ງໃດ ນັ້ນເດ

ທ້າວກາດຳຖາມຕື່ມວ່າຫລືຫາກເຈົ້າພໍໃຈຈະຢູ່ໜັ້ນ ເຫັນວ່າ ມີຄວາມສະໜຸກສະບາຍແລ້ວກໍຕາມໃຈ, ແຕນັ້ນທ້າວເທດອິນທະ ຄີ (ບາງບ່ອນວ່າອິນທະຄີ ) ໄດ້ບອກກັບທ້າວກາດຳວ່າເຈົ້າຊິ ເອົາຂ້ອຍໄປສົ່ງຮອດບ້ານຮອດເມືອງແຫ່ງໃດກໍສຸດແລ້ວແຕ່ສຳລັບ ຕົວຂ້ອຍເອງດຽວນບຸນປາລະມີຍັງນ້ອຍຢູ່ບໍ່ສາມາດຈະໄປແຫ່ງໃດ ໄດ້ດ້ວຍຕົນເອງ. ຄັນເຈົ້າຫາກຊິຊ່ອຍເອົາຂ້ອຍໄປສົ່ງໃຫ້ເຖິງຝັ່ງນ້ຳກໍຕາມແຕ່ເຈົ້າຂ້ອຍບໍ່ຂັດບໍ່ຂືນຫຍັງໝົດ; ຂ້ອຍເອງໄດ້ຢູ່ດອນຊາຍກາງນ້ຳນັ້ນໄດ້ 3 ເດືອນແລ້ວອັນນເປັນຍ້ອນເວນກຳຂອງ ຂ້ອຍເອງ.

ຝ່າຍກາດຳໄດ້ຟັງທ້າວເທດອິນທະຄີເວົ້າຄືແນວນັ້ນຈຶ່ງບອກ ວ່າຖ້າຫາກເຈົ້າມີຄວາມປະສົງຢາກໄປແຫ່ງນັ້ນໃຫ້ເຈົ້າຈັບຫາງ ຂອງຂ້ອຍໄວ້ແໜ້ນໆຂ້ອຍຈັກບິນພາເຈົ້າໄປສົ່ງໃຫ້ເຖິງຝັ່ງທາງພຸ້ນເມື່ອໄປເຖິງຝັ່ງແລ້ວນັ້ນສຸດແທ້ແຕ່ເຈົ້າເອງຢາກໄປທາງໃດກໍຕາມ ໃຈເມື່ອເວົ້າເປັນທີ່ເຂົ້າໃຈກັນດີແລ້ວທ້າວອິນທະຄີຈຶ່ງຄວາຈັບຫາງກາ

ດຳເອົາໄວ້ ກາດຳຈຶ່ງບິນພາທ້າວອອກຈາກດອນຊາຍກາງ ບ່ຽງໜ້າໄປສູ່ເຂດເມືອງແຫ່ງໜຶ່ງແລ້ວກໍພາທ້າວລົງພັກເຊົາຢູ່ທີ່ນັ້ນ ແລະກາດຳໄດ້ເວົ້າກັບທ້າວວ່າ ໃຫ້ເຈົ້າອົດຖ້າຂ້ອຍຢູ່ບ່ອນນີ້ຈັກບຶດ ຂ້ອຍຊິໄປຊອກເຂົ້າມາສູ່ກິນ ຫລັງຈາກກິນເຂົ້າເອົາແຮງແລ້ວ ຈຶ່ງຄ່ອຍເດີນທາງຕໍ່. ແຕ່ກາດຳກໍບອກຕື່ມອີກວ່າຖ້າຫາກຂ້ອຍໄປ ດົນນານກັບມານັ້ນ ຄັນເຈົ້າເມື່ອຍຖ້າແລ້ວຢາກໄປກ່ອນກໍໄປໂລດ ເດີ ບໍ່ຕ້ອງຄອງໃຫ້ເສຍເວລາ ແລະໃຫ້ເຈົ້າໄປຕາມທາງນັ້ນເດີ.

ເມື່ອສັ່ງທ້າວເປັນທີ່ຮຽບຮ້ອຍແລ້ວ ກາດຳກໍບິນຫນີໄປທັນທີໂລດ ແທນທີ່ກາດຳຈະໄປຊອກຫາເຂົ້າມາສູ່ທ້າວກິນ ແຕ່ກາດຳພັດບິນກັບຄືນເມືອເມືອງສະຫວັນອັນເປັນທີ່ຢູ່ຂອງມັນ, ເມື່ອໄປເຖິງກໍ ເຂົ້າຂາບທູນໃຫ້ພະອິນຜູ້ເປັນພໍ່ໄດ້ຮູ້ວ່າ ໄດ້ເອົາທ້າວເທດອິນທະຄີໄປສົ່ງຮອດເຂດເມືອງເມຍຂອງທ້າວແລ້ວ.

ພ້ອມດຽວກັນນັ້ນບັນດາເມຍຫລວງຂອງອິນທະຄີທີ່ຢູ່ບົນສະຫວັນ ກໍໄດ້ມາຖາມຂ່າວຫາຜົວ ແລະເວົ້າວ່າທ້າວໄປຄາວນີ້ກໍແມ່ນ ເຫິງນານແທ້ນໍ. ຝ່າຍພະອິນຜູ້ເປັນພໍ່ຜົວໄດ້ຍິນແນວນັ້ນຈຶ່ງຮ້າຍໃຫ້ ລູກໃພ້ວ່າກູຊິໃຫ້ມັນມາຢາມພໍ່ໃຫ້ໄດ້ຢູ່ໄດ້ຊົມຢູ່ດອກຢ່າໂພດຫລາຍ,ຊຸມເມຍຫລວງກໍຢ້ານພາກັນໂຕນຫນີໄປຫາລີ. ຕໍ່ມາຈຶ່ງພາກັນສີ ຫຽນແຕ່ງຂັນໄປຂໍສິນບັດສິນມາພະອິນຜູ້ເປັນພໍ່ຜົວ ທັງກ່າວຂໍຂະມາ ລາໂທດວ່າ ພວກຕົນໄດ້ຫລົງປາກຫລົງຄຳເວົ້າໄປມະລຳມະລອຍຂໍໃຫ້ພະອົງຈົ່ງໂພດພາຍຍົກໂທດໃຫ້ແດ່ຖ້ອນ ຝ່າຍພະອິນກໍໄດ້ອະໂຫ ສີໃຫ້ຊຸ່ນາງ.

ຍ້ອນກ່າວເຖິງທ້າວເທດອິນທະຄື ນັບແຕ່ກາດຳໄດ້ນຳໄປສົ່ງໄວ້ແຄມຝັ່ງໃກ້ຂອດເມືອງແຫ່ງໜຶ່ງແລ້ວ ນັບແຕ່ນັ້ນເປັນຕົ້ນມາຊື່ທ້າວເທດອິນທະຄືກໍເລີຍປ່ຽນມາເປັນຊື່ວ່າ ກາດຳ ຫລືວ່າ ທ້າວກ້ຳກາດຳ. ທ້າວໄດ້ຄອງຊີວິດຢູ່ດົງໃຫຍ່ແຄມນ້ຳແຫ່ງນັ້ນເປັນເວລາ ນານເນື່ອງຄອງແນວໃດກໍບໍ່ເຫັນກາດຳກັບມາຫາ ທ້າວຈຶ່ງຕັດສິນໃຈອອກເດີນທາງຕໍ່ໄປແລະໄປຕາມເສັ້ນທາງທີ່ກາດຳໄດ້ບອກເອົາໄວ້, ພໍແຕ່ອອກເດີນທາງໄປບໍ່ດົນກໍໄປເຖິງດົງໃຫຍ່ອີກແຫ່ງໜຶ່ງໜີ້ໜມາກໄມ້ຂອງກິນນານາຊະນິດ ທັງໄດ້ຍິນສຽງສັດປ່າຮ້ອງເນືອງນັນ ຢູ່ຕາມດົງດິ່ງບົດກອນຂຽນວ່າ

| | |
|---|---|
| ມີທັງຕົບເຕົ້າຕົວ | ຕາວຕາດເປັນຝູງ |
| ຊະນິເນືອງຫລາຍ | ມ່ວນໄພດົງກວ້າງ |
| ມີທັງປີກສີຂອນ | ຮຽງຮົງຂອນຄູ່ |
| ເອົາແຂກຂອນ | ຈີນຊູ່ຈ່າງຄູ່ |
| ສອງຈີນຂ້ອນ | ຂອນກັນເປືອງປີ່ນ |
| ບາບ່າວທ້າວ | ເຫັນແລ້ວຊື່ນຊົມ |
| ບາກໍເດີນແທບເທົ້າ | ເຖິງທີ່ສວນຫລວງ |
| ທີ່ວນອນມີ | ຊູ່ອັນໃນຫັ້ນ |
| ສີບພະສີນພ້ອມ | ນອນມີທຸກສິ່ງ |
| ມີໜູ່ໜ້ຳ | ລຽນຕົ້ນຖືປົ້ນ |
| ມີທັງມ່ວງພ້າວ | ເດຍລະດາດເປັນແຖວ |
| ຢາຍຢັ້ງສຸດ | ຊື່ວຕາຕົ້ນຢຽນ |

ມີທັງເຄືອພູກຽວ ໃບໜາສຸດຍອດ
ອອດຫລອດຕົ້ນ ສູງຄ້ວອະເນກນອງ
ໂສມສະເວເລົາຜູ້ ບຸນມີຫລິງລ່ຳ ດູນັ້ນ
ເຫັນດອກໄມ້ ມີພ້ອມຊູ່ດວງ
ມີທັງດອກໃຫ່ມພ້ອມ ພວງພິສາລະພິ
ຈິຈູມໄຂ ກິ່ນຫອມໂຣຍເຣົ້າ
ບາຄານທ້າວ ສະໜຸກຊົມດວງດອກ
ຊົມດອກນໍ້ດອກນັ້ນ ກະສົນໂອ້ກິ່ນຫອມ ເຈົ້າເອີຍ

ທ້າວກ່ຳກາດຈຳໄດ້ເລາະທ່ຽວຊົມດອກໄມ້ນານາຊະນິດຢູ່ໃນສວນແຫ່ງນັ້ນດ້ວຍຄວາມສະອອນອິກສະອອນໃຈ ທ້າວຄຶດຢູ່ຜູ້ດຽວວ່ານັບແຕ່ຫລັງບ້ານຫລັງເມືອງມາຫາກໍ່ຊິມາພໍ້ບ່ອນດີໃນຄາວນເອງ, ອັນນີ້ຄືຊິແມ່ນຜີສາງເສື້ອເທວະດາຈູງມາໃສ່ຕີເບາະ ຄຶດແລ້ວທ້າວ ກໍເດີນຕໍ່ໄປພໍແຕ່ກາຍໝູ່ຕົ້ນພ້າວກໍໄປເຖິງໝູ່ຕົ້ນກ້ວຍເຊິ່ງມີກ້ວຍທຸກປະເພດມີທັງເຄືອພວມສຸກເຫລືອງບາງເຄືອກໍພວມຕົກຫວີບາງເຄືອກໍສຸກຈົນແຫ້ງທ່ຽວຄາເຄືອ ທ້າວຫລຽວຊ້າຍຫລຽວຂວາຢ້ານວ່າຄົນຊິມາພໍ້ ຖ້າຄົນມາພໍ້ເຂົາຊິວ່າຂີ້ລັກເຂົາຊິຈັບເອົາໄປຖວາຍຕໍ່ພະຍາເມືອງ. ພໍແຕ່ທ້າວຄຶດແລ້ວຕາເວັນກໍມືດຄ່ຳພໍດີ ທ້າວຈຶ່ງເຂົ້າ ໄປອາໄສນອນຢູ່ກ້ອງຕົ້ນຫວາ ຕອນເດິກງມາໄດ້ຍິນສຽງນົກປ່າ ຮ້ອງລະງົມໄປທົ່ວ. ເມື່ອຕາເວັນຂຶ້ນເປັນມື້ໃໝ່ມາເຖິງ ທ້າວກໍ ລຸກເລາະກິນໝາກໄມ້ຢູ່ໃນສວນນັ້ນຕາມໃຈມັກ ກິນອີ່ມແລ້ວກໍຢູ່ ຢ່າງສະບາຍບໍ່ຮ້ອນບໍ່ເຄືອງ ແນວໃດ.

# 4. ບັ້ນຍ່າຈຳສວນທ້າງນ້ອງໃສ່ທ້າວ

ມື້ນັ້ນພໍແຕ່ຕາເວັນຂຶ້ນອ່າວສວາຍແດ່ ຊຸມຊາວສວນກໍຊວນກັນໄປສວນເພື່ອເກັບໝາກໄມ້ຕາມປົກກະຕິທັງໄປຫາໄລ່ສັດປ່າທີ່ມາ ກິນໝາກໄມ້ຢູ່ໃນສວນ, ນັ້ນຍາຍຍ່າເຖົ້າຜູ້ເຝົ້າສວນກໍບອກວ່າຈະໄປເລາະເກັບໝາກໄມ້ນຳພວກເຂົາ. ພໍແຕ່ໄປຮອດສວນຍາຍ ຍ່າເຖົ້າກໍໄລ່ໝູທີ່ມາກິນເຄື່ອງໃນສວນປົບຊ້າຍປົບຂວາ ຊຸມຊາວສວນເຫັນຍ່າເຖົ້າໄລ່ເຂົາກໍໄລ່ນຳຍ່າເຖົ້າເປັນແຊວງ ເມື່ອສັດປ່າ ນັບແຕ່ໝູ, ລີງ, ກະຮອກແລະອື່ນໆ ໄດ້ຍິນສຽງຄົນມັນກໍພາກັນເຕັ້ນໂຕນໜີໄປໝູ່ໃຜໝູ່ມັນ, ສ່ວນວ່າທ້າວກ່ຳກາດຳໄດ້ຍິນສຽງຄົນໄລ່ ສັດແລ່ນມາໃກ້ກໍຈຶ່ງຟ້າວເຂົ້າໄປລີ້ຢູ່ຂ້າງຕົ້ນໄມ້ ພວກເຂົາຈຶ່ງພາ ກັນແລ່ນກາຍທ້າວໄປທາງອື່ນ, ກາຍຫວິດທ້າວໄປແລ້ວເຂົາຈຶ່ງ ໄດ້ເຫັນຮອຍຕີນຂອງທ້າວ ເຂົາຈຶ່ງພາກັນຫ້ວງເປັນແຊວງວ່າຮອຍ ຕີນນ້ອຍໆນັ້ນແມ່ນຮອຍຂອງໃຜ ຊິວ່າຮອຍຕີນຜີຮອຍຕີນຄົນກໍບໍ່ຄື ຄັນວ່າຮອຍຂະໂມຍມາລັກເຄື່ອງໃນສວນສັງມາຮອຍນ້ອຍແທ້ບໍ່ສົມ ຊິເປັນຂະໂມຍ ໄດ້ດັ່ງບົດກອນຂຽນວ່າ

ຄັນວ່າຮອຍຜີແທ້ ຮອຍຄົນກໍບໍ່ໃຊ່
ຄັນວ່າຮອຍຜູ້ຮ້າຍ ກໍດູນ້ອຍບໍ່ສົມ
ເຂົາກໍແຊວງຫ້ວງ ຮອຍບາຊິສວ່າ
ຍາຍຍ່າເຖົ້າ ເຫັນແລ້ວຮ່ຳຄະນິງ
ຍາຍກໍແບກສຽມທ້ຽນ ເອີ້ນຮຽກຫາຫລານ

ເມືອງເຢີ　　　　　ຄ່ຳທາງເຮົາແລ້ວ

ເມື່ອນັ້ນສາວຣາມນ້ອຍ　　ເລີຍເມືອທຸກຫມູ່

ເອົາກໍແຊວຊວ່າຫ້ວງ　　ຣອຍທ້າວຊູ້ຄົນ ເຈົ້າເອີຍ

ພໍແຕ່ຍາຍຍ່າເຖົ້າແລະສາວຊາວສວນ ໄປໝົດແລ້ວທ້າວກໍ ອອກຈາກພຸ່ມໄມ້ມາຢືນສັງເກດພຸ້ມພ້ ເມື່ອຮູ້ວ່າພວກເຂົາເມືອຫມົດຊູ້ຄົນແລ້ວ ທ້າວກໍເວົ້າກັບຕົນເອງວ່າ ຄາວນີ້ກູຊິກິນກ້ວຍໃຫ້ມັນເຕັມອີ່ມສົມໃຈຄິດ. ກູຊິເລີ່ມກິນຕັ້ງແຕ່ເວລານີ້ເປັນຕົ້ນໄປຈົນເຖິງທ່ຣງ ຄືນນັ້ນພຸ້ນແຫລະ, ວ່າແລ້ວທ້າວກໍຂຶ້ນປີດກິນບາງເທື່ອປີດກິນແລ້ວພັດ ຕະລຸດລົງຈົນຫງາຍແງ້ນຖືກກັບດິນແກ່ນເຈັບຫມົດໂຕຊິ ໄຫ້ຊິຫົວກໍບໍ່ເປັນ ທ້າວຈົ່ມວ່າຄັນແມ່ນມີດາບນີ້ວາວຊິຟັນມັນລົງເປັນລ່າວກິນບໍ່ກົ້ນ ກໍຕາມຊ່າງເກີນເຫລືອໃຈໂພດ ພໍຈົ່ມແລ້ວກໍກາຍໄປທາງຫນ້າຜູ້ດຣວເລີຍແນມເຫັນຕົ້ນຫມາກມີ້ ເບິ່ງຫນ່ວຍໃດກໍສຸກສົ່ງກິ່ນຫອມມາ ກວນດັງ ທ້າວກໍອົດບໍ່ໄດ້ຈຶ່ງຍື້ມືດຶງເອົາຫມົດແຮງຈົນກົ້ນທົ່ງລົງຈຳດິນແຕ່ຫນ່ວຍຫມາກມີ້ກໍບໍ່ຫລຸດອອກຈາກຕົ້ນ, ທ້າວອົດສາເອົາສອງຕີນ ຢັນຫມົດແຮງຫມາກມີ້ກໍບໍ່ຍອມຫລົ່ນລົງດິນພໍໃຫ້ໄດ້ກິນຈັກຫນ່ວຍ.

ເມື່ອຫມົດປັນຍາຈະເອົາແລ້ວ, ທ້າວກໍເດີນມຸ່ງຫນ້າຕໍ່ໄປບໍ່ດົນໄດ້ໄປພົບສວນອ້ອຍເບິ່ງລຳໃດກໍທັງໃຫຍ່ທັງງາມ ທ້າວຄິດໃນໃຈວ່າ ບໍ່ໄດ້ກິນຫມາກມີ້ ຄາວນີ້ຕ້ອງກິນອ້ອຍໃຫ້ມັນສົມໃຈຢາກທ້າວຈຶ່ງຄວາມືຫັກລຳອ້ອຍແຕ່ຫັກແນວໃດກໍບໍ່ໄດ້ເຫລືອແຮງທີ່ທ້າວຢາກ, ເມື່ອຫັກສວນນີ້ບໍ່ໄດ້ທ້າວກໍແນມໄປທາງຫນ້າຈຶ່ງເຫັນສວນອ້ອຍຂອງນາງລຸນມີແຕ່ລຳງາມໆເປັນແຖວຊາຍລ້າຍຢູ່ ທ້າວໄດ້ເຫັນແລ້ວກໍຄິດວ່າຈະ

ຫັກລຳອ້ອຍບໍ່ໄດ້ອີກ ແຕ່ທ້າວພັດຄຶດວ່າເປັນແນວໃດກໍຕ້ອງລອງຫັກ ຕື່ມອີກກ່ອນ, ວ່າແລ້ວທ້າວກໍຄວາມືຫັກໝົດແຮງອ້ອຍກໍຫັກທ້າວກໍກິນ ຂີ້ງຈຳກິນຕາມເຄີຍ. ສວນທຳອິດທີ່ທ້າວຫັກອ້ອຍນັ້ນແມ່ນ ສວນ ເອື້ອຍຂອງນາງລຸນ ແຕ່ວ່າສວນທີ່ທ້າວຫັກໄດ້ນີ້ແມ່ນສວນຂອງນາງ ລຸນ ທ້າວຫັກລົງໄດ້ສຸມໃຫ່ຍສຸມໜຶ່ງມາກິນ, ທ້າວນັ່ງກິນຢູ່ນັ້ນ ພັດ ຄຶດຢ້ານເຂົາຈະຈອບມາເຫັນຈຶ່ງດຶງແກ່ເອົາລຳອ້ອຍໜີລອດ ຮົ້ວ ສວນອອກໄປກິນຢູ່ແຄມແຈສວນ ທ້າວຄຶດວ່ານັ່ງກິນຢູ່ບ່ອນນີ້ຄືຈະ ບໍ່ ມີໃຜມາເຫັນດອກ, ທ້າວທັງເມື່ອຍທັງກິນອ້ອຍໄປນຳ ນັ່ງກິນເມື່ອຍ ແລ້ວກໍນອນກິນຢ່າງສະບາຍບໍ່ຢ້ານບໍ່ກົວຫຍັງໝົດພໍກິນອ້ອຍໝົດກໍພໍ ດີຕາເວັນມືດ. ທ້າວຈຶ່ງແປງບ່ອນນອນຢູ່ກັບທັ້ນເລີຍໂລດດັ່ງບົດກອນ ຂຽນວ່າ

ແຕ່ນັ້ນບາບ່າວທ້າວ ປັດທີ່ເນົານອນ
ບາກໍເອົາມືປັດ ຝຸ່ນດິນພໍກ້ຽງ
ແຕ່ນັ້ນກາດຳນ້ອຍ ເນົານອນນິດທະເນັ່ງ
ບາກໍຫລັບຢິບນ້ອຍ ບໍ່ຮູ້ເນື້ອຄີງ ເຈົ້າເອີຍ

ບັດນີ້ກ່າວເຖິງຍາຍຢ່າເຖົ້າຜູ້ຢູ່ຮັກສາສວນ ຄືນນັ້ນຢ່າເຖົ້າ ໄດ້ ນອນຝັນເຫັນ ພິຫູນແກ້ວດຳນິນລູກປະເສີດສະເດັດເຂົ້າຫ້ອງເຮືອນ ນ້ອຍແຫ່ງຕົນ ຢ່າກໍຈັບເອົາແກ້ວນັ້ນມານ້ຽນໄວ້ຢ່າງດີດ້ວຍ ຄວາມ ຖະໜອມຮັກຢ່າເອົາແກ້ວໜ່ວຍນັ້ນໄປເຊື່ອງໄວ້ແຈເຮືອນພາຍລຸນ ມາແກ້ວໜ່ວຍນັ້ນເຮືອງເຮືອໄປທົ່ວໃຜກໍມີຄວາມເກັ່ງຂາມ ຊາວ ບ້ານຊາວເມືອງໃຜກໍຊື່ນຊົມຍິນດອມແກ້ວໜ່ວຍນັ້ນແລະພາກັນຊ່າ

ລີໄປທົ່ວທຸກທິບທຸກແຫ່ງຈົນຮອດຊັ້ນຟ້າສະຫວັນ.

ພ້ອມດຽວກັນຍ່າຈຳສວນຍັງຝັນວ່າຕົນໂຕຂອງຍ່າເອງນີ້ ຮູບຮ່າງຜິວພັນນ້ອຍໜຸ່ມສົດໃສປານວ່າສາວຂຶ້ນໃໝ່ ອາຍຸ 16 -17 ປີ ແລະຝັນວ່າໄດ້ຂີ່ຊ້າງແກ້ວຕົວອາດສູນເມືອງມີທັງສາວສະ ໜົມກົມມະວັງແຫ່ນຳນັບເປັນຮ້ອຍ. ພໍດຝັນສຸດຍ່າກໍສະດຸ້ງຕື່ນນອນ ແລ້ວຄິດຫາຄຳຝັນນັ້ນບໍ່ລືມບໍ່ຮູ້ວ່າມັນຊິດີຊິຮ້າຍແນວໃດ, ນັບແຕ່ມາເປັນຂ້ອຍຂ້າຮັກສາສວນໃຫ້ພະຍາເມືອງກໍບໍ່ເຄີຍຝັນຈັ່ງຊີ້ຈັກເທື່ອຫລືວ່າລາງຝັນນີ້ມັນຈະເກີດໂທດໄພແນວໃດບໍ? ຫລືຫາກວ່າໂຕເອງ ຊິຕາຍຊ້ຳທໍ່ບໍ່ຮູ້ຍ່າເຖົ້າຈື່ມຜູ້ດຽວວ່າ ຖ້າຊິຕາຍອີຫລີກໍໃຫ້ໄດ້ເຮັດບຸນທຳທານກ່ອນຖ້ອນ.

ຍ່າເຖົ້ານອນຄິດຢູ່ບຶດໜຶ່ງສຽງໄກ່ຂັນສົ່ງຄອນຕອນເຊົ້າກໍ ດັງແຊວຂຶ້ນ ບໍ່ດົນແສງຕາເວັນກໍພົ້ນຂອບຟ້າອອກມາສູ່ໂລກ ຍ່າເຖົ້າກໍຟ້າວລຸກໜັ້ງເຂົ້າເປົ່າໄຟ. ພໍຕາເວັນສວາຍແດ່ໜ້ອຍໜຶ່ງຍ່າເຖົ້າກໍກຳພ້າກ້ອນໄປທ່ຽວເລາະລຽບເບິ່ງສວນພໍແຕ່ຍ່າງເຂົ້າສວນຂອງນາງຈຸມ ຍ່າເຖົ້າກໍໄດ້ເຫັນປ່າອ້ອຍລົ້ມເປັນລ່າວໄປຫລາຍກໍ, ຍ່າເຖົ້າຕົກໃຈຮ້ອງຂຶ້ນວ່າ ປາໂທ ມັນແມ່ນຂະໂມຍທາງໃດມາ ລັກເອົາທັງພ່ອງຕີກຊີກຕົວ ເພາະເຫລືອໃຈໂຕເອງເຝົ້າຢູ່ແທ້ງ ຂະໂມຍມາລັກກໍຍັງບໍ່ຮູ້ດັ່ງບົດກອນຂຽນວ່າ

ຍາຍກໍແຈດງຮ້ອງ　　ມີຜ່າຜະຫລຽງອີກ

ສົງວ່າມີຂະໂມຍມາ　　ລັກກິນລຳອ້ອຍ

ນັບແຕ່ມາຢູ່ນີ້　　ໄດ້ຊົ່ວສອງຝົນ ນີ້ແລ້ວ

ບໍ່ຫອນມີຂະໂມຍມາ ລັກຂອງກູໄດ້
ກູເຜີໃຈພຽງນ້ອຍ ໂຈນກໍມາລັກລ່ວງ
ວານນີ້ກູຫາກຫ້ວງ ຮ້ອຍຕີນນ້ອຍຢູ່ສວນ ແຫ້ແລ້ວ

ຍ່າເຖົ້າໄດ້ເຫັນຜິດສັງເກດຄືແນວນັ້ນກໍຈົ່ງແນມເບິ່ງສວນ ອື່ນໆ ປະກົດວ່າສວນອື່ນຍັງດີຫມົດແຕ່ສວນນາງລຸນດິນຄຽວທີ່ຂະໂມຍເຂົ້າມາລັກອ້ອຍໄປກິນຍ່າເຖົ້າຈຶ່ງວ່າແມ່ນຜູ້ໃດເດນໍຊ່າງເຫິງສາຫັຍບຽດນາງແທ້, ຍ່າເຖົ້າຄຶດວ່າເຮັດແນວນັ້ນຕ້ອງແມ່ນຄົນຄຽດຊັງກັນ ແທ້ ເພາະວ່າມັນຕັ້ງຫນ້າຕັ້ງຕາມາລັກແຕ່ສວນຂອງນາງຜູ້ດຽວເຮັດຈັ່ງຊີ້ ມັນຕ້ອງແມ່ນພີ່ນ້ອງໃກ້ຊິດໃຊ້ໃຫ້ຂະໂມຍມາທຳລາຍແນ່ນອນ, ໂອຍຜູ້ມັນລັກຊ່າງບໍ່ຄ້າງຢູ່ສວນແດ່ເດກູຊິເອົາພ້າຕັດຄໍມັນແລ້ວເອົາ ຫົວສຽບຫລັກຮົ້ວໄວ້. ຈົ່ມເມື່ອຍແດ່ແລ້ວຍ່າເຖົ້າກໍຕິດຕາມເບິ່ງຮອຍແກ່ລຳອ້ອຍເຊິ່ງເປັນຄອງເອີດເຕີດຢູ່ຍ່າເຖົ້າສຳຫລວດເບິ່ງຄັກໆ ເຫັນຮອຍຕີນແກ່ລຳອ້ອຍແລະຮອຍຕີນເຂົ້າມາຫາສວນຍ່າຈຶ່ງວ່ານີ້ ແລງວານນີ້ກູໄປໄລ່ກາເຂົ້າຫາກຫ້ວງຮອຍຕີນເປັນສະຫນັ້ນມັນຫາກ ແມ່ນອີ່ຫລີເປັນຮອຍຕີນຂຂະໂມຍແທ້ແລ້ວ, ຍ່າເຖົ້ານຳຄອງໄປເຫັນເປັນຄອງນ້ອຍໆພໍປານຄອງຫມູຫຽວ ຮອຍຕີນເລາະໄປຫາແຄມຮົ້ວ ສວນເຫັນຮອຍຕີນມັນລອດຮົ້ວໄປໆມາໆ ຍ່າເຖົ້າ ເຫັນຄັກແລ້ວທັງ ພ່ອງຄຶດວ່າຊິຫາຫຍັງມາເຮັດບ້ວງຫ້າງໃສ່ທາງທຽວ ນຶຄຶດໄດ້ແລ້ວຍ່າ ກໍແລ່ນເມືອເຮືອນຄວາໄດ້ສາຍກະບຸງຈຶ່ງຟ້າວເອົາມາຫ້າງໃສ່ທາງໄວ້ ຍ່າເຖົ້າຄຶດໃນໃຈວ່າ ແນວໃດ ມັນກໍ ຕ້ອງ ມາ ຖືກບ້ວງ ສາຍກະບຸງຂອງກູແນ່ນອນ.

# ໙. ບັ້ນທ້າວກ່ຳກາດຳຖືກບ້ວງ ຂອງ ຍ່າຈ່ຳສວນ

ບັດນີ້ກ່າວເຖິງກາດຳນ້ອຍຫຼີ້ນຢູ່ແຈສວນພໍ່ຕື່ນເຊົ້າເປັນນີ້ໃໝ່ມາ ທ້າວກໍລຸກແຕ່ນອນງວາກພຸ້ນຫລຽວພໍ່ເຫັນບ້ວງຂອງຍ່າເຖົ້າ (ຍ່າຈຳສວນ) ຫ້າງ ໄວ້ເຮັດລ້ອງດ້ອງຢູ່, ເມື່ອທ້າວເຫັນດັ່ງນັ້ນແລ້ວຈຶ່ງບາຍເອົາບ້ວງຂອງຍ່າເຖົ້າມາສູບຮັດໃສ່ແອວຂອງທ້າວ ໄວ້ແລ້ວກໍທຳທ່າໂດດໄປໂດດມາພໍໃຫ້ສາຍບ້ວງນັ້ນເຄັ່ງແລ້ວກໍນັ່ງຢູ່. ກ່າວເຖິງຍ່າເຖົ້າຫລັງຈາກທ້າງບ້ວງ (ແຮ້ວ) ໄວ້ດີແລ້ວກໍກັບເມືອຢູ່ເຮືອນ ພໍຕື່ນເຊົ້າມາຈຶ່ງ ໄປຍາມແຮ້ວ ທີ່ຫ້າງ ປະໄວ້ ຍ່າເຖົ້າ ຈຶ່ງຟ້າວລົງເຮືອນໄປມືກໍຖືພ້າກ້ອນສຽມຫຼຽນແບກໄປ.

ພໍໄປເຖິງແຄມຮົ້ວກໍແນມເຫັນທ້າວຖືກແຮ້ວຄາຢູ່, ຝ່າຍ ທ້າວກ່າກາດຳນັ້ນພໍແຕ່ແນມເຫັນຍ່າເຖົ້າຖືພ້າກ້ອນແບກສຽມຫຼຽນ ຍ່າງມາຫາທ້າວຈຶ່ງທຳທ່າດີ້ຢ້ານຍ່າເຖົ້າໂດດໄປໂດດມາ. ຝ່າຍຍ່າເຖົ້າຈຶ່ງຟ້າວໂດດຈັບສາຍແຮ້ວເອົາໄວ້ ຍ່າເຖົ້າດຶງທີ້ນ ຈົນວ່າທ້າວກ່າກາດຳຢຸດກັບທີ່ ສ່ວນຍ່າເຖົ້າຈຳສວນກໍລົ້ມລົງທັງແຮງຈົນວ່າສົ້ນເສື້ອຫລູດອອກຈາກໂຕ ທ້າວໄດ້ເຫັນຈັ່ງຊັ້ນກໍເລີຍຫົວຂວັນ ຍາຍຍ່າເຖົ້າ ຟ້າວລຸກຂຶ້ນຢືນ. ຍ່າເຖົ້າຄຶດຄຽດໃຫ້ທ້າວແຮງຈຶ່ງຍົກສຽມຫຼຽນວ່າຈະຕີລົງໃສ່ພັດພໍກະເທີນຈຶ່ງຄວ້າຈັບໄດ້ພ້າກ້ອນເງືອດ ຂຶ້ນວ່າຈະຟັນລົງໃສ່ຫົວໃຫ້ມຸ່ນ ປະກິດວ່າຄືນຫຍັງມາຄ້ຳເອົາໄວ້ ນັ້ນແຫລະຈຶ່ງເຮັດໃຫ້ຍ່າເຖົ້າກະເທີນຄ້າງຢູ່ ທັງພ່ອງຈົ່ມພ່ອງດ່າທ້າວດັ່ງປີດກອນຂຽນວ່າ

ແຕ່ນັ້ນຍາຍກໍແຈດງຕ້ານ ຄຽດຈື່ມຍອນງ
ກູກໍມາຕາຍເຈັບ ຄອຍພັກເວນຄືນຮ້າຍ
ມຶງຊິໄປໃສມຶ້ມ ພັກເວນເອີຍຄືນຖ່ອຍ
ມຶງຈະຕາຍຄອບບ້ວງ ກູເຖົ້າບໍ່ສົງ ແທ້ແລ້ວ
ກູກໍບໍ່ທ່ອນຮູ້ ແລ້ວເລົ້າມາເຫັນ ສິ່ງນີ້
ຄືນດຳເປັນຄືນມືນ ດັ່ງກາໂຕຮ້າຍ
ກາວ່າກາດຳແທ້ ມັນກໍຍັງຂາວກ່ວາ ມຶງນີ້
ມຶງນັ້ນດຳປ່ອດປີ້ ດູແມ້ງກ່ວາກາ ແທ້ນໍ
ຄັນວ່າໂຈນຂະໂມຍແທ້ ສັບໃດກໍບໍ່ໃຊ່ ເສຍນໍ
ຫລຽວເບິ່ງໂສມຮູບໜ້າ ກໍຄືແທ້ດັ່ງຊະນິ ແທ້ເດ

ຢ່າເຖົ້າຈື່ມຕໍ່ໄປວ່າ ອັນແຕ່ສັດເດຍລະສານມັນ ກໍຍັງມີສ່ວນ ດີຄືນແດ່ ອັນນີ້ ຈັກວ່າແມ່ນຜີຕາຍຊາກບໍ່ຫລືວ່າອັນ ໃດແທ້. ວ່າແລ້ວຍາຍຢ່າເຖົ້າກໍແກ້ເຊືອກດຶງລາກ ເມືອເຮືອນ ທ້າວກໍແລ່ນນຳ ກົ້ນຢ່າເຖົ້າ ໄປຮອດເຮືອນກໍເອົາຜູກໄວ້ເສົາ ກ້ອງຕະລ່າງ ທັງ ເວົ້າວ່າ ເອີ..........ໃຫ້ມຶງນອນຢູ່ຫັ້ນແຫລະບັກຕາຍເວນ ມຶງເອີຍຢ່າ ລັກໜີໄປທາງໃດເດັດຂາດ. ມັດທ້າວໄວ້ດີ ແລ້ວຢ່າເຖົ້າກໍຈື່ມນຳຂຶ້ນເມືອເທິງ ເຮືອນແລ້ວກໍປັ້ນເຂົ້າ ກັບ ອາຫານມາ ໃຫ້ທ້າວກິນທັງ ເອົາ ປັ້ນເຂົ້າ ຢື່ນໃຫ້ທັງເວົ້ານຳ ທ້າວ ດັ່ງບົດກອນຂຽນວ່າ

ມຶງຈົ່ງກິນເສຍຖ້ອນ ພັກເວນເອີຍໃຫ້ມັນອີ່ມ
ຄັນວ່າກິນອີ່ມແລ້ວ ນອນນີ້ເກືອກຂີ້ດິນ ນັ້ນຖ້ອນ

ທ້າວກາດຳຮັບເອົາປັ້ນເຂົ້າມາກິນ, ຫລັງຈາກກິນອີ່ມລ້າງມື ມີເທື່ອມີແຮງແລ້ວ ທ້າວຈຶ່ງລົມນຳຍ່າເຖົ້າວ່າ ໂອ໋ຍ...ຍ່າ ເອີຍ ເຈົ້າຈຶ່ງແກ້ເຊືອກອອກຈາກແຂວຂອງຂ້ອຍແດ່ຖອນແຂວຂ້ອຍ ມັນຊິຂາດຖິ້ມແລ້ວຍ່າເອີຍ ແລ້ວເອົາຂ້ອຍເມືອເທິງເຮືອນເຊື່ອງ ໄວ້ ຂ້ອຍຊິເວົ້ານັ້ນເວົ້ານສູ່ຟັງ ຂ້ອຍຢ້ານແຕ່ຍ່າປວດໃຈນຳຖ້ອຍຄຳສຳນວນຂອງຂ້ອຍເບີດເຈີະເບີດເຈີຍແທ້ໃດຍ່າ, ຝ່າຍຍ່າເຖົ້າໄດ້ ຍິນທ້າວຮ້ອງຂໍຫລາຍເທື່ອລຳຄານຫູໂພດກໍເລີຍປຸບປັບລົງມາແກ້ເຊືອກແລ້ວກໍດຶງລາກທ້າວຂຶ້ນເມືອເທິງເຮືອນ, ພໍແຕ່ແກ້ເຊືອກອອກ ຈາກແຂວຂອງທ້າວແລ້ວ ຍ່າກໍເອົາສອງມືຊຸກວ່ອນດັນທ້າວໃຫ້ເຂົ້າໄປລີ້ຢູ່ແຈເຮືອນ ທັງບອກວ່າໃຫ້ມຶງລີ້ຢູ່ດີໆ ຢ້ານຄົນອື່ນເຂົາຊິ ເຫັນຄວາມຂີ້ຮ້າຍຮູບກ້ຳດຳກາຂອງມຶງ ກູຢ້ານເຂົາຂ້າເຂົາເບື່ອ ມຶງຕາຍຖິ້ມລ້າງ ຮູບຮ່າງຂອງມຶງນັ້ນຄືມິມຫນ້າຄືລິງຕາຍຊາກ ເບິ່ງຄວາມງາມຂອງມຶງກໍບໍ່ຜິດຫຍັງກັບໂຕຊະນີ ຄົນໃຜໄດ້ເຫັນເຂົາ ກໍຕ້ອງວ່າມຶງມັນຄົນຂວາງ ເຂົາຊິເອົາມຶງໄປເບີກຫນີໄຫລນ້ຳ.

ແຕ່ນັ້ນທ້າວກ່ຳກາດຳຈຶ່ງໄດ້ຈາຄຳຫວານຕໍ່ຍາຍວັນນັ້ນ ທ້າວໄດ້ເວົ້າຈ້ອຍໆອ້ອຍອີ່ນດອມຍາຍ, ທ້າວບອກກັບຍ່າເຖົ້າວ່າ ທ້າວບໍ່ກົວ ຫຍັງຫມົດຍ່າເຖົ້າບໍ່ຕ້ອງຢ້ານບໍ່ຕ້ອງກົວແມ່ນໃຜຊິມາ ເອົາລ່ອງນຳກໍສຸດແລ້ວບໍ່ເຄີຍຢ້ານຫຍັງຫມົດ. ເຈົ້າຈຶ່ງອົດສ່າລ້ຽງ ຂ້ອຍໄວ້ ບຸນຫລາຍຫລອນວ່າໃຫ່ຍ່າເອີຍ ບຸນຄຸນທີເຈົ້າມີຕໍ່ຂ້ອຍ ນັ້ນໄປທາງຫນ້າທາງໃນນັ້ນຂ້ອຍບໍ່ລືມດອກ, ຂ້ອຍຊິຫົດສົງເຈົ້າ ໃຫ້ເປັນສາວສອງເທື່ອ ເອົາໃຫ້ບ່າວສ່ຳນ້ອຍຫຽວຂຶ້ນພ່ອງລືງ ຈົນ

ວ່າຫົວຂັ້ນໃດກ້ຽງຫີນທາງເປັນຮ່ອມພຸ້ນນ່າ.

ຝ່າຍຍາຍຍ່າເຖົ້າຈຳສວນໄດ້ຍິນທ້າວເວົ້າຄືແນວນັ້ນ ຈຶ່ງຮ້ອງສຽງແຜດໄປໃສ່ທ້າວວ່າ ໂອຍບັກຕາຍເວນມຶງເອີຍຢ່າເວົ້າ ໃຫ່ຍລືມໂຕຫລາຍ ຢ່າເວົ້າວ່າ ຊື່ວ່າໂສມບໍ່ໄດ້ຫາຂຫມນແສນຊິຍ້ອມກໍ ບໍ່ເຫລືອງ ມຶງນຄິນຂຣາຍຊິເວົ້າລ່າຍລວງພາງກູທາກເທັນກະ ບວນມຶງແຕ່ຂະໂນຍທີນອ້ອຍທັ້ນແລ້ວ.

# ໖. ບັ້ນທ້າວກ່ຳກາດຳຮ້ອຍດອກໄມ້ ດອມຍ່າໄປຖວາຍນາງລຸນ

ເມື່ອທ້າວກ່ຳກາດຳກັບຍ່າຈຳສວນນັ່ງລົມກັນໄປມາໄດ້ ຫລາຍຫລິບຫລາຍຕ່າວ ກໍ່ພິດຕາເວັນບ່າຍລົງແລງຍ່າຈຶ່ງເວົ້າກັບທ້າວວ່າ ມື້ນີ້ແມ່ນວັນອຸໂປສົດ(ວັນສິນໃຫຍ່ )ຍ່າວ່າຈະໄປສວນເພື່ອເກັບດອກໄມ້ເມື່ອຖວາຍນາງລຸນຕາມຮີດຄອງທີ່ເຄີຍໄດ້ປະຕິບັດມາ ຍ່າ ໄດ້ສັ່ງທ້າວວ່າໃຫ້ນິ່ງນອນຢູ່ເຮືອນນ໊ເດີ ຢ່າຫນີໄປທາງໃດເປັນ ເດັດຂາດເພີ່ນຊິເຫັນ ຄັນເຂົາໄດ້ເຫັນນຶ່ງເຂົາຊິວ່າຄົນເຂັດຄົນ ຂວາງເຂົາຊິຟັນຄໍເສຍໃສ່ແພ ໄຫລນ້ຳ.

ຫລັງຈາກຍ່າເຖົ້າສັ່ງທ້າວເປັນທີ່ຮຽບຮ້ອຍແລ້ວກໍ່ຟ້າວລົງເຮືອນ ໄປສູ່ສວນຫລວງ ພໍໄປເຖິງສວນຍ່າກໍ່ເລືອກເບິ່ງດອກໄມ້ນານາຊະນິດທີ່ບານຢູ່ໃນສວນ ມີທັງດອກເກດ, ດອກຈຳປາ, ດອກຈຳປີ ແລະ ອື່ນໆ ຍ່າຈຶ່ງເກັບເອົາດອກໄມ້ທຸກຊະນິດຈົນເຕັມກະຕ່າແລ້ວ ກໍ່ພາຍກະຕ່າດອກໄມ້ກັບຄືນສູ່ເຮືອນຫາທ້າວກ່ຳກາດຳ. ຈາກນັ້ນ ຍ່າກໍ່ເລີ່ມຮ້ອຍດອກໄມ້ເປັນຖັນແຖວຖີ່ຕາມທີ່ເຄີຍໄດ້ຮ້ອຍ ໄປຖວາຍນາງເປັນປະຈຳທ້າວກ່ຳກາດຳຫລຽວເຫັນຍ່າຮ້ອຍດອກໄມ້ທ້າວຈຶ່ງເວົ້າດອມຍ່າດ້ວຍຄວາມມ່ວນແມ້ງທັງຂໍຮ້ອຍດອກໄມ້ນຳຍ່າ ດັ່ງບົດກອນຂຽນວ່າ

ອັນວ່ານາດາຂ້ອຍ    ສາຍໃຈເຈົ້າຍ່າ ຮຽມເອີຍ
ເຈົ້າກໍ່ໄປເກັບດອກໄມ້    ມາໄດ້ຊູ່ດວງ ຍໍເດ

ອັນຫຍ້າເກັບໄດ້ ຈັກວ່າແມ່ນດວງດອກ ສົນໃດ

ໃຫ້ຂອຍຂໍຮວດຮ້ອຍ ນຳເຈົ້າແດ່ແມ່ ຍ່າເອີຍ

ແຕ່ນັ້ນຍ່າກໍເຮັດສີບຈຸ້ຍ ຫລັບຕາຊົ່ງຫົວດ່າ ພູດໂຫດເດ

ອັນວ່າບັກຂຮ້າຍ ມຶງຊິຮ້ອຍ ຮວດ ເປັນ ນັ້ນລີ

ກູກໍເຖົ້າແກ່ໄດ້ ຮ້ອຍເຊັ່ນພັນຄົນ ມາແລ້ວ

ກູກໍຍັງວິນວວາຄຶດ ຍາກກໍໃຈການຊິຮ້ອຍ

ມຶງນເດັກນ້ອຍໆ ຫາກໍເກີດສາມວັນ

ສັ່ງມາໂອຫົວຄຶດ ວ່າໂຕຊິເປັນຮ້ອຍ

ມຶງຈົ່ງໄປນອນຊຶ່ນ ແຈເຮືອນລຢູ່ ນັ້ນຖອນ

ກູກໍເຖົ້າແກ່ແລ້ວ ກໍຍັງຮ້ອຍບໍ່ເປັນ ແທ້ມາ

ແຕ່ວ່າທ້າວກ່ຳກາດຈໍາກໍຍັງອືນຄວາມຍ່າຫ້າມ ໄດ້ເວົ້າອິນ ອ້ອຍດອນຍ່າ ວ່າຢາກຂໍລອງຮອຍດອກໄມ້ນຳຍ່າຢູ່ບໍ່ເລີກບໍ່ແລ້ວ, ທ້າວເວົ້າເປັນບໍ່ເປັນກໍລອງເບິ່ງກ່ອນຄັນຫາກມັນບໍ່ງາມແທ້ງກໍບໍ່ເອົາໄປຖວາຍນາງ ເອົາໄວ້ບູຊາພະຢູ່ເຮືອນເຮົາກໍໄດ້. ທ້າວເວົ້າ ອີກຫາກທ້າວສາມາດຮ້ອຍດອກໄມ້ໄດ້ງາມກໍຈະໄດ້ເປັນຜູ້ສືບ ທອດຕໍ່ໄປ ດຽວນຍ່າກໍເຖົ້າແກ່ແລ້ວທ້າວນັ້ນຍັງໜຸ່ມນ້ອຍຢູ່, ຝ່າຍ ຍ່າເຖົ້າຈຳສວນໄດ້ຟັງຄຳເວົ້າອັນອ້ອຍອິ່ນຂອງທ້າວກໍເວົ້າວ່າ ໂອຍບັກເວນມຶງເອີຍ ມຶງຈັ່ງແມ່ນຊ່າງເວົ້າແທ້ນໍ. ວ່າແລ້ວຍ່າກໍຍື່ນພ້ວດອກໄມ້ໃຫ້ທ້າວພ້ອມທັງເວົ້າແບບບໍ່ເຊື່ອໝັ້ນທ້າວປານໃດເອົາ.. ເອົາໄປຮ້ອຍລອງເບິ່ງຄັນມຶງຫາກຮ້ອຍບໍ່ເປັນແທ້ງສົມພາຊິ ໃສ່ຫົວມຶງແລ້ວ.

ທ້າວກ່ຳກາດຳຟ້າວຮັບເອົາດອກໄມ້ຈາກຍ່າເຖົ້າ ທັງ ພ່ອງຫົວ ສະອຶກສະອ້ອຍເພາະຄວາມດີໃຈ ທີ່ຍ່າໄດ້ອະນຸຍາດໃຫ້ທ້າວ ໄດ້ຮ້ອຍດອກໄມ້ເພື່ອໄປຖວາຍນາງລຸນ, ເມື່ອໄດ້ດອກໄມ້ແລ້ວ ທ້າວກໍເອົາມາຮ້ອຍເປັນຮູບຕ່າງໆນານາ ເບິ່ງຮູບໃດກໍງາມໆດັ່ງບິດກອນ ຂຽນວ່າ

ທ້າວກໍຮ້ອຍດອກໄມ້ ເປັນຮູບກິນນາລີ
ມີທັງກິນນາລອນ ຮ່ອນບິນບິນຜ້າຍ
ຫລາຍຮູບແມວບາຮ້ອຍ ເປັນຖັນແຖວຖີ່
ທັງຈຳປີແລະຈຳປາໝູ່ນັ້ນ ບາຮ້ອຍ ຮວດງາມ
ມີທັງຮູບນາຄນ້ອຍ ມີກອດບາຍນົມ
ຫົວຮຽງຫົວ ກ່າຍກັນດົມແກ້ມ
ແຍ້ມຍ່າວມາລາພົ້ວ ດວງຫອມທ້າວແຕ່ງ
ແຍງບໍ່ເຫີຍເຫືອດໄດ້ ຕາກະດ້າງລໍ່າດູ
ມີທັງຮູບໝູ່ຊ້າງ ງາສອດສວນກັນ
ມີນາຍຄໍ ຂີ່ຫົວທັງທ້າຍ
ຫລາຍກະບວນເບື້ອງ ນາຄາກຽວກ່າຍ
ຫົວສອດກ້ຽວ ຫາງຟັ່ນກ່ຽວກັນ
ອັນໜຶ່ງມີຮູບນ້ອຍ ທ້າວກ່ຳກາດຳ
ຫລິງເມືອງພັດ ພາກມານານລໍ້າ
ມີທັງກາດຳນ້ອຍ ສະໜາພຽງຮອງນັ່ງ
ຝູງສະໜົມໝູ່ລ້ອມ ຫຽມຂ້າງໝື່ນນາງ
ສີພະມີພຽບພ້ອມ ໃນດອກດວງຫອມ

ນ້ອັນເໜືອນ ດັ່ງຊິກີນກິນໄດ້

ນານາແທ້ ແປງເປັນຫລາຍຮູບ

ງາມຍິ່ງຍ້ອຍ ຄືຊິດ້ານປາກເປັນ ເຈົ້າເອີຍ

ເມື່ອທ້າວຮ້ອຍແລ້ວກໍຈັບໂຍງຂຶ້ນໃຫ້ຍ່າເບິ່ງທັງເວົ້າວ່າ ເບິ່ງແມ່ຍ່າ ຮວດດອກໄມ້ຂອງຂ້ອຍງາມບໍ? ຄັນບໍ່ງາມຍ່າກໍບໍ່ຕ້ອງເອົາ ຂ້ອຍຊິເອົາໄວ້ບູຊາຢູ່ເຮືອນເຮົາ, ຝ່າຍຍ່າເຖົ້າໄດ້ຍິນສຽງທ້າວເວົ້າແນວນັ້ນຈຶ່ງເຫລືອດຕາໄປເບິ່ງເລີຍເຫັນ ຮວດດອກໄມ້ຂອງທ້າວງາມໆ ຍ່າຈຶ່ງເວົ້າວ່າ ໂອຍບັກຂຣາຍກູຄຶດວ່າມຶງຊິຮ້ອຍ ບໍ່ເປັນຊັ້ນດອກ ບາດເຮັດແທ້ຈຶ່ງແມ່ນງາມອີຫລີກູຄຶດວ່າມຶງເວົ້າຂຊຸຍລ້າງຢ້ານວ່າມັນຊິເສຍເວລາຊັ້ນດອກ, ອັນນີ້ມຶງຫາກເປັນພູ້ຮູ້ ຜະຫຍາລຈັ້ທ່ວາກູແທ້ນໍຍ່າກໍ່ວຽນງອ້ອມເບິ່ງ ຮວດ ດອກໄມ້ຂອງ ທ້າວບໍ່ເລີກບໍ່ແລ້ວຈົນວ່າຕາລ້າງ ເພາະວ່າເບິ່ງຮູບໜຶ່ງແລ້ວພັດ ຮູບສອງສາມສີ່ ຮູບໃດກໍລ້ວນແຕ່ງາມໆທັງນັ້ນ. ທ້າວໄດ້ບອກກັບ ຍ່າວ່າ ຮວດດອກໄມ້ຂອງເຈົ້ານັ້ນເອົາໄປຖວາຍໃຫ້ເອື້ອຍຂອງ ນາງດີ ສ່ວນວ່າ ຮວດດອກໄມ້ຂອງຂ້ອຍໃຫ້ເຈົ້າເອົາໄປຖວາຍ ນາງລຸນດີຍ່າ, ຝ່າຍຍ່າເຖົ້າໄດ້ຍິນທ້າວສັ່ງແນວນັ້ນກໍຈຶ່ງຕອບຮັບ ວ່າເອີ ໆ ກູຊິເຮັດຄືມຶງບອກດອກບັກເວນເອີຍ ມຶງນັ້ນມັນຕັ້ງຫົວ ລ້ານລືນດູແທ້ໃດ.

ວ່າແລ້ວຍ່າກໍເກັບເອົາ ຮວດ ດອກໄມ້ໃສ່ໃນກະຕ່າ ແລ້ວ ນຸ່ງເຄື່ອງໃຫມ່ໃສ່ເຄື່ອງຫອມແລ້ວກໍເອົາຂັນຫມາກມາຄຽງຈາກ ນັ້ນຍ່າກໍພາຍກະຕ່າດອກໄມ້ລົງເຮືອນໄປສູ່ທີ່ພາສາດຂອງເອື້ອຍ ນາງ

ລຸນແລ້ວກໍນຳເອົາຮວດ ດອກໄມ້ຖວາຍໃຫ້, ຕໍ່ຈາກນັ້ນຍ່າກໍຟ້າວໄປ ສູ່ທີ່ພາສາດຂອງນາງລຸນ ແລ້ວນຳເອົາຮວດ ດອກໄມ້ຖວາຍ ໃຫ້ນາງ. ຝ່າຍນາງລຸນກໍຟ້າວຮັບເອົານຳຍ່ານາງ ໄດ້ເຫັນຮວດ ດອກໄມ້ຂອງຍ່ານັ້ນຕ່າງກວ່າແຕ່ກ່ອນມາຫລັງ ເປັນທີ່ແປກໃຈຂອງນາງ ນາງໄດ້ເບິ່ງອ້ອມໄປວຽນມາຫລາຍເທື່ອ ນາງໄດ້ເຫັນຮູບ ຕ່າງໆ ເປັນທີ່ຈັບອົກຈັບໃຈ ຍິ່ງເບິ່ງກໍຍິ່ງງາມ ມີທັງຮູບທ້າວຮູບນາງ ຮູບສັດນານາເຫັນທັງຮູບທ້າວກາດກຳນ້ອຍຫລິ້ງພອຍພາກຖິ່ນ. ແຕ່ລະຮູບທີ່ນາງລຸນໄດ້ເຫັນມັນຊ່າງເຮັດໃຫ້ນາງຫລົງໄຫລນຳ, ດັ່ງນັ້ນ ນາງຈຶ່ງຖາມຍ່າເຖົ້າວ່ານັ້ນໃຜເດມາຮ້ອຍດອກໄມ້ໃຫ້ຍ່າ ຂໍໃຫ້ຍ່າ ຈົ່ງໄດ້ບອກຄວາມຈິງສູ່ຟັງຍ່າປິດຍ່າບັງ

ແຕ່ນັ້ນຍ່າຈຶ່ງໄຂຄຳຕ້ານຈານາງບິນບອກຍ່າວ່າຍ່າຫາກຄິດຮ້ອຍເອົາເອງບໍ່ມີໃຜມາຮ້ອຍຊ່ອຍດອກນາງເອີຍ ວ່າແລ້ວຍ່າກໍ ຟ້າວຂາບລານາງລຸນກັບເມືອຫາເຮືອນຂອງຕົນຢູ່ສວນ, ເມື່ອຍ່າກັບ ມາທ້າວຈຶ່ງຖາມຍ່າວ່າ ມື້ນຍ່າໄປຖວາຍດອກໄມ້ນາງວ່າແນວໃດ ແມ່ນາງໄດ້ຖາມຫາຜູ້ຮ້ອຍຫລືບໍ່? ຍ່າເຖົ້າຈຶ່ງຊິກຊາກຮ້າຍໃຫ້ທ້າວວ່າໂອຍ....ຈົ່ງແມ່ນມຶງຊ່າງສິຊ່າງຖາມແທ້ນໍບັກຕາຍວອນມຶງ ເອີຍຍ່າໄດ້ບອກກັບທ້າວວ່ານາງໄດ້ຖາມຫາແທ້ ແຕ່ກູໄດ້ອຳເອົາມຶງໄວ້ກູຢ້ານເພິ່ນເຫັນຮູບຮ້າຍຂອງມຶງ ເພິ່ນຊິເບື່ອຊິໜ່າຍມຶງ.

ພໍແຕ່ຍ່າບອກທ້າວແລ້ວ ຕາເວັນກໍມືດພໍດີຍ່າຈຶ່ງຫາເຂົ້າມາສູ່ກິນຫລັງກິນແລງແລ້ວຍ່າກັບຫລານກໍພາກັນເຂົ້ານອນ ທ້າວກໍ່ກາກາ ດຳກໍນອນຢູ່ບ່ອນແຈເຮືອນຕາມເຄີຍ, ແຕ່ວ່າມີເທພາມາຄອຍເບິ່ງແຍງ

ທ້າວຕະຫລອດ ຈຶ່ງບໍ່ມີສິ່ງໃດຈະມາອິດສາບັງບຽດທ້າວໄດ້ ທ້າວ ໄດ້ຢູ່ຮ່ວມເຮືອນນ້ອຍໃນສວນດອນຍ່າ ດ້ວຍຄວາມສະບາຍດີ ທຸກປະການ.

# 7ະ ບັ້ນນາງລຸນຢາກເຫັນເຈົ້າຂອງຮວດດອກໄມ້

ຍ້ອນກ່າວເຖິງນາງລຸນທີ່ຢູ່ໃນຫໍພາສາດ, ນັ້ນສາວສະ ຫນົມຮັບໃຊ້ ໄດ້ແຕ່ງພາເຂົ້າແລງຂຶ້ນ ໄປຖວາຍນາງຕາມປົກກະຕິ, ແຕ່ວ່າ ມື້ນັ້ນນາງລຸນສະເຫວີຍແລງ ໄດ້ແຕ່ພຽງສາມຄໍາກໍອີ່ມ ໂລດເພາະວ່າ ໃນສວນເລິກຂອງຫົວໃຈຂອງນາງ ຄຶດຮອດແຕ່ເຈົ້າຂອງ ຮວດ ດອກໄມ້ຢູ່ບໍ່ເລີກບໍ່ແລ້ວ ນາງຢາກເຫັນຫນ້າເຈົ້າຂອງ ຮວດດອກໄມ້ ຈະເປັນຜູ້ຈີບຜູ້ງາມປານໃດເດ, ນາງທັງຄຶດທັງຈັບເອົາຮວດ ດອກ ໄມ້ຂຶ້ນມາດົມ ແລ້ວກໍຄຶດ ໄປເລື້ອຍໆນາງຄຶດວ່າເຈົ້າຂອງຮວດ ດອກໄມ້ນັ້ນແມ່ນຄົນຫລືວ່າພະອິນພະພົມກັນແທ້. ນາງຄຶດວ່າແນ່ນອນເຈົ້າຂອງຮວດ ດອກໄມ້ນັ້ນຕ້ອງມາອາໄສຢູ່ນໍາຍ່າໃນສວນ ແລ້ວຈຶ່ງຮ້ອຍ ດອກໄມ້ໃຫ້ຍ່າເອົາມາຖວາຍ, ລໍາພັງແຕ່ຍ່ານັ້ນບໍ່ສາມາດຈະຮ້ອຍໄດ້ງາມປານນັ້ນດອກແຕ່ວ່າຍ່າ ໄດ້ປິດອໍາເອົາ ໄວ້ບໍ່ໃຫ້ຮູ້ຈຶ່ງບອກວ່າຍ່າ ໄດ້ເປັນຜູ້ຮ້ອຍມາຖວາຍເອງ.

ນາງລຸນນອນຄຶດ ໄປມາຫລາຍຫລີບຫລາຍຕ່າວຈົນນາງເຊືອບ ໄປແຕ່ຍາມໃດບໍ່ຮູ້ ພໍນາງຫລັບກໍຝັນວ່າດາວຢູ່ຟ້າສະເດັດເຂົ້າມາໃນ ຫໍພາສາດຂອງນາງແລະດາວດວງນັ້ນກໍສົ່ງແສງອັນຮຸ່ງເຮືອງ ໄປທົ່ວ ພາສາດ ແລ້ວສ່ອງຂຶ້ນ ໄປເຖິງແດນສະຫວັນຊັ້ນຟ້າ ຊາວບ້ານ ຊາວເມືອງໃຜໆກໍສະອອນໃຈໃນແສງອັນຮຸ່ງເຮືອງເຫລືອງເຫລື້ອມ ນັ້ນພໍນາງຝັນແລ້ວກໍສະດຸ້ງຕື່ນຂຶ້ນ ນາງ ໄດ້ຄຶດເຖິງຄໍາຝັນນັ້ນບໍ່ລືມ ເພາະວ່າຄໍາຝັນນັ້ນເປັນທີ່ຫນ້າອັດສະຈັນແທ້ ນາງຄຶດວ່າລາງຝັນນັ້ນມັນຈະ ດີ

ຫລືວ່າຮ້າຍກັນແທ້ນໍ ຫລືວ່າຈັກມີໂທດມີໂພຍຫລືວ່າຈະມີໂຊກລາບສົມ ດັ່ງຄວາມມຸ່ງມາດປາຖະໜາ, ນາງຄຶດຫາຄຳຝັນຈົນວ່າເວລາ ລ່ວງ ໄປຂ້ອນຄືນ ຟັງສຽງລົມພານຕ້ອງກະດິງໃນຫໍຜາສາດສຽງມ່ວນແມ້ງ ສະອອນຊ້ອງກ່ອມໃຈ, ໜ້ອຍໜຶ່ງສຽງໄກ່ກໍ່ຂັນສົ່ງຄອນຕອນເຊົ້າ ບຶດ ໜຶ່ງຕໍ່ມາແສງຕາເວັນກໍ່ພົ້ນຂອບຟ້າອອກມາສູ່ໂລກ ນາງຈຶ່ງລຸກ ຂຶ້ນ ມາສວ່າຍໜ້າຫາເຄື່ອງຄູ່ຈັນທອນ ແລ້ວກໍ່ຄຽວໜາກຈຶ່ງເອີ້ນ ນາງ ສະໜົມເຂົ້າມາຫາ.

ຝ່າຍນາງສະໜົມຮັບໃຊ້ ໄດ້ຍິນສຽງນາງເອີ້ນກໍ່ຟ້າວເຂົ້າມາ ຫາ ເພື່ອຄ່ອຍຮັບໃຊ້ນາງຕາມກິດຈະວັດປະຈຳວັນ, ເມື່ອນາງສະ ໜົມ ເຂົ້າມາຫານາງຈຶ່ງເວົ້າວ່າ ນາງໄດ້ຝັນປະຫລາດຫລາຍຄືນນີ້ຈຶ່ງໄດ້ ແກ້ຄຳຝັນນັ້ນສູ່ພວກນາງສະໜົມຟັງ. ຝ່າຍນາງສະໜົມຮັບໃຊ້ ໄດ້ ຟັງນາງແກ້ຄຳຝັນແລ້ວ ຈຶ່ງເວົ້າກັບນາງວ່າ ຝັນນີ້ຈຶ່ງຊົ່ນາງຊົມຄວາມ ສຸກອາຍຸໝັ້ນຂວັນຍືນ ນາງເທື່ອຈັກໄດ້ຜ່ານພົ້ນເປັນເຈົ້ານັ່ງ ປອງ ບ້ານເມືອງ. ອັນໜຶ່ງຮ້ອຍວ່າອິນຢູ່ຟ້າລົງມາພາຍໂພດຈັກໄດ້ສຸກ ຢູ່ ສ້າງເມືອງບ້ານນັ່ງປອງ ນາງຈຶ່ງສາທຸໂມທະນານຳການແກ້ຄຳ ຝັນ ຂອງນາງສະໜົມຂໍໃຫ້ສົມພອນປາກທຸກຢ່າງທຸກອັນທັ້ນຖອນ.

ເມື່ອນາງລຸນກ່າວຮັບພອນຈາກການແກ້ຄຳຝັນຂອງສະໜົມ ແລ້ວ ພວກຮັບໃຊ້ກໍ່ພາເຂົ້າພານນ້ຳມາໃຫ້ນາງສະຫວີຍນາງທັງສະຫວີຍ (ກິນ) ທັງຄຶດຮອດຄຳຝັນຈົນກືນເຂົ້າກໍ່ບໍ່ລົງ, ຍາມນອນກໍ່ໄດ້ຄຶດ ຫາ ເຈົ້າຂອງຮອດ ດອກໄມ້ນາງໄດ້ແຕ່ໃຫ້ສະອຶກສະອື້ນຢູ່ໃນບ່ອນ ຄືນ ດຽວດັ່ງບົດກອນຂຽນວ່າ

ເມື່ອນັ້ນນາງລຸນນ້ອຍ    ສາທຸການດອມໄພ່
ຂໍໃຫ້ໄດ້ດັ່ງຄຳປາກເຈົ້າ    ນາງເໜົ້າຊູ່ຄວາມ
ຄ້ອນວ່ານາງກ່າວແລ້ວ    ຍໍພາຮຽງພ່າງ
ສາວຍື່ນນ້ຳ    ຖວາຍເຈົ້າຢູ່ຊະລອນ ແທ້ແລ້ວ

ບັດນີ້ກ່າວເຖິງກາດຳນ້ອຍ ນອນພອຍຄຶດຮອດນາງແລ້ວ ພໍເຖິງຕອນເຊົ້າຍ່າກໍແຕ່ງພາເຂົ້າມາສູ່ທ້າວກິນ, ຫລັງຈາກກິນເຂົ້າກິນ ນ້ຳອີ່ມແລ້ວທ້າວກໍຄຶດຢູ່ໃນໃຈວ່າ ຢາກເຫັນໜ້ານາງລຸນຈະເຮັດວິທີໃດຈຶ່ງຈະໄດ້ເຫັນໜ້າຂອງນາງ, ທ້າວຈຶ່ງຖາມຍ່າວ່າຍ່າເອີຍນາງ ລຸນກໍເຄີຍມາທ່ຽວຫລິ້ນສວນແມ່ບໍ່? ຂ້ອຍຢາກເຫັນໜ້ານາງຫລາຍ ຍ່າເອີຍ. ແຕ່ນັ້ນຍ່າຈຶ່ງຫລັບຕາປົງຈຸ່ຍສີບໄປໃສ່ ພ້ອມທັງເວົ້າວ່າ ປາໂທບັກຂີ້ຮ້າຍ ມຶງບໍ່ຄຶດຂີ້ຮ້າຍຢາກເຫັນຟ້າທີ່ສູງ ນາງນັ້ນຍາມ ເມື່ອຍ່າງໄປມາພໍປານວ່ານາງທີ່ງພຸ້ມນ່າ ມຶງມາຊ່າງຄຶດສຳທາວແທ້ກູວ່າຕັ້ງແຕ່ຂໍ່ຄຳໝາກເພີ້ນຖິ້ມຖິ້ມມັນກໍຍັງງາມຍິ່ງກວ່າຫົວມຶງຕັ້ງຫລາຍເທົ້າ ມຶງບໍ່ຄຶດມິ່ນຮ້າຍປານລີງກາງເຫລົ້າ ສົມກັບມຶງມັນຕ້ອງ ແມ່ນພວກລີງພວກຄ່າງຢູ່ປ່າພຸນນ່າ ເລາະຫາກິນໝາກໄມ້ຕາງເຂົ້າ ຈຶ່ງສົມ.

ເຖິງຍ່າເຖົ້າຈະວ່າແນວໃດກໍຕາມ ທ້າວກໍຍັງຕື້ຖາມຍ່າບໍ່ ເຊົາທ້າວວ່າ ມື້ອື່ນໃຫ້ຍ່າເຂົ້າໄປເຊີນເພິ່ນອອກມາທ່ຽວຫລິ້ນສວນແມ່ ເນີໃຫ້ຍ່າບອກນາງວ່າດຽວນີ້ມີຂະໂມຍມາລັກກິນອ້ອຍຢູ່ສວນຂອງ ນາງເມື່ອນາງມາແລ້ວຂ້ອຍຫາກຊິຈອບເບິ່ງເອງດອກດັ່ງບິດກອນຂຽນວ່າ

ໃຫ້ຍ່າໄປເຊີນນ້ອຍ    ນາງງາມມາທ່ຽວ

ບອກວ່າມີຂະໂມຍລັກເຂົ້າ    ກິນອ້ອຍຢູ່ສວນ ນາງນັ້ນ
ຂ້ອຍຊິເຈາະປ່ອງຢ້ຽມ    ຄອຍດູຈອບເບິ່ງ ຍ່າເອີຍ
ເພາະຢາກເຫັນຮູບນ້ອຍ    ນາງຫລ້ານາດຖະແພງ ເຈົ້າເອີຍ

ຍ່າເຖົ້າໄດ້ຍິນຄຳທ້າວອ້ອນວອນແນວນັ້ນ ຄຶດໄປຄຶດມາກໍຄຶດຮອດຄຳຝັນອັນໜ້າອັດສະຈັນທີ່ຍ່າເຄີຍຝັນກ່ອນ ໄດ້ທ້າວກ່ຳກາດຈຳມາຢູ່ນຳ ດັ່ງນັ້ນຍ່າຈິ່ງບໍ່ຂັດຂືນຄຳອ້ອນວອນຂອງທ້າວ ຍ່າຈິ່ງຟ້າວລົງເຮືອນໄປໂດຍໄວ ມຸ່ງໜ້າໄປສູ່ທີ່ຜາສາດຂອງນາງລຸນ. ຍ່າໄດ້ຂຶ້ນຂາບທູນໃຫ້ນາງຮູ້ເຖິງສະພາບການທີ່ເກີດຂຶ້ນໃນສວນຍ່າວ່າດຽວນີ້ມີຂະໂມຍເຂົ້າລັກກິນອ້ອຍຢູ່ໃນສວນຂອງນາງໝົດໄປຫລາຍສຸ່ມແລ້ວ, ດັ່ງ ນັ້ນຂ້າເຖົ້າຈຶ່ງເຊີນນາງໄປເບິ່ງວ່າມັນແມ່ນໂຈນຝ່າຍໃຕ້ຫລືໂຈນ ຝ່າຍເໜືອກັນແທ້ ແລະອີກອັນໜຶ່ງກໍຕາງວ່າໄປທ່ຽວຫລິ້ນຊົມສວນ ນຳຂອງກິນໝາກໄມ້ສົ້ມຫວານໃນສວນມີທຸກຢ່າງຂ້າເຖົ້າທູນເຊີນຄັ້ງ ນີ້ຜິດຖືກປະການໃດຂໍໂຜດໄດ້ອະໄພແດ່ຖ້ອນ. ຍ່າທູນຕື່ມວ່າໄປເທື່ອ ນີ້ຂໍເຊີນເອື້ອຍທັງ 6 ນາງໄປພ້ອມນຳກັນທຸກພະອົງດັ່ງບິດາກອນ ຂຽນວ່າ

ຂ້ອຍເຖົ້າທູນບາດພື້ນ    ຂໍໂຜດຊົວດ
ຂໍໃຫ້ທານຄວາມສຸກ    ເພື່ອບຸນຈອມເຈົ້າ
ບໍ່ກົວ ປັນຍານ້ອຍ    ຄະນິງຫວນເຫັນຊອບ
ຜິດຖືກແທ້    ຂໍເຈົ້າໂຜດພາຍ ແດ່ຖ້ອນ
ເຊີນທັງອົງກະສັດເຈົ້າ    ເອື້ອຍພີ່ທັງຫົກ
ຂໍໃຫ້ໄປດູສວນ    ລໍ່າແລຍ່າຊາ

ພໍແຕ່ຍ່າທູນແລ້ວ ລາລົງໂດຍຮີບ
ຍ່າກໍລາຈາກຫ້ອງ ໂຮງກ້ວາງຕ່າວດີນ ເຈົ້າເອີຍ

ຫລັງຈາກຍ່າເຖົ້າຈຳສວນລາກັບເມືອແລ້ວ ນາງລຸນກໍໄປ ຊວນພວກເອື້ອຍໃຫ້ເມືອທ່ຽວສວນນຳ ນາງໄດ້ບອກໃຫ້ພວກເອື້ອຍຣູ້ວ່າ ດຽວນີ້ມີຂະໂມຍເຂົ້າມາລັກກິນອ້ອຍຢູ່ສວນ ຈຶ່ງຂໍເຊີນພວກເອື້ອຍທັງໝົດໄປເບິ່ງສວນຕາງວ່າ ໄປທ່ຽວຫລິ້ນນຳ, ເມື່ອຊຸມເອື້ອຍໄດ້ຣູ້ ດັ່ງນັ້ນແລ້ວຈຶ່ງຕົກລົງຈະໄປສວນກັບນາງລຸນໂດຍພ້ອມພຽງກັນ.

ນ້ລຸນມານາງທັງເຈັດກໍພາກັນອອກໄປສູ່ສວນຕາມຄຳຂາບທູນເຊີນຂອງຍ່າເຖົ້າ, ຂະບວນເດີນທາງໄປສູ່ສວນຂອງນາງລຸນແລະ ເອື້ອຍທັງຫົກເປັນຂະບວນອັນມ່ວນຊື່ນສະໜຸກສະໜານແລະມີລະບຽບຮຽບຮ້ອຍດີ, ພໍແຕ່ຂະບວນເຄື່ອນໄປຮອດສວນຍ່າເຖົ້າກໍຈຳໃຫ້ທ້າວ ກ່ຳກາດຳເຂົ້າໄປລີ້ຢູ່ແຈເຮືອນ ທັງບອກວ່າມຶງຢ່າ ເໜັງຢ່າຕິງ ຫ້າມບໍ່ໃຫ້ເບິ່ງໜ້ານາງເດັດຂາດ ຖ້າພວກນາງເຫັນໂຕມຶງແລ້ວເພິ່ນ ຊິຢ້ານຈື່ໄວ້ດີໆ. ບຶດໜຶ່ງຂະບວນຂອງພວກເອື້ອຍກໍຍ່າງກາຍ ເຮືອນນ້ອຍຂອງຍ່າໄປ ພວກນາງທັງໝົດໃຜໆກໍເອີ້ນຫາຍ່າຈຳສວນວ່າຍ່າໆເອີຍເຈົ້າບໍ່ໄປເລາະເບິ່ງສວນນຳພວກເຮົາບໍ ຄັນຊິໄປກໍຮີບມາຟ່າຍຍ່າຈຳສວນຈຶ່ງຂານຮັບວ່າ ໂດຍຂ້ານ້ອຍຈະໄປດຽວນີ້ແຫລະ ເວົ້າແລ້ວຍ່າຈຳສວນກໍກຽມໂຕລົງເຮືອນກໍພໍດີຂະບວນນາງລຸນ ມາ ຮອດເມື່ອນາງມາຮອດກໍຢຸດຢູ່ຄາວໜຶ່ງນາງໄດ້ແນມລອດປ່ອງຝາ ເຮືອນເຂົ້າໄປແຕ່ນາງກໍບໍ່ເຫັນມີໃຜຢູ່ໃນເຮືອນນັ້ນເລີຍ, ຕໍ່ຈາກນັ້ນນາງຈຶ່ງຍ່າງມຸ່ງໜ້າໄປສູ່ສວນ.

ສຳລັບທ້າວກ່ຳກາດຳພູລຢູ່ແຈເຮືອນນັ້ນ ໄດ້ເຫັນນາງລຸນສົມ ກັບຄວາມຕັ້ງໃຈແລະຍອມຮັບວ່ານາງລຸນເປັນຄົນງາມອິຫລີ ທ້າວ ຈຶ່ງອຶດປາກບໍ່ໄດ້ເລີຍເອີ້ນຖາມນາງລຸນດັ່ງບົດກອນຂຽນວ່າ

ທ້າວກໍອຶດບໍ່ໄດ້ ເອີ້ນປາກ ຕໍແຍ

ສາຍໃຈເອີຍ ພີ່ຈີ ໄປຄອມນ້ອງ

ທ້າວກໍປາກຈ້ອຍໆ ອ້ອຍອິ່ນຍິນສະອອນ

ເໝືອນດັ່ງສຽງອິນພົມ ຟາກສະຫວັນເມືອງຟ້າ

ນາງລຸນໄດ້ ຍິນສຽງທ້າວປາກ ມານັ້ນ

ອັນວ່ານາງນາດນ້ອຍ ລືມຍ້າຍຍ່າງໄປ

ນາງກໍຕົກກະເຫີນຍ້າຍ ຍໍຕີນຄ້າງຢູ່

ນາງກໍປາກບໍ່ໄດ້ ຍິນຄ້ອຍຄັ່ງທວງ

ນາງຈຶ່ງຮອມສະຕິໄດ້ ຮອມໃຈໜ້ອຍໜຶ່ງ

ແລ້ວຈຶ່ງຍົກຍ່າງຍ້າຍ ໄປຕາມເອື້ອຍພີ່ຕົນ

ເມື່ອນາງລຸນໄປຮອດສວນກໍໄດ້ພົບວ່າມີຮອຍຂະໂມຍ ເຂົ້າມາລັກກິນອ້ອຍໃນສວນຂອງນາງແທ້. ຊຸມພວກເອື້ອຍທັງຫລາຍຈຶ່ງເວົ້າຢອກເຍີຍນາງລຸນວ່າ ໂອຍ... ຈ່າງມີໂຈນມີຂະໂມຍເຂົ້າລັກກິນ ອ້ອຍແຕ່ສວນນ້ອງຜູ້ດຽວແທ້ນໍ ສວນພວກເອື້ອຍຍັງດີຢູ່ຊູ່ແຫ່ງ ຢ້ານແຕ່ ຊູ້ເກົ່ານ້ອງມາລັກເຂົ້າກິນແທ້ໃດ, ນາງລຸນໄດ້ຕອບພວກເອື້ອຍວ່າ ຄັນແມ່ນຊູ້ເກົ່ານ້ອງມາລັກກິນນັ້ນກໍຢ່າດອກຢ້ານແຕ່ຊູ້ເກົ່າຂອງ ພວກເອື້ອຍຫັ້ນແລ້ວມາລັກກິນອ້ອຍໃນສວນຂອງນ້ອງ, ເວົ້າແລ້ວຕ່າງກໍພາກັນຫົວເປັນແຊວງຂຶ້ນ, ພວກຮັບໃຊ້ທີ່ໄປນຳກໍຈັດຫາອ້ອຍແລະເຄື່ອງ

ສົ້ມຂອງຫວານຕ່າງໆຢູ່ໃນສວນມາຖວາຍບາງພ່ອງກໍເກັບດອກໄມ້ອັນ
ມີກິ່ນຫອມຫວານມາຖວາຍແກ່ພວກນາງ, ນາງລຸນແລະເອື້ອຍນ້ອງກັນ
ຫລິ້ນມ່ວນຢູ່ໃນສວນຈົນຕາເວັນຄ່ຳຄ້ອຍຈຶ່ງພາກັນອອກເດີນທາງ ກັບ
ຄືນທີ່ຜາສາດ. ກ່ອນຈະອອກຈາກສວນຍັງ ໄດ້ເອີ້ນ ເຊີນຂວັນຂອງ
ທຸກໆຄົນໃຫ້ກັບຄືນສູ່ບ້ານສູ່ເຮືອນໂດຍສະເພາະແມ່ນຂວັນນາງລຸນ**ຕົວ**
ບົດກອນຂຽນວ່າ

ເມືອເຢີຂວັນແກ່ນແກ້ວ　ນາງພີທັ້ງຫລາຍ
ຢ່າໄດ້ຫລົງພອຍພັດ　ຢູ່ສວນກົວຢ້ານ
ເມືອເຢີຂວັນລຸນຫລ້າ　ໂສພາແພງພີ ກູເອີຍ
ເມືອສູ່ຜາສາດທອງ　ທີ່ແກ້ວຂ່າຍມະນີ
ເຈົ້າຢ່າໄດ້ຢູ່ລີ້　ໃນປ່າກາງສວນ
ກັບທັງຂວັນຂະໂມຍລັກ　ລອບກິນຍັງອ້ອຍ
ຢ່າໄດ້ຫລົງຫລອຍເຂົ້າ　ຂະໂມຍກິນຫລາຍເທືອ ເລີງເດີ
ເມືອຢູ່ຜາສາດກວ້າງ　ດອມນ້ອຍນາດຖະລຸນ ພີເດີ

ຫລັງຈາກເອີ້ນຂວັນແລ້ວພວກເອື້ອຍທັງຫົກກໍຍ່າງອອກກ່ອນ ກາຍ
ເຮືອນຍ່າເຖົ້າໄປ, ນາງລຸນນັ້ນຍ່າງຕາມຫລັງພໍມາຮອດເຮືອນ ຍ່າ
ເຖົ້ານາງລຸນກໍສ່ອງລອດຝາເຮືອນເຂົ້າເບິ່ງທາງໃນ ຈຶ່ງເຫັນແຕ່ ພໍ
ມັນມູ້ມັນມ້າຍບໍ່ທັນແຈບກໍໃຈຈິດ ແຕ່ປານນັ້ນນາງກໍຍັງຕົກຂະນ່າ ໃຈ
ຈົນລືມຮອດຖືກຂາ.

ສ່ວນວ່າທ້າວກ່ຳກາດຳຜູ້ລັກເບິ່ງນາງນັ້ນ ກໍໄດ້ເຫັນນາງລຸນ ຄັກ
ແທ້ຄັກວ່າ ແລະຮູ້ວ່ານາງລຸນເປັນຄົນງາມອີຫລີງາມທັງກາຍແລະໃຈ

ພຽບພ້ອມດ້ວຍກິລິຍາທ່າທາງທຸກຢ່າງເຮັດໃຫ້ທ້າວກ້ຳກາດຳ ຫລົງໄຫລໃນຄວາມງາມຂອງນາງຈົນທ້າວອົດບໍ່ໄດ້ຈຶ່ງເອີ້ນບອກຕໍ່ແຍ ວ່າສາຍຄິເອີຍອ້າຍຊິເມືອນຳນ້ອງ, ທ້າວ ໄດ້ເວົ້າກ້ຽວພາລາສີ ນາງຫລາຍວາດຫລາຍເຊີງເຮັດໃຫ້ນາງລຸ່ມເກັບເອົາໄປນອນຄຶດ ເຖິງທ້າວບໍ່ລືມ, ນາງຮູ້ສຶກເສຍໃຈທີ່ເຫັນທ້າວບໍ່ຄັກບໍ່ແນ່ຈັກວ່າເປັນຜູ້ຈີບຜູ້ງາມປານໃດເດນໍ ເຈົ້າຂອງຮວດດອກໄມ້ພູນ.

## ໙. ບັ້ນພຣະຍາໃຫ້ຊອກຫາເຈົ້າຂອງສຽງແຄນ

ມື້ນັ້ນຫລັງຈາກທ້າວກ່ຳກາດຄຳກັບຍ່າເຖົ້າຈຳສອນພາກັນ ກິນເຂົ້າແລງອິ່ມແລ້ວ, ພໍຕົກຕອນຄ່ຳທ້າວຈຶ່ງເວົ້ານຳຍ່າເຖົ້າວ່າ ຍ່າເອີຍ ຄືນນີ້ເຮົາຊິໄປທ່ຽວຫລິ້ນນຳໝູ່ຢູ່ໃນເມືອງຕາງວ່າໃຫ້ຊື່ນອົກຊື່ນ ໃຈ ບາງເທື່ອພົບພວກຜູ້ບ່າວສ່ຳນ້ອຍຊິລືມເອົາມາໃຫ້ຍ່ານຳ. ຝ່າຍ ຍ່າເຖົ້າໄດ້ຟັງທ້າວເວົ້າແນວນັ້ນກໍ່ສົ່ງສຽງປ້ອຍອອກມາວ່າ ໂອຍ ບັກຕາຍເວນມຶງເອີຍ ມຶງຊິໄປທາງໃດອີກຍັງວ່າໃຫ້ມຶງລີ້ຢູ່ໃນເຮືອນ ນີ້ນ່າ ມຶງພັດຊິໄປເລາະບ້ານໃຫ້ເພິ່ນເຫັນຮູບຮ້າຍຂອງມຶງແນວ ໃດ ແຕ່ທ້າວກໍຍັງເວົ້ານຳຍ່າວ່າຈະຕ້ອງໄປທ່ຽວໃຫ້ໄດ້. ຍ່າຈຶ່ງຮ້າຍຕື່ມວ່າກູຫ້າມແນວໃດມຶງກໍບໍ່ຍອມຟັງນໍ ຊິໄປກໍໄປໂລດແຫລະຕາມແຕ່ໃຈຂອງມຶງ ດັ່ງບົດກອນຂຽນວ່າ

ໄປກໍໄປຖ້ອນ    ບັກໝາໂຮແຮງໂຕ່ ມຶງເອີຍ
ມຶງນີ້ຄື້ນຂຮາຍ    ບໍ່ມີ້ມປາກໝາ    ດອກໝາ
ກູນີ້ຢານວ່າໝາເຫັນແລ້ວ    ມັນຊິໂວຫອນເຫົ່າ
ເຂົາວ່າໝາໄລ່ເນື້ອ    ຄືນຊິຫຸ້ນໄລ່ນຳ ແທ້ໃດ

ທ້າວໄດ້ຍິນຍ່າເວົ້າແນວນັ້ນກໍເລີຍຫົວອັກໆຂຶ້ນພ້ອມທັງເວົ້າ ກັບຍ່າວ່າ ປະສາໝາຊິໄປຢ້ານມັນບ່ອນໃດເດຍ່າເອີຍ. ວ່າແລ້ວທ້າວກໍລົງເຮືອນມຸ່ງໜ້າໄປສູ່ໃນເມືອງ ພໍໄປເຖິງທາງຈະເຂົ້າສູ່ ຕົວເມືອງກໍພົບວ່າມີປະຕູເມືອງຕັນໄວ້ຢ່າງແໜ້ນໜາ ທ້າວຈຶ່ງພິຈາລະນາເບິ່ງຄັກໆແລ້ວ ກໍທະຍານຂ້າມປະຕູເຂົ້າໄປຢ່າງສະບາຍພໍ ຕົກ

ເຂົ້າສູ່ຕົວເມືອງ ກໍໄດ້ຍິນສຽງບ່າວສາວຫລິ້ນຢູ່ເປັນແຊວໆ, ບາງພ່ອງກໍເວົ້າກ້ຽວຊູ້ກ້ຽວສາວກັນ, ບາງພ່ອງກໍຈັບແຂນຫິ້ນແອວ ກັນຫລິ້ນ, ບາງພ່ອງມອດໄຟໄວ້ແລ້ວກໍເວົ້າລົມອ້າຍບ່າວ, ບາງພ່ອງ ພັດຈັບຈຶ້ມເວົ້າມືພັດຕ້ອຍໃສ່ນົມກົນ.

ທ້າວກ່ຳກາດຳກໍເລາະຫລິ້ນຮ່ວມນຳພວກເຂົາດ້ວຍຄວາມ ມ່ວນຊື່ນ ທັງໄດ້ເຫັນບ່າວສາວເຫລົ່ານັ້ນ ຫລິ້ນມ່ວນຊື່ນຫລາຍວາດຫລາຍເຊີງ ທ້າວແນມໄປທາງເໜືອໄດ້ເຫັນແສງໄຟ ຮຸ່ງເຈື່ອນເທື່ອນ ເປັນກອງໄຟລົງຂ່ວງ ທ້າວຈຶ່ງຄ່ອຍໆຈອບເຂົ້າ ໄປເບິ່ງໃກ້ໆຈຶ່ງເຫັນສາວສ່ຳນ້ອຍພວມພາກັນລົງຂ່ວງເຂັນຝ້າຍ, ແລ້ວກໍເຂົ້າໄປຫາທັງພ່ອງເວົ້າກ້ຽວຮັກກ້ຽວມັກວ່າຈະເອົາສາວສ່ຳ ນ້ອຍເມືອເປັນເມຍຮ່ວມນອນ. ຊຸມພວກສາວລົງຂ່ວງໃພງກໍເວົ້າ ຕອບທ້າວວ່າ ມຶງນີ້ເດັກນ້ອຍໆເວົ້າໃຫ່ຍເກີນໂຕແທ້ນໍ ຫົວບໍ່ພຽງກາງຂາວ່າຈະເອົາເມຍຊ້ອນ ມຶງຄືບໍ່ຫາເວົ້າຫາລົມໃຫ້ມັນສົມສ່ວນກັບໂຕ ມຶງແມ່ ສິ່ງມາເວົ້າວ່າຈະເອົາໝົດທຸກໆຄົນບໍ່ເດກູບໍ່ຫ່ອນຮູ້ຊ້ຳພັດເລື່ອມາເຫັນ ຄົນອື່ນຫຍັງດຳໆດີມນິນຄືກາໂຕຮ້າຍ ມຶງຢ່າຢູ່ຫັ້ນເນີ້ໜີໄປ ໃຫ້ໜີດຂ່ວງຂອງພວກກູດຽວນີ້ ຈັກໜ້ອຍມັນຊິຕິດເປື້ອນຂ່ວງຂອງພວກກູໄປໆໜີໄປ. ແຕ່ທ້າວພັດເວົ້ານຳພວກເຂົາວ່າເປັນສັງຈຶ່ງຄຽດໃຫ້ອ້າຍ ຫລືວ່າຢ້ານອ້າຍບໍ່ເອົາຈັ້ນບໍ? ເຊື່ອໂລດນ່າອ້າຍເວົ້າແທ້ ເອົາແທ້ໃດ, ພວກສາວສ່ຳນ້ອຍໄດ້ຍິນທ້າວເວົ້າແນວນັ້ນຍິ່ງຄຽດຕື່ມ ຈຶ່ງຈັບເອົາໂດ້ນໄຟໄລ່ຈູດທ້າວແລ້ວທ້າວກໍທຳທ່າແລ່ນໜີ ເຂົາກໍ ໂຍ້ນໂດ້ນໄຟໄລ່ຕາມຫລັງ, ທ້າວກາດຳໄດ້ຫລົບໂຕເຂົ້າໃນຝູງຜູ້ບ່າວ ແຕ່

ວ່າໂຕຂອງທ້າວບໍ່ສູງພຽງຮອດແອວເຂົາຊ້ຳ ແລ້ວກໍຂໍຢືມແຄນ ນຳ
ເຂົາມາເປົ່າ ດັ່ງບົດກອນຂຽນວ່າ

ແຕ່ນັ້ນກາດຳນ້ອຍ ຢືມແຄນເຂົາເປົ່າ
ຂ້ອຍກໍຂໍເປົ່າຫລິ້ນ ດອມອ້າຍບ່າວພີ່ຊາຍ ແດ່ຖ້ອນ
ທ້າວກໍປາກຈ້ອຍໆ ເຂົາເລົາເລີຍຖາມ
ນຶ້ງນລູກທີໃດມາ ຢາກເປົ່າແຄນກູ້ນ
ເມື່ອນັ້ນກາດຳນ້ອຍ ຈະຕໍ່ຊາຍໂຖງ
ຂ້ອຍກໍຫລົງພອຍມາ ຢູ່ດອນຍາຍເຖົ້າ
ຂ້ອຍກໍຫລົງມາຄ້າງ ຫລາຍວັນໄດ້ຂວບ ດີນແລ້ວ
ມັ້ນຄິດໄດ່ມາແອ່ວຫລິ້ນ ດອມເຈົ້າເປົ່າແຄນ ອ້າຍເອີຍ
ຂ້ອຍກໍຢືມແຄນເຈົ້າ ຕາງລອງຮຽນເປົ່າ ດູ້ນ
ຄັນຫາກເປົ່າບໍ່ເປັນແທ້ງ ຊິຄືນໃຫ້ບໍ່ຂືນ ດອກນາ

ເມື່ອໄດ້ຮູ້ຄືແນວນັ້ນແລ້ວພວກຜູ້ບ່າວຈຶ່ງເອົາແຄນຢືນໃຫ້ທ້າວເປົ່າ ລອງເບິ່ງ ທ້າວຈຶ່ງຟ້າວຮັບເອົາແຄນທັນທີ ໄດ້ແຄນແລ້ວທ້າວກໍ ຢືນລູກຂຶ້ນອີນເຕົ້າເປົ່າແຄນ ທ້າວກໍນັບລູກນ້ອຍລູກໃຫ່ຍຂານກັນໄປຕາມ ຈັງຫວະອັນມ່ວນອອນຊອນດັ່ງບົດກອນຂຽນວ່າ

ທ້າວກໍເປົ່າຈ້ອຍໆ ອ້ອຍອີ່ນຍິນສະອອນ
ພູຫອນບາ ເປົ່າແຄນສຽງຈ້ອຍ
ສຽງແຄນທ້າວ ບາຄານແມ້ງມ່ວນ
ຕັ້ງວ່າສຽງມ່ວນແມ້ງ ພໍຫລົ້ມຫລູດໃຈ
ສຽງແຄນດັ່ງຈັ້ນງ ປານສຽງເສບເມືອງສະຫວັນ

ຝູງໝູ່ຊາຍໂຖງເຂົາ    ຊູ້ຄົນຟັງຫ້າວ

ອັນວ່າຊາວເມືອງພ້ອມ    ກັນຟັງສະຫງັດຢູ່

ຝູງໝູ່ສາວສ່ຳນ້ອຍ    ລືມແຄ້ວງແກ່ວງຫລາ

ພໍແຕ່ທ້າວເປົ່າແຄນ ສຽງຂອງແຄນກໍດັງກ່ອມອາລົມຈິດຂອງຜູ້ໄດ້ຍິນ ຊາວບ້ານຊາວເມືອງໃຜໆກໍສະຫງັດກັນໝົດເມື່ອໄດ້ຍິນ ສຽງແຄນຂອງທ້າວຈົນວ່າບໍ່ຢາກທັນໃຈແຮງຢ້ານມັນຈະລົບກວນ ຄວາມມ່ວນຄວາມອອນຊອນ ຂອງສຽງແຄນ. ພວກສາວສ່ຳນ້ອຍຫລິງ ຂ່ວງເຂັນຝ້າຍໄດ້ຍິນກໍເຊົາເຂັນຝ້າຍພາກັນແລ່ນແຕກໂຄບງໄປຫາ ບ່ອນເປົ່າແຄນ ແລ່ນດຳມືດເຕະສະດຸດຫົວປັກຫົວຂວ້ຳຕີນແຕກຕີນ ບາດເລືອດຍ້ອຍເລືອດຫລັ່ງ ສົ້ນຫລຸດອອກຈາກຕີງເຣີ່ຍຊະເຣີ່ຍຊາຍບາງຄົນນ້ຽນຫລານ້ຽນເປຍກໍບໍ່ທັນຟ້າວຫລາຍໂພດ ບາງຄົນລືມນຸ່ງ ຮອດເສື້ອຟ້າວໄປນຳໝູ່, ໄປຮອດແລ້ວກໍພາກັນນັ່ງຟັງບໍ່ປາກບໍ່ໄອບໍ່ຈາມ ຟັງແທ້ຟັງວ່າ ເພາະສຽງແຄນນັ້ນມ່ວນແທ້ມ່ວນ ວ່າ.

ສຽງແຄນຂອງທ້າວກ່ຳກາດຳດັງກ່ອມຂຶ້ນໄປເຖິງຫູຂອງພະ ຍາເມືອງຜູ້ເປັນພໍ່ຂອງນາງລຸນທີປະທັບຢູ່ໃນຫໍພາສາດລາຊະມຸນ ທຽມສຽງແຄນຂອງທ້າວເຮັດໃຫ້ພະຍາເມືອງມີຄວາມອອນຊອນ ມ່ວນແມ້ງປານວ່າໃຈຊິຂາດ, ດັ່ງນັ້ນພະອົງຈຶ່ງສັ່ງໃຫ້ເສນາໄປນຳ ເອົາເຈົ້າຂອງສຽງແຄນນັ້ນມາຫາພະອົງສັ່ງວ່າ ໄປເອົາມັນມາເປົ່າ ໃຫ້ຟັງຢູ່ພີ້ດູ. ພວກເສນາຈຶ່ງຟ້າວໄປຊອກຖາມຫາຜູ້ເປົ່າແຄນ (ທ້າວກ່ຳກາດຳ) ນຳພວກຜູ້ບ່າວທັງຫລາຍວ່າ ແມ່ນໃຜມາເປົ່າແຄນນຳສູ້ມື້ນ ຄືວ່າເປົ່າມ່ວນແທ້ງດ້ຽວມັນຢູ່ໃສ? ພວກຜູ້ບ່າວທັງຫລາຍຈຶ່ງ ບອກ

ເສນາວ່າ ບໍ່ຮູ້ວ່າມັນແມ່ນໃຜ ມັນຫາກມາຂໍເປົ່ານຳພວກຖູງ ກໍເອົາ ໃຫ້ມັນເປົ່າລອງເບິ່ງຕັ້ງວ່າສຽງມ່ວນອອນຊອນອິຫລິ ເມືອເປົ່າແລ້ວ ມັນກໍເອົາແຄນສົ່ງຄືນ ບໍ່ຮູ້ວ່າມັນຫລົບຫນີໄປທາງໃດ.

ຈາກນັ້ນ, ໃຜໆກໍພາກັນສົນລະວົນຊອກຫາທ້າວກ່ຳກາດກຳເຈົ້າຂອງ ສຽງແຄນ ແຕ່ວ່າຊອກຫາທາງໃດກໍບໍ່ພໍ້, ດັ່ງນັ້ນ, ພວກເສນາຈຶ່ງຟ້າວ ພາກັນກັບຄືນສູ່ວັງ ເພືອຂາບທູນຕໍ່ພະຍາເມືອງວ່າພວກຕົນໄດ້ ຊອກ ຫາເຈົ້າຂອງສຽງແຄນຈົນອິດເມືອຍກໍບໍ່ເຫັນບໍ່ຮູ້ວ່າໄປທາງໃດ, ຖາມ ພວກຜູ້ບ່າວເຂົາກໍບອກແຕ່ວ່າມັນມາຂໍເປົ່ານຳ ເປົ່າແລ້ວມັນ ກໍສົ່ງ ແຄນຄືນບໍ່ຮູ້ວ່າມັນຫລົບຫນີໄປທາງໃດແທ້. ເມືອພະອົງໄດ້ຟັງ ການ ຂາບທູນຂອງເສນາຄືແນວນັ້ນຈຶ່ງໄດ້ແຕ່ຈົ່ມວ່າໂອຍເສຍໃຈແດ່ ບໍ່ໄດ້ ຟັງສຽງແຄນນັ້ນໃກ້ງສົມດັ່ງໃຈຄຶດເອົາໄວ້.

24/VII

## ໑໖ ບັ້ນທ້າວກ່ຳກາດຳຖອດ ດາບໄວ້ແລ້ວເຂົ້າໄປຫານາງລຸນ

ຄືນນັ້ນຫລັງຈາກທ້າວເອົາແຄນສົ່ງໃຫ້ພວກຜູ້ຍ່າວແລ້ວ ທ້າວກໍຫລີບອອກຈາກພວກເຂົາໜີໄປຫານາງລຸນຢູ່ໃນທີ່ພາສາດ. ພໍແຕ່ທ້າວເຂົ້າໄປເຖິງລະບຽງທີ່ພາສາດປັງເອີນພວກສາວສະໜົມຮັບໃຊ້ຂອງນາງລຸນມາເຫັນກ່ອນ ເຂົາຈຶ່ງໄປລາຍງານໃຫ້ນາງລຸນຮູ້ວ່າມີຄົນລັກເຂົ້າມາໃນທີ່ພາສາດ, ຝ່າຍນາງລຸນ ໄດ້ຟັງລາຍງານກໍຄຶດສົງໄສ ວ່າແມ່ນເຈົ້າຂອງຮອດ ດອກໄມ້ ໄດ້ມາຫານາງ. ດັ່ງນັ້ນນາງຈຶ່ງສັ່ງ ໃຫ້ສາວສະໜົມນຳເອົາຂັນໝາກໄປຖວາຍທ້າວ, ພວກສາວສະໜົມຈຶ່ງນຳເອົາຂັນໝາກອອກໄປຖວາຍ ແຕ່ວ່າທ້າວບໍ່ຍອມແຕະຕ້ອງ ຂັນໝາກແລະກໍບໍ່ຍອມເວົ້າຍອມຈາໃດໆທັງສິ້ນ. ສາວສະໜົມເຫັນອາການດັ່ງນັ້ນຈຶ່ງເຂົ້າມາລາຍງານຕໍ່ນາງລຸນ ທັງບອກຕື່ມວ່າ ຮູບຮ່າງຂອງທ້າວນັ້ນເບິ່ງແລ້ວບໍ່ຄືຄົນຈັກດີ້ລິງກັງຕາຍຊາກນແທ້ລະ. ໃນຂະນະນັ້ນທ້າວກ່ຳກາດຳກໍໄດ້ແອບລັກຟັງສາວສະໜົມກັບນາງລຸນລົມກັນຄ່ອຍໆຢູ່ໃນຫ້ອງ.

ເພື່ອຄວາມແນ່ໃຈນາງລຸນຈຶ່ງໃຊ້ສາວສະໜົມກັບອອກໄປເບິ່ງຕື່ມອີກເທື່ອໜຶ່ງ, ຖ້າເຫັນຄັກແນ່ແລ້ວໃຫ້ເຊີນທ້າວເຂົ້າມາຫາ ເມື່ອພວກສາວສະໜົມກັບອອກໄປເບິ່ງ ເທື່ອນີ້ບໍ່ເຫັນທ້າວຢູ່ບ່ອນນັ້ນອີກແລ້ວດັ່ງນັ້ນສາວສະໜົມຈຶ່ງກັບເຂົ້າມາລາຍງານຕໍ່ນາງລຸນວ່າບໍ່ເຫັນທ້າວບໍ່ຮູ້ວ່າໄປທາງໃດກັນແທ້. ຄວາມຈິງແລ້ວຕອນນັ້ນທ້າວກ່ຳກາດຳໄດ້ ຖອດ

ຄາບອັນຂີ້ຮ້າຍຂອງທ້າວອອກມ້ຽນໄວ້ແລ້ວກໍລັກເຂົ້າໄປຢູ່ໃນ ບ່ອນນອນຂອງນາງລຸນກ່ອນ ໂດຍບໍ່ມີໃຜເຫັນແມ່ນແຕ່ນາງລຸນເອງກໍ ບໍ່ເຫັນ.

ເມື່ອນາງລຸນໄດ້ຮັບລາຍງານວ່າບໍ່ເຫັນທ້າວຢູ່ລະບຽງຜາ ສາດ ນາງຈຶ່ງສັ່ງໃຫ້ສາວສະໜົມທຸກຄົນ ໄດ້ໄປເບືອງຊອກຫາທ້າວ ທົ່ວພາຍໃນຫໍຜາສາດ ສຳລັບນາງລຸນເອງກໍໄດ້ໄປຊອກຄືກັນ. ພໍແຕ່ນາງໄດ້ໄປຮຸ່ງຂຶ້ນກໍເຫັນທ້າວນັ່ງຢູ່ຂ້າງງຈິນນາງລຸນຕົກໃຈລືມສະຕິດັ່ງບົດກອນຂຽນວ່າ

ນາງລຸນໄດ້ ໂດນໄປເຮືອງເຮືອ<br>
ມີທັງຫຽນເຮືອໄດ້ ເຫັນທ້າວນັ່ງຫຽນ<br>
ນາງກໍຕົກສະເທີນຄ້າງ ຫລົງໃຈລືມເພດ<br>
ນາງກໍປາກບໍ່ໄດ້ ເຫັນທ້າວພະຍອດອິນ

ທ້າວກ່ຳກາດຳໄດ້ໂອກາດກໍໂຊມເອົານາງມາກອດມາຈູມ ຕາມຫົວໃຈຂອງທ້າວຮຽກຮ້ອງຕ້ອງການ, ນາງລຸນໄດ້ໄຕ່ຖາມເຖິງ ຊື່ສຽງຮຽງນາມແລະ ບ້ານເກີດເມືອງນອນຂອງທ້າວ. ດັ່ງນັ້ນທ້າວຈຶ່ງໄດ້ບອກຄວາມຈິງໃຫ້ນາງຮູ້ວ່າ ທ້າວມີຊື່ວ່າກ່ຳກາດຳເປັນ ຊາວເມືອງອິນທະປັດຖະນະຄອນ ແຕ່ຍ້ອນຄຶດຮອດຫານາງຈຶ່ງໄດ້ພັດພາກຈາກບ້ານເກີດເມືອງນອນພະເນຈອນມາ ໄດ້ຫລາຍຂວບແລ້ວ ດຽວນີ້ໄດ້ພັກພາອາໄສຢູ່ນຳຍ່າເຖົ້າຈຳສອນ.

ທ້າວກ່ຳກາດຳໄດ້ເວົ້າກັບນາງລຸນວ່າ ບັດນີ້ໄດ້ພົບຄົນງາມຄືນ້ອງ ຂໍນ້ອງຈົ່ງອີດູສົງສານ, ຢ່າໄດ້ເຫັນແຕ່ຮ່າງອັນຜາງຮ້າຍຂອງອ້າຍ ທີ່

ມັນຄືລີງຄືຈະມີຢູ່ຕາມດົງຕາມປ່ານາງເອີຍ. ແນວໃດກໍຕາມ ດຽວນີ້ຕົວຂອງອ້າຍຄືກັບລີງກາງໜອງຢຽບເຕົ່າຄັນຈີ່ຖືກຕົນອອກກໍພໍ ກະເຫັນເພາະຫົວໃຈມັນຍັງຮຽກຮ້ອງຢູ່.

ຝ່າຍນາງລຸນ ໄດ້ຍິນທ້າວ ເວົ້າບໍາຄືແນວນັ້ນນາງຈຶ່ງຕອບທ້າວດ້ວຍຄວາມຈິງໃຈພ້ອມທັງຍິ້ມນິ້ມຍິບຕໍ່ທ້າວ ທັງເວົ້າວ່າຂໍໂທດຂໍອະໄພ ນຳທ້າວທີ່ນາງບໍ່ທັນ ໄດ້ເຫັນທ້າວແຕ່ທຳອິດທີ່ເຂົ້າມາຫາ ເພາະວ່າມັນມືດໂພດແນວໃດກໍຕາມເມື່ອ ໄດ້ຮູ້ແລ້ວກໍຂໍເພິ່ງບຸນສົມພານຂອງທ້າວຝ່າຍທ້າວກ່ຳກາດຳກໍ ໄດ້ເວົ້າອີ່ນອ້ອຍຄອມນາງຢູ່ໃນບ່ອນ; ເບິ່ງຮູບ ໂສມຂອງທ້າວແລະນາງມັນຊ່າງສົມກັນແທ້ກັນວ່າ. ທັງສອງລົມກັນ ດ້ວຍຄວາມສຸກສົດຊື່ນຢູ່ຈົນເຖິງເວລາທ່ຽງຄືນ ທ້າວຈຶ່ງ ໄດ້ສັ່ງນາງວ່າຈະໄດ້ກັບຄືນເມືອເຮືອນຢູ່ສວນທາຍ່າເຖົ້າດັ່ງບົດກອນຂຽນວ່າ

ແຕ່ນັ້ນກາດຳນ້ອຍ　　ຖະແຫລງຄຳຕ້ານສັ່ງ
ຂ້ອຍຈັກລາຈາກເຈົ້າ　　ແພງລ້ານດ່ວນເມືອ ກ່ອນແລ້ວ
ຄ່ອຍຢູ່ດີເຍີນາງລຸນຫລ້າ　　ຂະເລີຍໃຈເຈົ້າພີ່ ແພງເອີຍ
ເຈົ້າຢ່າຄຶດຫລອກລໍ້　　ລວງອ້າຍກ່ຳກາ ພີເນີ

ຫລັງຈາກສັ່ງນາງລຸນແລ້ວທ້າວກໍອອກ ໄປຫາລະບຽງພາສາດບ່ອນທີ່ທ້າວ ໄດ້ຖອດຄາບປະ ໄວ້, ທ້າວ ໄດ້ເອົາຄາບນັ້ນສຸບໃສ່ໂຕຄືນ ຮຽບຮ້ອຍແລ້ວກໍຍ່າງມຸ່ງໜ້າ ໄປສູ່ປະຕູເມືອງ ພໍໄປເຖິງກໍທະຍານ ຂ້າມປະຕູເມືອງອອກ ໄປຢ່າງສະບາຍ. ເມື່ອທ້າວກັບເຖິງເຮືອນຢູ່ ໃນສວນທ້າວກໍເອີ້ນໃຫ້ຍ່າລຸກມາ ໄຂປະຕູເອົາທ້າວ ໄດ້ເອີ້ນໃສ່ຍ່າວ່າຍ່າເອີຍລຸກມາ ໄຂປະຕູເອົາແນ່ຂ້ອຍມາຮອດແລ້ວ, ຝ່າຍຍ່າເຖົ້າ ໄດ້ ຍິນ

ສຽງທ້າວເອີ້ນກໍຟ້າວລຸກມາໄຂປະຕູເອົາ ແຕ່ປະຕູຍ່າເຖົ້າພັດມີສຽງ
ດັງຕ່າງເມື່ອພວມໄຂພັດມີສຽງດັງແອດໆບາດທ້າວເຂົ້າໄປພົ້ນ ແລ້ວ
ບາດວັບພັດສຽງດັງວັບໆຈຶ່ງເຮັດໃຫ້ທ້າວກໍ່າກາດຄຳຫົວຂວັນສຽງ ປະ
ຕູຂອງຍ່າທັງເວົ້າວ່າ. ຍ່າເອີຍປະຕູຂອງເຈົ້າເປັນຫຍັງສຽງດັງຕ່າງ
ແຕ່ກ່ອນແທ້?

ແຕ່ຍ່າເຖົ້າກໍບໍ່ສົນໃຈຊິຕອບຄຳຖາມຂອງທ້າວແຕ່ກັບຖາມທ້າວວ່າ
ມຶງໄປເລາະຫລິ້ນດຶນນັ້ນພໍ່ອຫຍັງແນ່ກູຄຶດວ່າເຂົາຈັບມຶງເອົາໄປຂັງໄວ້
ຢູ່ຄອກໃນເມືອງແລ້ວຊັ້ນດອກ ກູແຮງທຸກຍາກລຳບາກບໍ່ມີຫຍັງຊິ ໄປ
ໄຖ່ໄປຖອນເອົາມຶງ. ທ້າວໄດ້ເວົ້າຕອບຍ່າວ່າ ເຈົ້າບໍ່ຕ້ອງຄຶດຫຍັງ
ຫລາຍດອກຍ່າເອີຍ ຂ້ອຍຫາກຊິຊອກຊິຫາເອົາເອງດອກເງິນຄຳກໍ
ແກ້ວ. ເວົ້າແລ້ວທ້າວກໍທຳທ່າເວົ້າຢອກຫລິ້ນກັບຍ່າເຖົ້າວ່າ ຍ່າ
ເອີຍຂ້ອຍໄປຫລິ້ນໃນເມືອງໄດ້ພົບຊາຍຫົວລ້ານຜູ້ຫນຶ່ງກໍເລີຍລົມ ໄວ້
ໃຫ້ຍ່າ. ເມື່ອຍ່າໄດ້ຍິນຈຶ່ງຮ້ອງດ່າທ້າວວ່າບັກເວນມຶງເອີຍຄ້ຽວມັນ
ເດິກດື່ນຂ້ອນຄືນແລ້ວ ມຶງຄືໄປປັບໆຢູ່ແທ້ກູ້ນເຖົ້າແກ່ແລ້ວບໍ່ເຄີຍ ຄຶດ
ຊິຢາກໄດ້ຜົວດອກກູຮັກສາແຕ່ໂຕກູເອງກໍພໍແລ້ວ. ທ້າວຈຶ່ງຫົວ ອັກໆ
ອື້ນພ້ອມທັງເວົ້າກວນຍ່າວ່າ ໂອຍຍ່າເອີຍຢ່າຟ້າວຮ້າຍຟ້າວ ດ່າ
ຫລາຍຖ້ອນ ຂ້ອຍຊິຫາຜົວໃຫ້ເຈົ້າຈົນໄດ້ບໍ່ຕ້ອງຮ້ອນບໍ່ຕ້ອງ ເຄືອງ
ອກນ່າ ບາງເທື່ອບຸນມີໄດ້ຊິເອົາມາເປັນປູ່ພາຍ່າສ້າງເຮືອນ ຢ້າວ
ງິບສວນແທ້ໃດ.

ຝ່າຍຍ່າເຖົ້າຢາກຮ້າຍທີ່ທ້າວເວົ້າລຳໄລບໍ່ເຊົາຈັກເທື່ອຈຶ່ງ ຮ້າຍ
ຮື່ມວ່າ ມຶງຊິນອນກໍນອນຖ້ອນບັກເວນເອີຍກູລັກໄລ່ ເປັນຫຍັງ ເວົ້າ

ບໍ່ແລ້ວພາໃຫ້ສືນຊົ້ວແໜ້ນໍ. ເມື່ອທ້າວກ່ຳກາດກໍ່ຮູ້ວ່າຍ່າເຖົ້າບໍ່ພໍໃຈ ທັງຮ້າຍອິດຮ້າຍອື່ ທ້າວຈຶ່ງໄດ້ນິດແລ້ວກໍນອນຫລັບສະບາຍຝ່າຍ ຍ່າເຖົ້າກໍນອນຫລັບຄືກັນ.

ກ່າວເຖິງພະຍາເມືອງຜູ້ເປັນພໍ່ຂອງນາງລຸນ, ຄືນນັ້ນພະອົງ ໄດ້ນອນຫລັບຝັນເຫັນຊ້າງເຂົ້າມາໃນເມືອງພວກຊາວເມືອງໃຜງກໍ ມີຄວາມຢ້ານກົວຕໍ່ຊ້າງໂຕນັ້ນ, ພະອົງຍັງຝັນວ່າຊ້າງໂຕນັ້ນ ໄດ້ກິນກ້ວຍອ້ອຍແລະເຂົ້າຂອງຊາວເມືອງແລະຝູງຊາວເມືອງກໍໄດ້ພາກັນ ໄຕ້ ໄປໄລ່ຊ້າງໂຕນັ້ນເປັນສະນັ່ນນັນເມືອງ ຊ້າງຈຶ່ງໜີໄປລີ້ຢູ່ແຈເມືອງ ພໍແຕ່ຝັນແລ້ວກໍແຈ້ງເປັນມື້ໃໝ່ມາເຖິງ ພະອົງຈຶ່ງໄດ້ແກ້ຄວາມ ຝັນນັ້ນສູ່ເສນາອາມາດຟັງວ່າຈັກຊິເປັນແນວໃດກັນແທ້ນໍ ໃຫ້ຂຸນທັງຫລາຍພາກັນພິຈາລະນາເບິ່ງດູຊິດີຊິຮ້າຍແນວໃດແທ້.

ບັນດາເສນາອາມາດທັງຫລາຍເມື່ອໄດ້ຟັງການແກ້ຄວາມຝັນຂອງພະຍາເມືອງແລ້ວ ຈຶ່ງໄດ້ພາກັນຂາບທູນຕໍ່ພະອົງວ່າ ຄວາມຝັນຂອງພະອົງແມ່ນຈະມີໂຊກດີມີອາຍຸໝັ້ນຂວັນຍືນ ຈັກມີຕ່າງບ້ານ ຕ່າງເມືອງມາສ່ວຍສິນມີທັງຊ້າງມ້າເຂົ້າຂອງເງິນຄຳ, ເມື່ອເສນາ ທັງຫລາຍຂາບທູນເລື່ອງລາງຝັນຕໍ່ພະອົງແລ້ວ ເຂົາກໍຈັດຫາພາ ເຂົ້າຖວາຍພະອົງ. ພະອົງສະເຫວີຍເຂົ້ານ້ຳແລ້ວກໍພັກຜ່ອນຢູ່ຢ່າງ ສະບາຍໃຈ.

# ໑໐: ບັ້ນນາງລຸນສົ່ງເຄື່ອງຝາກ ໄປໃຫ້ທ້າວກ່ຳກາດຳ

ບັດນີ້ກ່າວເຖິງກາດຳນ້ອຍຢູ່ໃນສວນດອນຍ່າເຖົ້ານັ້ນພໍຕາ ເວັນສວາຍເຕີບຍ່າເຖົ້າກໍແຕ່ງພາງາຍສູ່ທ້າວກິນ, ຫລັງຈາກກິນງາຍແລ້ວທ້າວໄດ້ເວົ້ານຳຍ່າເຖົ້າວ່າ ຍ່າເອີຍຂ້ອຍຊິໄປເລາະທ່ຽວຫລິ້ນ ໃນສວນຈັກຫວ່າງພໍໃຫ້ຊື່ນອົກຊື່ນໃຈ ແລະອີກອັນຫນຶ່ງນັບແຕ່ຂ້ອຍໄດ້ມາອາໄສຢູ່ນຳຍ່ານີ້ກໍດົນແລ້ວ ຍັງບໍ່ຮູ້ບ່ອນໃດເທື່ອຢູ່ໃນເຂດຂອງສວນນີ້.

ສົ່ງຍ່າແລ້ວທ້າວກໍລົງເຮືອນໄປສູ່ສວນຫລວງອັນກວ້າງໃຫຍ່ ເມື່ອໄປເຖິງສວນທ້າວກໍເລາະຊົມເບິ່ງສວນໄປທົ່ວທຸກບ່ອນ ຕາງໃຫ້ ຊື່ນອົກຊື່ນໃຈແລະທັງໃຫ້ໄດ້ຮູ້ຈັກກັບສະຖານທີ່ຕື່ມອີກ.

ຍ້ອນກ່າວເຖິງນາງລຸນທີ່ຢູ່ໃນຫໍຜາສາດພາຍຫລັງທີ່ທ້າວກ່ຳກາດຳເຂົ້າໄປຫາໃນຄືນນັ້ນ ຈຶ່ງເຮັດໃຫ້ນາງລຸນມີຄວາມຄິດຮອດຫາ ທ້າວຢູ່ບໍ່ເຊົາ. ນັ້ນນາງຄິດຢາກຈະຝາກເຄື່ອງຕ້ອນໄປໃຫ້ທ້າວ, ນາງຈຶ່ງສັ່ງໃຫ້ຊຸມສາວໃຊ້ຊອກຫາເຄື່ອງຝາກຂອງຕ້ອນເມື່ອສາວໃຊ້ຊອກໄດ້ແລ້ວ ນາງຈຶ່ງສັ່ງໃຫ້ສາວໃຊ້ນຳເຄື່ອງຕ້ອນເຫລົ່ານັ້ນໄປສົ່ງ ໃຫ້ກັບຍ່າເຖົ້າຈຳສວນຕາງວ່າ ໄປຈອບເບິ່ງທ້າວນຳວ່າມີຮູບຮ່າງຄືແນວໃດແທ້ ດັ່ງບົດກອນຂຽນວ່າ

ແຕ່ນັ້ນນາງລຸນນ້ອຍ    ຈຳສາວໃຊ້ຊ່ວງ
ໃຫ້ມຶງເອົາຂອງໝຸ່ນ    ໄປຕ້ອນຝາກອີຍາຍ ແທ້ເນີ
ຕາງໃຫ້ໄປດູທ້າວ    ກາດຳນ້ອຍໜຸ່ມ ກູພຸ້ນ

ອັນວ່າຮູບແຈ່ມເຈົ້າ ຈິດຮ້າຍດັ່ງໃດ

ອັນວ່າກາງເວັນນີ້ ສິນໃດແຕກຕ່າງ ເດນໍ

ກາງຄືນປານວ່າອິນຢູ່ຟ້າ ສະຫວັນຫ້ອງທ່ຽວລີ້ງ ເຈົ້າເອີຍ

ເມື່ອພວກສາວໃຊ້ໄດ້ຮັບຄຳສັ່ງແລ້ວກໍຟ້າວນຳຂອງຕ້ອນໄປ ມອບໃຫ້ຍ່າເຖົ້າຢູ່ເຮືອນນ້ອຍໃນສວນ, ພວກສາວໃຊ້ທັງຫໍ່ຂອງຕ້ອນໃຫ້ຍ່າ ທັງພ້ອງຕາລັກແນມຊອກຫາທ້າວກຳກາດຳ ແຕ່ວ່າແນມຫາແນວ ໃດ ກໍບໍ່ເຫັນທ້າວ; ດັ່ງນັ້ນ ເຂົາຈຶ່ງຖາມຍ່າວ່າ ທ້າວກຳກາດຳໄປໃສຄື ບໍ່ເຫັນຢູ່ເຮືອນ ? ຍ່າເຖົ້າຈຶ່ງຕອບສາວໃຊ້ວ່າທ້າວໄປເລາະ ທ່ຽວ ຫລິ້ນໃນສວນແຕ່ເຊົ້າພຸ້ນຈັກຊິກັບມາຍາມໃດບໍ່ຮູ້. ຍ່າເວົ້າຕື່ມ ວ່າ ທ້າວຄິດຮອດບ້ານເກົ່າເມືອງຫລັງແລະພໍ່ແມ່ຫລາຍກໍເລີຍໄປ ເລາະ ທ່ຽວຫລິ້ນສວນພໍໃຫ້ຫາຍຄວາມໂສກຄວາມເຫງົາ. ຊຸມສາວໃຊ້ເວົ້າ ກັບຍ່າວ່າບໍ່ແມ່ນທ້າວຫລົບໜ້າພວກຕູບໍ ຍ່າເຖົ້າເວົ້າກັບເຂົາ ວ່າ ບໍ່ແມ່ນແນວນັ້ນດອກ ທ້າວໄປທ່ຽວໃນສວນແທ້ແຕ່ວ່າທາງມັນໄກ ຈຶ່ງ ບໍ່ຮູ້ວ່າຊິມາຮອດຍາມໃດແທ້, ຝ່າຍສາວໃຊ້ໄດ້ຟັງດັ່ງນັ້ນ ກໍເຊື່ອ ຄວາມຍ່າເຖົ້າບອກ.

ເມື່ອຄອງຖ້າດົນບໍ່ເຫັນທ້າວກັບມາ ພວກສາວໃຊ້ຈຶ່ງລາຍ່າ ເຖົ້າ ກັບຄືນເມືອທີ່ຜາສາດຫານາງລຸນແລ້ວກໍຂຶ້ນລາຍງານຕໍ່ນາງວ່າ ພວກ ຕົນໄດ້ນຳເອົາຂອງຝາກຂອງຕ້ອນໄປມອບໃຫ້ຍ່າເຖົ້າຢູ່ສວນພຸ້ນແລ້ວ ແລະກໍໄດ້ພະຍາຍາມຊອກເບິ່ງທ້າວກຳກາດຳຢູ່ເຮືອນກໍບໍ່ເຫັນ, ຍ່າ ເຖົ້າບອກທ້າວວ່າ ໄປທ່ຽວຫລິ້ນສວນຫລິ້ນປ່າແຕ່ເຊົ້າພຸ້ນບໍ່ຮູ້ວ່າຈະ ກັບມາເວລາໃດ ແລະຍ່າເວົ້າວ່າທ້າວຄິດຮອດບ້ານເກົ່າເມືອງຫລັງ

ແລະພໍ່ແມ່ຂອງທ້າວ.

ຝ່າຍນາງລຸນ ໄດ້ຟັງພວກສາວສະໜົມເລົ່າສູ່ຟັງດີແນວນັ້ນໃຈຂອງ ນາງກໍຄຶດຄ້ອຍໆຢູ່ວ່າເຮັດແນວໃດຈິ ໄດ້ເຫັນທ້າວໃນຍາມກາງ ເວັນ ສ່ວນວ່າຍາມກາງຄືນແທ້ ໄດ້ເຫັນແລ້ວ ທ້າວຫຼ້າງາມໆດັ່ງນັ້ນນາງ ລຸນ ຈຶ່ງ ໄດ້ແຕ່ຄຶດຮອດຫາທ້າວຢູ່ບໍ່ລືມດັ່ງບົດກອນຂຽນວ່າ

ໂອນໍເຈົ້າຜູ້ອິນທະສິດ ໄທ້ ຫລິງພອຍພາກທີ
ຫລືວ່າເຈົ້າຈິມາຕົວະຍົວະເຍົ້າ ພາງນ້ອງໃຫ້ກະສັນ ນັ້ນລື

ນັ້ນພໍ່ຕາເວັນລົງແລງທ້າວກ່ຳກາດຳກໍກັບຄືນເຮືອນຫາຍ່າ ເຖົ້າ ພໍທ້າວຂຶ້ນເຮືອນມາຍ່າກໍຍໍຂອງຕ້ອນມາໃຫ້ທ້າວ ພ້ອມທັງຖາມວ່າມຶງ ໄປເລາະ ໄປທ່ຽວຈົນຄ່ຳຈຶ່ງກັບມາດຶກບໍ່ມີຫຍັງຕິດມືມາຕ້ອນກູແນ່ຫລືວ່າ ມຶງຫາກ ໄປທ່ຽວກິນຫມາກ ໄມ້ນຳຫມູ່ລິງກັງພຸ້ນບໍ, ກູນີ້ຢູ່ແຕ່ໃນ ເຮືອນ ບໍ່ໄດ້ ໄປຄືມຶງກູກໍຍັງມີຂອງຝາກຂອງຕ້ອນ ໃຫ້ແກ່ມຶງບັກເວນເອີຍທ້າວ ກ່ຳກາດຳຈຶ່ງ ເວົ້າຕອບຍ່າວ່າ ເອີ...ປັນຍາມໂຊກແລ້ວ ລະ ຂ້ອຍສັງເກດເບິ່ງຍ່າມີອັນປິດອຳວາດໃດວາດໜຶ່ງ ຂອງຕ້ອນທີ່ ຍ່າ ໄດ້ຮັບມື້ນີ້ຄືຊິແມ່ນອີຕາເຖົ້າຫົວລ້ານນັ້ນຕິເອົາມາມອບໃຫ້ຍ່າ ເວົ້າ ແລ້ວທ້າວກໍຫົວກາກາງຂຶ້ນ. ຍ່າ ໄດ້ຍິນທ້າວເວົ້າແນວນັ້ນກໍຢາກ ຮ້າຍ ຈຶ່ງປ້ອຍອອກ ໄປຕາມເຄີຍ ດັ່ງບົດກອນຂຽນວ່າ

ມຶງນັ້ນຄົນຖ່ອຍຮ້າຍ ອະທຳໃຈບາບ ບັກເວນເອີຍ
ກູກໍເຖົ້າແກ່ແລ້ວ ໄຍຫຼິ້ນດັ່ງຜູ້ສາວ ນັ້ນລື
ແຕ່ນັ້ນກາດຳນ້ອຍ ຂໍພອນອະນຸຍາດ
ຫລອນວ່າຜິດພາດແລ້ວ ອີຍາຍເຖົ້າຈຶ່ງມູ

ຂໍຢ່າມີໄພຍຕ້ອງ　　ປາປົງປັງບຽດ

ຫລານນ໊ຂໍອະນຸຍາດເຈົ້າ ຍາຍເຖົ້າເທື່ອດຽວ ນ໊ແລ້ວ

ຝ່າຍຍ່າເຖົ້າໄດ້ຍິນທ້າວຂໍໂທດຂໍໂພຍນຳກໍເລີຍໃຈອ່ອນ ຈຶ່ງບອກອະນຸຍາດຍົກໂທດຕໍ່ທ້າວວ່າ ເອີ...ກູຊິອະນຸຍາດຍົກໂທດ ຍົກໂພຍໃຫ້ດອກບັກເວນເອີຍ. ຈາກນັ້ນແສງຕາເວັນກໍຄ່ຳມືດພິດ ຍ່າເຖົ້າຈຶ່ງຍໍພາເຂົ້າແລງມາສູ່ຫລານກິນຕາມປົກກະຕິ.





## 11. ບັ້ນພະຍາແລະນາງລຸນ

## ຫຼົງໄຫຼໃນສຽງແຄນ

ຄືນນີ້ຫລັງຈາກກິນເຂົ້າແລງແລ້ວທົ່ວບໍລະບວນ ຍ່າເຖົ້າກໍ ອວນຫລານເຂົ້າບ່ອນນອນ, ແຕ່ໃນໃຈຂອງທ້າວຍັງຄຶດຮອດນາງລຸນຢູ່. ດັ່ງນັ້ນ ທ້າວຈຶ່ງເວົ້ານຳຍ່າວ່າ ຍ່າເອີຍຂ້ອຍຊິໄປທ່ຽວຫລິ້ນຢືມ ແຄນເຂົາເປົ່າອີກກ່ອນ, ຂ້ອຍເປົ່າຄືນນັ້ນບໍ່ທັນລັກໃຈປານໃດຈຶ່ງຢາກ ໄປເປົ່າຕື່ມອີກ ບາງເທື່ອໄດ້ສິ່ງຂອງດີໆມາຕ້ອນຍ່າກໍມີຍ່າເອີຍ ອັນບຸນຄຸນຂອງຍ່ານັ້ນຂ້ອຍບໍ່ລືມດອກ. ຍ່າຈຶ່ງເວົ້າຄອນທ້າວວ່າເອີ...ມຶງໄປຫລິ້ນກໍຟ້າວໄປຟ້າວມາຢ່າຢູ່ດົນ ຈຶ່ງໄປດີມາດີຢ່າໄປສ້າງ ເລື່ອງສ້າງລາວເຂົາຊິຕິຊິຂ້າມຶງໃດ ດັ່ງບົດກອນຂຽນວ່າ

ແຕ່ນີ້ນຍາຍຍ່າເຖົ້າ    ມີຄຳຖະແຫລງສັ່ງ ບານັ້ນ
ຄັນມຶງໄປທ່ຽວຫລິ້ນ    ຢ່າໄດ້ຢູ່ດົນ
ມຶງຈຶ່ງໄປດີມາດີຖ້ອນ    ຢ່າພານຄວາມຊອກໃສ່
ຢ້ານເຂົາຕີໄລ່ຂ້າ    ບໍ່ມີຮູ້ເມືອຄືງ    ແມ່ແລ້ວ

ເມື່ອຍ່າສັ່ງເປັນທີ່ຮຽບຮ້ອຍແລ້ວ ທ້າວກໍລົງເຮືອນໄປມຸ່ງ ໜ້າເຂົ້າສູ່ຕົວເມືອງ ພໍໄປເຖິງປະຕູເມືອງກໍເຫັນປະຕູອັດແຈບທ້າວ ຈຶ່ງທະຍານຕີນຂ້າມເຂົ້າໄປຢ່າງສະບາຍ. ພໍຕົກເຂົ້າໄປໃນຕົວ ເມືອງພວກຜູ້ບ່າວໄດ້ເຫັນທ້າວ ເຂົາກໍພາກັນຊຸມມາຫາ ທັງພ່ອງຖາມຂ່າວ ເປັນແຊວງພວກຜູ້ບ່າວໃນເມືອງຖາມວ່າ ມາອີກແລ້ວບໍ່ທ້າວເອີຍຄືນ ນັ້ນພວກຂູ້ຂ້ອຍພາກັນຊອກຫາເຈົ້າເກືອບຕາຍຊອກແນວໃດກໍບໍ່ ເຫັນ

ບາງຄືນກໍວ່າມາແລ້ວບໍ່ອ້າຍກ່ຳນ້ອຍຖູຂ້ອຍຫາກຄອງແທ້ນ່າ.

ຕໍ່ມາພວກຜູ້ບ່າວທັງຫລາຍ ໄດ້ຊອນທ້າວກ່ຳກາດຳວ່າຈິ ພາໄປຫລິ້ນໃນຄຸ້ມຂອງພະຍາ ເພາະວ່າພະອົງກໍຢາກເຫັນໜ້າທ້າວທັງຢາກຟັງສຽງແຄນນຳ, ພະອົງ ໄດ້ຟັງສຽງແຄນທ້າວເປົ່າຄືນນັ້ນເພິ່ນກໍ ໃຊ້ໃຫ້ຄົນມາຊອກຫາແຕ່ບໍ່ພົບທ້າວ. ຄືນນີ້ເຂົາພາກັນໄປທ່ຽວຫລິ້ນໃນຄຸ້ມຂອງພະຍາບໍ່ວ່າຈັ່ງໃດທ້າວກາດຳຈິ ໄປນຳພວກສູບໍ? ທ້າວຈຶ່ງ ບອກພວກຜູ້ບ່າວວ່າຕາມແຕ່ພວກອ້າຍຈິພາໄປໄປທາງໃດກໍຕາມ ໃຈພວກອ້າຍນ້ອງຍິນດີສະເໝີ.

ຈາກນັ້ນພວກຜູ້ບ່າວຈຶ່ງພາກັນແຫ່ທ້າວກ່ຳກາດຳໄປສູ່ຄຸ້ມ ຂອງພະຍາເມືອງພວກຜູ້ບ່າວພາກັນຫຸ້ມແຫ່ຈົນບໍ່ເຫັນທ້າວ ເພາະວ່າ ທ້າວທັງກ່ຳດຳແລະຕ່ຳເຕ້ຍຊ້ຳພັດຢູ່ທາງກາງເລີຍແນມຫາບໍ່ເຫັນ, ຊຸມທີ່ແຫ່ທ້າວກ່ຳກາດຳໄປນັ້ນເຂົາທັງໂຮແຊວແລະເປົ່າແຄນເປົ່າປີ່ສີ ຈໍ່ເປົ່າຂຸ່ຍສຽງສະນັ່ນບັນເມືອງພໍໄປຮອດສະໜາມຫລວງກໍພາກັນ ນັ່ງຫລິ້ນ. ບັງເອີນຊຸມສາວຮັບໃຊ້ໃນວັງມາເຫັນຈຶ່ງຂຶ້ນໄປຂາບທູນຕໍ່ ພະຍາວ່າດຽວນີ້ທ້າວກ່ຳນ້ອຍຜູ້ເປົ່າແຄນນັ້ນ ໄດ້ມາຢູ່ສະໜາມ ຫລວງໂດຍມີຜູ້ບ່າວຊາວເມືອງພາທ້າວມາ.

ເມື່ອພະຍາ ໄດ້ຮູ້ດັ່ງນັ້ນຈຶ່ງສັ່ງໃຫ້ເຂົາ ໄປເຊີນທ້າວມາຫາຢູ່ ທີ່ຜາສາດພວກຮັບໃຊ້ຈຶ່ງຟ້າວ ໄປບອກທ້າວກ່ຳກາດຳໃຫ້ໄປເຝົ້າພະຍາດຽວນີ້ ພ້ອມທັງບອກໃຫ້ພວກຜູ້ບ່າວນຳພາທ້າວ ໄປ. ດັ່ງນັ້ນເຂົາ ຈຶ່ງພາທ້າວ ໄປເຝົ້າພະຍາເມືອງທັນທີ, ຝ່າຍພະຍາເມືອງຈຶ່ງຖາມວ່າບັກກ່ຳນ້ອຍນັ້ນແມ່ນໃຜ? ທ້າວກ່ຳກາດຳເຊິ່ງນັ່ງເຮັດຄົມນິ່ມຢູ່ ເຄິ່ງ

ກາງໝູ່ ຈຶ່ງເວົ້າຂຶ້ນວ່າ ຂໍອະນຸຍາດບາດຄຳນຳພະອົງ ຜິດຖືກແນວໃດຈຶ່ງທານໂທດທານຊີວິດ ພູ້ຂ້າຂໍເພິ່ງພາໂພທິສົມພານແດ່ຖ້ອນ, ຄຳເວົ້າຂອງທ້າວເຮັດໃຫ້ພະຍາມີຄວາມສົງໄສພະອົງຈຶ່ງຍົກຫຼຽນເບື້ອງເບິ່ງໜ້າໃຫ້ຄັກ ຈຶ່ງຮູ້ວ່າທ້າວນັ່ງຢູ່ເຄິ່ງກາງຂອງພູ້ບ່າວທັງຫລາຍເມື່ອເບິ່ງຄັກແລ້ວພະອົງກໍຖອຍຄືນໄປນັ່ງລົງບ່ອນເກົ່າ ແລ້ວມີຄຳສັ່ງວ່າເອົາແຄນໃຫ້ມັນເປົ່າລອງດູ ພວກພູ້ບ່າວຈຶ່ງຍື່ນແຄນໄປໃຫ້ ແລະທ້າວກໍຟ້າວຮັບເອົາແຄນທັນທີ ພ້ອມທັງເປົ່າໃຫ້ພະຍາຟັງດັ່ງບົດກອນຂຽນວ່າ

ແຕ່ນັ້ນສົມສະເຫລົາທ້າວ ກາດຳເລີຍເປົ່າ
ບາບ່າວທ້າວ ອົມເຕົ້າເປົ່າແຄນ
ທ້າວກໍເຕາະລູກໜຶ່ງແລ້ວ ລູກສອງສາມສີ
ທ້າວກໍເຕາະກົ່ງກອຍ ຂານຕ້ອນແມມີ
ທ້າວກໍໄລ່ລູກໜຶ່ງແລ້ວ ສຽງຕອບຂານກັນ
ບາບຸນເລີຍ ເປົ່າແຄນຈຈີ້ນ
ຍິນກະສິນແທ້ ສຽງແຄນແມ້ງມ່ວນ
ເປັນສຳນວນອື່ນອ້ອຍ ສຽງລະຫ້ອຍກ່ອນໃຈ

ເມື່ອພະຍາໄດ້ຟັງກໍຮູ້ສຶກວ່າອອນຊອນໃຈ ຄືກັບສຽງເສບກ່ອມພະອົງຍາມຊິນອນ, ສຽງແຄນໄດ້ດັງກ້ອງໄປທຸກທີ່ພາສາດພວກສາວ ສະໜົມກົມມະວັງໃພງກໍຍິນສະອອນຊ້ອຍຊື່ນ ພ້ອມກັນຊາວເມືອງເປັງຈານທຸກາງຄືນກໍໄດ້ຍິນສຽງແຄນຂອງທ້າວເປົ່າມ່ວນແທ້ມ່ວນວ່າ ປານຊິກິນກີນໄດ້ພຸ້ນແຫລະ ໃພງກໍພາກັນນອນຟັງສະຫວັດຢູ່ຈົນບໍ່ໄອບໍ່ຈາມ

ຫຍັງຢ່ານມັນຈະລົບກວນ. ຂຸນພວກສາວສ່ຳນ້ອຍແລະແມ່ຮ້າງ ນາງຫມ້າຍທີພາກັນລົງຂ່ວງກໍເຊົາເຂັນຝ້າຍນັ່ງຟັງສຽງແຄນຂອງ ທ້າວດ້ວຍໃຈຈົດໃຈຈໍ່. ພ້ອມນັ້ນສຽງແຄນຂອງທ້າວຍັງດັງກ່ອງຂຶ້ນໄປ ໃນຫ້ອງຂອງນາງລຸ່ມ ເມື່ອນາງໄດ້ຟັງສຽງແຄນອັນມ່ວນແມ້ງຂອງທ້າວຍິ່ງເຮັດໃຫ້ນາງຄຶດຮອດຫາທ້າວພໍປານໃຈຊິຂາດ, ນອກຈາກນັ້ນ ສຽງແຄນຍັງສົ່ງສຽງອັນອອນຊອນໄປເຖິງຫູຂອງຍ່າຈ່ຳສວນທີ່ພວມ ນອນຢູ່ເຮືອນນ້ອຍພູດຽວຢູ່ໃນສວນ ເມື່ອຍ່າເຖົ້າຈ່ຳສວນໄດ້ຍິນກໍຄະ ນຶງໃນໃຈວ່າອັນນັ້ນຕ້ອງແມ່ນສຽງແຄນຂອງບັກກ່ຳກາດຳແທ້ແລ້ວ ເພາະວ່າຍ່າເກີດມາຈົນເຖົ້າກໍບໍ່ເຄີຍໄດ້ຍິນຜູ້ບ່າວເມືອງນີ້ເປົ່າແຄນມ່ວນເຖິງພຽງນັ້ນຈັກຄົນ.

ຫລັງຈາກທ້າວໄດ້ເປົ່າຖວາຍໃຫ້ພະຍາເມືອງເປັງຈານຟັງ ແລ້ວທ້າວກໍກົ້ມຂາບລາພະອົງກັບແຕ່ກ່ອນທ້າວຈະກັບໄປນັ້ນພະຍາກໍໄດ້ພະລາຊະທານຜ້າແພໃຫ້ແກ່ທ້າວ ພ້ອມດ້ວຍຜູ້ບ່າວທີ່ໄປນຳພະອົງກໍທານໃຫ້ຊູ່ຄົນ" ແລະ ໃຫ້ເງິນຕື່ມອີກຄົນລະຮ້ອຍ ທັງສະແດງຄວາມຍິນດີຊົມຊື່ນສັນລະເສີນຍ້ອງຍໍໃນຄວາມສາມາດຂອງທ້າວ.ໄດ້ຮັບສິ່ງຂອງແລ້ວກໍພາກັນລົງຈາກທີ່ຜາສາດ ກັບໄປສູ່ສະຫນາມຫລວງ ກ່ອນຈາກ ກັນທ້າວໄດ້ສັ່ງລາແລະອວຍພອນໃຫ້ພວກຜູ້ບ່າວທັງຫມົດຢູ່ດີມີແຮງມີຫນ້າຄົນຫນ້າຈຶ່ງຄ່ອຍພົບກັນໃຫມ່. ພວກຜູ້ບ່າວກໍໄດ້ສັ່ງລາທ້າວພ້ອມ ທັງອວຍພອນໃຫ້ທ້າວໂຊກດີໄດ້ເມຍພໍຮ້ອຍພໍແສນແຂວນຂ້າງແຂວນແອວເປັນແພນຳກັ້ນ.

ເມື່ອສັ່ງລາກັນຮຽບຮ້ອຍແລ້ວ ແທນທີ່ທ້າວຈະກັບເມືອເຮືອນ ຫາ

ຍ່າ ແຕ່ແລ້ວທ້າວພັດກັບເຫາະເຂົ້າໄປຫານາງລຸນຢູ່ໃນບ່ອນ ນອນເທິງຫໍຜາສາດ, ກ່ອນທ້າວຈະເຂົ້າໄປຫານາງທ້າວໄດ້ຖອດຄາບ ອັນກ້ຳດຳຂອງທ້າວມ້ຽນປະໄວ້. ທ້າວໄດ້ຄ່ອຍໆຈອບເຂົ້າໄປນັ່ງ ລົງບັນລັງໃນຫ້ອງນາງລຸນ, ຝ່າຍນາງລຸນໄດ້ເຫັນທ້າວມີຣູບໂສມ ອັນງາມພໍປານວ່າພະອິນ ນາງຈຶ່ງຫລົງສະຕິລືມທຸກສິ່ງທຸກຢ່າງແຕ່ ນາງກໍແຂງໃຈນຳຂັນໝາກຂັນພູມາຕ້ອນຮັບທ້າວ ເຮັດຄືບໍ່ມີຫຍັງຜິດປົກກະຕິພ້ອມທັງເວົ້າກັບທ້າວວ່າ ນາງເອງກໍຍັງນັ່ງຖ້າທ້າວຢູ່ບໍ່ທັນໄດ້ຫລັບໄດ້ນອນເທື່ອດັ່ງບົດກອນຂຽນວ່າ

ຄ້ອນວ່ານາງຖວາຍແລ້ວ ເຈລະຈາຕ້ານກ່າວ
ນ້ອງກໍຍັງຢູ່ຖ້າ ຄອງເຈົ້າໄປ່ນອນ ອ້າຍເອີຍ
ຄ້ອນວ່າແລ້ວ ທ້າວແນບຊົມນາງ
ສອງນົງແພງ ກ່ອມກັນພັນຕຸ້ມ
ບາອຳອົງ ຊິງຊົມເປືອງປີ້ນ
ຍິນຊົບຊ້ອຍ ສະເໜັນທ້ອຍທໍ່ໃຈ ເຈົ້າເອີຍ

ທ້າວໄດ້ນອນດອມນາງຈົນເຖິງເວລາຂ້ອນຄືນທ້າວຈຶ່ງໄດ້ລາຈາກນາງກັບເມືອກ່ອນທີ່ທ້າວຈະຈາກໄປນາງລຸນໄດ້ໃຫ້ແຫວນແລະຜ້າແພອີກຈຳນວນໜຶ່ງຝາກນຳທ້າວເມືອໃຫ້ຍ່າເຖົ້າຈຳສອນ, ທ້າວຮັບເອົາແຫວນຈາກນາງມາສຸບໃສ່ນິ້ວມືແລ້ວກໍກັບອອກມາສູ່ລະບຽງຜາ ສາດບ່ອນທີ່ທ້າວຖອດຄາບໄວ້ ເມື່ອສຸບຄາບໃສ່ແລ້ວກໍທະຍານເຫາະ ໄປເຖິງເຮືອນນ້ອຍຢູ່ສວນ.

ທ້າວໄປຮອດສວນກໍພໍດີແຈ້ງ ຍ່າເຖົ້າກໍລຸກໜຶ້ງເຂົ້າເປົ່າໄຟແຕ່ງ

ຢູ່ຄົວກິນເພື່ອເປັນຄາບເຂົ້າງາຍສູ່ທ້າວກິນ. ຫລັງຈາກກິນເຂົ້າອີ່ມ ດີ ແລ້ວຊາຍໜຸ່ມຈຶ່ງເອົາແຫວນກັບຜ້າແພທີ່ເປັນຂອງຝາກນັ້ນມອບໃຫ້ແກ່ຍ່າເຖົ້າ ພ້ອມທັງເວົ້າວ່າ ຍ່າເອີຍລອງເອົາແຫວນສຸບໃສ່ນິ້ວ ມື ເບິ່ງດູມັນຊິງາມບໍ ຍ່າຈຶ່ງຈັບເອົາແຫວນມາສຸບໃສ່ນິ້ວມືແລ້ວກໍ ເອົາຜ້າແພມາບ່ຽງ, ທ້າວກ້ຳກາດຄຳເຫັນແນວນັ້ນກໍເລີຍຫົວຂວັນເຕີະເຕີນ ທັງເວົ້າຢອກຍ່າວ່າ ບາດນີ້ແລ້ວບັກຫົວລ້ານຊິດີນຕາຍນຳຍ່າ, ທ້າວ ພັດເວົ້າຕື່ມວ່າ ຕີແຕ່ນີ້ນສອງເຕົ້າຂອງຍ່າທີ່ນແຫລວຫ່ຽວແຫ້ຫ່ຽວວ່າ ກັບທັງສອງຝ່າຍກໍ້ເປັນລ້າງໜາກຂວບແຂວນ ເວົ້າແລ້ວທ້າວກໍຫົວ ສະອຶກສະອອຍ ແລະເວົ້າຕື່ມວ່າ ຍ່າເອີຍເມື່ອເຈົ້າຖືເຄື່ອງເອີຍ່ອງ ຈຶ່ງຊິແລ້ວພໍ່ປານສາວຂື້ນໃໝ່ ເບິ່ງລັກງອຍຢານແຕ່ແຮງແຕ່ກາແຫ່ ນຳເຈົ້າທີ່ນແຫລະຍ່າເອີຍ.

ຜູ້ເປັນຍ່າຈຶ່ງຢ້ອນຖາມທ້າວຄືນວ່າ ຂອງຫລີ້ານແມ່ນໃຜເອົາໃຫ້ ມຶງ ຫລືວ່າ ມຶງໄປລັກເອົາຂອງເພິ່ນມາເຮັດຂອງຝາກໃຫ້ກູຄັນແມ່ນ ຈຶ່ງຊັ້ນກູໂລດຢານເພິ່ນຊິມາລາກຄໍໄປໃສ່ຄຸກໃສ່ຄາ ກູກໍເຖົ້າແກ່ ໃກ້ ຈະຕາຍແລ້ວບໍ່ຢາກສ້າງກຳທຳເຂັນກັບຜູ້ໃດ, ທ້າວໄດ້ຟັງຍ່າ ເວົ້າ ແນວນັ້ນຈຶ່ງພາງານເວົ້າໃສ່ຍ່າວ່າ ເຖົ້າປານນີ້ກໍຍັງຊິຢານຕາຍຢູ່ ນີ້ ເວົ້າແລ້ວກໍຫົວຂື້ນສະອຶກສະອອຍ. ຍ່າຈຶ່ງຕອບທ້າວວ່າເຖົ້າກໍ ຢາກ ໝັ້ນຢາກຍືນແທ້ໃດບັກເວນມຶງເອີຍ. ດັ່ງນັ້ນທ້າວຈຶ່ງບອກຍ່າ ວ່າ ເຄື່ອງຂອງຫລີ້ານແມ່ນທ້າວໄປຮັບຈາງເປົ່າແຄນເອົາດັ່ງບົດ ກອນ ຂຽນວ່າ.

ຍ່າເອີຍອັນວ່າຂອງຫລີ້ານ ແຫວນຝາກແພສະໄບ

ຂ້ອຍກໍໄປສະແຫວງຫາ ເປົ່າແຄນເຂົາຈ້າງ

ຂ້ອຍກໍໄປຫາດ້ວຍ ຄຳຜະຫຍານ້ອຍບັກກ່ຳ

ຂ້ອຍຫາກໄປທ່ຽວຫລິ້ນ ເຂົາກໍຈ້າງເປົ່າແຄນ ຍ່າເອີຍ

ທ້າວໄດ້ເວົ້ານຳຍ່າວ່າ ເຈົ້າບໍ່ຕ້ອງອຸກອັ່ງອິດຫຍັງນຳຂ້ອຍ ດອກ ແລະເຈົ້າກໍບໍ່ຄວນປະມາດວ່າຂອງເຫລົ່ານັ້ນໜ້ອຍດຽວ ຖ້າໄປ ຂ້ອຍຈິເອົາກ້ອງແຂນມາໃຫ້ໃສ່ພ້ອມທັງແຫວນຈີນຄູ່ນ້ອຍນີ້ກໍໄດ້. ຝ່າຍ ຍ່າເຖົ້າໄດ້ຍິນທ້າວເວົ້າແນວນັ້ນຈຶ່ງຫລັບຕາຊັ່ງ ທັງເວົ້າວ່າບັກເວນມຶງ ເອີຍມຶງຄືເວົ້າໃຫຍ່ເຫລືອໂຕແທ້ ທ້າວໄດ້ຍິນຍ່າດ່າກໍຫົວອັກງຂຶ້ນທັງບອກຍ່າຕື່ມວ່າ ບໍ່ເຊື່ອມື້ໜຶ່ງທາງໜ້າຫາກຈິໄດ້ເຫັນດອກ.

# 12: ບັ້ນທ້າວກ່ຳກາດຳຈຳໃຫ້ຢ່າໄປຂໍ ນາງລຸນມາເປັນເມຍ

ນັບແຕ່ນັ້ນມາເປັນເວລາໄດ້ຫລາຍວັນຫລາຍຄືນຜ່ານໄປ ທ້າວກ່ຳກາດຳກໍມີຄວາມຄິດຢາກນັ່ງເມືອງເປັນເຈົ້າທ້າວຈຶ່ງເວົ້ານຳຍ່າເຖົ້າວ່າ ຍ່າເອີຍດຽວນີ້ຂ້ອຍກໍຄິດຢາກໄດ້ນາງລຸນມາເປັນເມຍຢູ່ ນອນທຽມຊ້ອນຂໍໃຫ້ຍ່າໄປຂໍນາງນຳພະຍາເມືອງໃຫ້ຫລານແດ່ແມ. ຜູ້ເປັນຍ່າໄດ້ຍິນທ້າວເວົ້າແນວນັ້ນກໍຕົບເອິກຕອາງແຫວມື້ຈຸຍສົບທັງປ່ອຍຄ່າທ້າວວ່າ ມຶງຄຶດມາຢາກຢຽວປ່ອງຢ້ຫາແກ້ວທີ່ສູງແທ້ດບັກເວນ ເອີຍມຶງຄຶບໍ່ສະແຫວງຫາຜູ້ທີ່ພໍສົມກັບຮູບຮ່າງຫນ້າຕາຂອງມຶງແດ່ ມຶງເປັນຫຍັງເວົ້າໂມ້ເຫລືອໂຕເກີນເຫດ ສົມມຶງແທ້ແມ່ນລິງກັງກາງປ່າ ບັກເວນເອີຍ ອັນວ່າຄືນນີ້ບໍ່ມີໃຜຊິຫລຽວເບິ່ງແລ້ວມຶງມາຫາເລື່ອງເວົ້າເຮັດໃຫ້ກູອັບອາຍຂາຍຫນ້າຕໍ່ທ່ານພະຍາເມືອງແທ້ນໍ. ມຶງນີ້ເປັນຄົນທຸກຍາກໄຮ້ເຂີນຂາດເງິນຄຳ ບໍ່ສົມຄວນທີ່ຈະທະເຍີທະຍານໄຝ່ຫາຜູ້ເພິ່ນສູງສັກ.

ແມ່ນວ່າຍ່າເຖົ້າຮ້າຍດ່າແນວໃດ ທ້າວກໍຍິນດີຮັບເອົາ ແຕ່ທ້າວໄດ້ເວົ້ານຳຍ່າວ່າ ເລື່ອງເງິນຄຳນັ້ນຍ່າບໍ່ຕ້ອງຄິດຍາກດອກຂໍແຕ່ຍ່າໄດ້ໄປເວົ້າໄປຂໍນາງດອມທ່ານພະຍາເສຍກ່ອນ ຖ້າເພິ່ນຮັບປາກຕົກລົງປົງໃຈແລ້ວ ເລື່ອງຄ່າແກ່ວຄ່າດອງໃຫ້ເພິ່ນວ່າມາໂລດ ແມ່ນວ່າເພິ່ນຊິຄາດຄ່າກວ້າງແສນຫມື່ນເງິນຄຳກໍດີຂ້ອຍຈັກໄປຫາມາ ຂາບຖວາຍພະຍາເຈົ້າ ຂໍແຕ່ຂ້ອຍໄດ້ຢູ່ຊ້ອນຮຽງຮ່ວມນາງລຸນຍ່າເອີຍ.

ຜູ້ເປັນຍ່າທັງຢາກຮ້າຍທັງຄຶດຮອດຄຳຝັນທີ່ຫນ້າອັດສະຈັນໃນເມື່ອກ່ອນ, ດັ່ງນັ້ນຍ່າຈຶ່ງບໍ່ກ້າຂືນຄຳຫນ່ຽວອອນຂອງທ້າວ ຈຶ່ງເວົ້າ ກັບທ້າວວ່າ ເອີ... ກູຊິລອງໄປຕາມຄຳມຶງວ່າ ຄັນຫາກບໍ່ໄດ້ດີ ດັ່ງມຶງຄຶດ ກູຈັກຊິເອົາຫນ້າໄປໄວ້ບ່ອນໃດແລ້ວ ວ່າແລ້ວຍ່າກໍໃສ່ ສິ້ນໃຫມ່ຜືນງາມເພື່ອຈະໄປເຂົ້າເຝົ້າພະຍາເມືອງດັ່ງບົດກອນຂຽນວ່າ.

ແຕ່ນັ້ນມາຍ່າເຖົ້າ ດາດິຕົກແຕ່ງ
ຍ່ານຸ່ງສິ້ນ ສະໄບປ່າຍບ່ຽງນົມ
ຍ່າກໍແຍງຄິງເຫລື້ອງ ໄປມາເອົາເພດ
ມີລູບເກົ້າ ມັນເຫລື້ອມລູບຜົມ
ຍ່າກໍທຳກະບວນເບື່ອງ ດາດິທຸກທີ
ທັງເລືາຕົວຍຸ້ມໆ ສຽງປ້ອຍດ່າບັກເວນ ມຶງເອີຍ

ສ່ວນວ່າທ້າວກ່ຳກາດຳນັ້ນ ໄດ້ເຫັນຍ່າເອ້ຢອງດີແນວນັ້ນກໍດີອົກດີໃຈນຳ ທັງເວົ້າກັບຍ່າວ່າ ຂໍໃຫ້ຍ່າໂຊກດີລຸລາບໄດ້ພະຍາເຈົ້າໂພດຜາຍແດ້ຖອນ. ຕໍ່ມາຍ່າກໍລົງຈາກເຮືອນມຸ່ງຫນ້າໄປໃນເມືອງ ເພື່ອເຂົ້າເຝົ້າພະຍາເມືອງ, ຕາມທາງພວກຜູ້ບ່າວສ່ຳນ້ອຍແລະບ່າວ ພໍ່ຮ້າງພໍ່ຫມ້າຍພາກັນທວງເປັນແຊວໆບາງພ່ອງກໍພາກັນຫຍັບເຂົ້າ ໄປຫາຍ່າກໍປັດປ່າຍເຂົາອອກແລ້ວເຮັດທ່າເກີະເຂີນອາຍວາດໃດ ວາດຫນຶ່ງ ບາງຄົນກໍວ່າຢາກຂໍເມືອດອມຍ່າ. ເຖິງເຂົາຈະວ່າແນວ ໃດກໍຕາມຍ່າກໍໄຫວແຂວນເອົາເພດຍ່າງມຸ່ງຫນ້າໄປສູ່ທີ່ພາສາດຂອງພະຍາເມືອງບໍ່ສົນບໍ່ກ່ຽວກັບເຂົາເລີຍ.

ເມື່ອເຂົ້າໄປເຖິງພາສາດ ຍ່າກໍຂຶ້ນຂາບໄຫວ້ທູນເຈົ້າ ພະຍາ

ເມືອງ, ຝ່າຍພະຍາເມືອງແມນເຫັນຍ່າເຖົ້າຈຳສວນເຂົ້າໄປຫາ ຈຶ່ງຖາມວ່າ ຍ່າເຂົ້າມາຫາເຮົາມີມວນຽກຫຍັງບໍ? ຍ່າເຖົ້າເມື່ອ ຖືກຖາມກໍທັງຕອບທັງສັ່ນເຊັ່ນຍ່າເວົ້າວ່າ ດຽວນີ້ເຄືອງໃຈດ້ວຍ ຫລານດຽວຢູ່ນຳຍ່ານັ້ນແລ້ວ ທ້າວຫາກແອ່ວຊູ່ມື້ຈຶ່ງມາພໍ້ເພື່ອຫລານ, ຫລານຫາກຄິດໄດ່ສຸຂະຢູ່ຍ້ອນອຳນາດພູມິ ຂໍເພິ່ງໂພທິສົມພານຂອງພະອົງ ນີ້ແລ້ວຄືວ່າຫລານຊາຍມັນຢາກຂໍເປັນລູກເຂີຍຈຶ່ງຈຳຂ້ານ້ອຍມາ ຂາບທູນຕໍ່ພະອົງ ຜິດຖືກແລ້ວແຕ່ພະອົງຈະໂຜດພາຍ.

ເມື່ອພະຍາເມືອງໄດ້ຟັງດັ່ງນັ້ນຈຶ່ງຖາມຍ່າເຖົ້າຈຳສວນວ່າຫລານຊາຍຂອງເຈົ້າຊື່ວ່າແນວໃດ? ຍ່າຈຶ່ງຂາບທູນໂດຍຊື່ວ່າ ຫລານຂອງຍ່າຊື່ວ່າທ້າວກ່ຳກາດດຳເປັນຄຳນຳຮູບໂສມພາງຮ້າຍ ພະຍາຈຶ່ງຖາມຕື່ມວ່າຫລານຂອງເຈົ້ານີ້ເຈົ້າເອົາມາແຕ່ທາງໃດ ຫລືວ່າລູກທີ່ເກີດຈາກອຸທອນກ້ອນເລືອດຂອງເຈົ້າເອງ ຫລືວ່າແມ່ນລູກບ້າລູກອາ ຫລືວ່າເຈົ້າຫາກໄປຂໍທານເຂົາເອົາມາລ້ຽງ? ເຈົ້າຈຶ່ງບອກຄວາມຈິງໃຫ້ຟັງຢ່າຕົວະຢ່າບັງ ຖ້າຫາກຢ່າປິດບັງພາຍລຸນມາຊິມີໂທດໃດເຮົາຊິຕັດຄໍເອົາຫົວຍ່າສຽບຕໍ່ເດ.

ດັ່ງນັ້ນ ຍ່າຈຶ່ງບອກຄວາມຈິງທຸກຢ່າງຕາມທີ່ເປັນມາໃຫ້ພະ ຍາເມືອງໄດ້ຮູ້ວ່າ ທ້າວກ່ຳກາດດຳເປັນຄົນມາຈາກປະເທດອື່ນ ທ້າວໄດ້ພັດພາກຈາກບ້ານເກີດເມືອງນອນພັດເຊພະເນຈອນມາຄົນດຽວ ໄດ້ມາອາໄສຢູ່ນຳ ຂ້ານ້ອຍກໍໄດ້ລ້ຽງດູທ້າວຈົນໃຫ່ຍກ້າໜ້າບານຂຶ້ນມານີ້ແຫລ້ວ, ເປັນແນວໃດກໍບໍ່ກ່ວາແຕ່ພະອົງຈະໂຜດພາຍ. ພະຍາເມືອງບອກຍ່າວ່າມື້ອື່ນຕອນເຊົ້າເຈົ້າຈຶ່ງມາຫາເຮົາໃຫມ່. ເພາະວ່າ

ເຮົາຈະໄດ້ຖາມລູກສາວເຮົາທັງຫມົດເບິ່ງກ່ອນວ່າໃຜຊິ ຂານເປັນເມຍກ່ຳກາດຳຂອງເຈົ້າ. ດັ່ງນັ້ນຍ່າຈຶ່ງຝາວທູນລາພະອົງກັບ ຄືນເຮືອນໂດຍດ່ວນ.

ພໍແຕ່ຍ່າຂຶ້ນເທິງເຮືອນນັ່ງລົງປັບທ້າວກໍສໍ້ຖາມຍ່າໂລດວ່າ ເປັນແນວໃດຍ່າໄປຂໍໄປໂອມນາງ ພະອົງເພິ່ນວ່າຈັ່ງໃດແດ່ ຊິເປັນ ຕາໄດ້ບໍ່ຍ່າ ຫລືວ່າຍັງຢູ່ອີກໄກແສນໄກດັ່ງບົດກອນຂຽນວ່າ.

| | |
|---|---|
| ຍ່າກໍເມືອເຖິງຫ້ອງ | ເຮືອນຕີນເນົານັ່ງ |
| ບາບ່າວຜູ້ | ກາດຳນ້ອຍຮັບຖາມ |
| ມາລືມານດາຂ້ອຍ | ສາຍໃຈເຈົ້າຍ່າ |
| ເຈົ້າຫາກໄປທ່າວຕ້ານ | ໂອມແກ້ວສິ່ງໃດ ນໍເດ |
| ທ່ານພະຍາໂພດໃຫ້ | ຍາຍຍ່າສັນໃດ ນັ້ນຈາ |
| ຫລືວ່າຄວາມຍັງໄກ | ກໍໄປຮ່ອມຍັງກ້ວາງ |
| ຫລືວ່າສັນໃດແທ້ | ຍາຍເອີຍບອກແນ່ |
| ຂ້ອຍຢາກຮູ້ | ດອນເຈົ້າຍ່າຍາຍ ແທ້ນາ |

ຍ່າຈຶ່ງບອກໃຫ້ທ້າວຮູ້ທັງປ້ອຍທັງດ່າວ່າ ກູກໍໄປຄືດັ່ງມຶງ ບອກນັ້ນແລ້ວບັກກ່ຳກາເອີຍ ແຕ່ພະອົງຍັງບໍ່ໄດ້ຕັດເປັນຄວາມເດັດຂາດແນວໃດກັບກູເທື່ອ ມິແຕ່ເພິ່ນຜັດຫມາຍວ່າມື້ຫນ້າໃຫ້ໄປຫາເພິ່ນໃຫ່ມເພິ່ນຊິຖາມພວກນາງທັງຫລາຍເບິ່ງກ່ອນ. ຍ່າຈື່ມວ່າຄັນວ່ານາງຄົນ ໃດບໍ່ຍອມເອົາກັບມຶງແລ້ວ ໂອຍ...ກູຊິເອົາຫນ້າເອົາຕາໄປໄວ້ ທາງໃດເດນໍ, ທ້າວກ່ຳກາດຳໄດ້ຫົວຂວັນຍ່າທັງເວົ້າອອຍໃຈວ່າຍ່າເອີຍຂ້ອຍບໍ່ໃຫ້ເສຍຫນ້າເສຍຕາເຈົ້າດອກ. ຍ່າແລະຫລານລົມກັນໄປ ມາ

ໜ້ອຍໜຶ່ງກໍຄ່ຳມືດ ຈຶ່ງພາກັນກິນເຂົ້າແລງແລ້ວກໍເຂົ້າບ່ອນນອນ.

ຝ່າຍກ່າວເຖິງພະຍາເມືອງ ພະອົງໄດ້ເອີ້ນເອົາລູກສາວທັງ 7 ນາງມາໄຕ່ຖາມຄວາມສະໝັກໃຈວ່າຜູ້ໃດທີ່ຈະຂານອາສາເປັນເມຍຂອງທ້າວກ່ຳກາດກຳຢູ່ໃນສວນນຳຍ່າ. ປະກົດວ່ານາງທັງ 6 ທີ່ເປັນເອື້ອຍໄດ້ຕອບພະຍາຜູ້ເປັນພໍ່ເປັນສຽງດຽວກັນວ່າ ຄັນໃຫ້ພວກນາງເອົາທ້າວກ່ຳກາດກຳນັ້ນແໜ້ງວ່າໃຫ້ພວກນາງພາກັນຕາຍເສຍດີກ່ວາ ພະຍາຜູ້ເປັນພໍ່ຈຶ່ງອ່ວາຍມາຖາມນາງລຸນເປັນຄົນສຸດທ້າຍ. ນາງ ຈຶ່ງຕອບພໍ່ວ່າ ຄັນພໍ່ເຫັນດີໃຫ້ເອົາໃຜກໍບໍ່ຂັດຂືນ ແມ່ນຊິໃຫ້ເອົາໝູເອົາໝາກໍຕາມແຕ່ພໍ່ຈະເຫັນສົມຄວນດັ່ງບົດກອນຂຽນວ່າ.

ເມື່ອນັ້ນນາງຄານນ້ອຍ ຄະນຶງໃຈຂານພໍ່<br>
ຄັນວ່າພະພໍ່ເຫັນຊອບແລ້ວ ຊິຂືນໄດ້ບ່ອນໃດ<br>
ແມ່ນວ່າພະພໍ່ໃຫ້ ເອົາໝາຊິຂືນຫລີກ ເປັນລີ<br>
ຕາມແຕ່ໃຈພໍ່ເຈົ້າ ຊິເອົາໃຫ້ລູກບໍ່ຂືນ ດອກນາ

ຄຳຕອບຂອງນາງລຸນຫລືວ່ານາງຫລ້າຊອຍ ເຮັດໃຫ້ພະຍາເມືອງເປັງຈານຜູ້ເປັນພໍ່ມີຄວາມພໍອົກພໍໃຈຫາອັນປຽບບໍ່ໄດ້ ພະອົງໄດ້ ອຸ້ມເອົານາງຂຶ້ນມານັ່ງເທິງຕັກທັງເວົ້າວ່າ ລູກຂອງພໍ່ເປັນຄົນດີ ຫລາຍພວກເສນາອາມາດໃພ່ງກໍສະແດງຄວາມປິຕິຍິນດີດອມໃນການຕັດສິນໃຈຂອງນາງລຸນ. ມີພຽງແຕ່ພວກເອື້ອຍທັງຫົກເທົ່ານັ້ນທີ່ເວົ້າເຍາະເຍີຍສຽດສີແລະຫົວຂວັນນາງລຸນຜູ້ເປັນນ້ອງ ແລະເວົ້າວ່ານາງ ລຸນຈະເອົາທ້າວກ່ຳກາດກຳຈັ່ງແມ່ນມັນບໍ່ສົມກັນຈັກດີເຮັດໃຫ້ເສຍ ຄວາມງາມລ້າງ ເພາະວ່າທ້າວກ່ຳກາດກຳນັ້ນຮູບໂສມພາງຮ້າຍເອົາ ແທ້

ເອົາວ່າມັນໂລດຕ່າງຈາກຄືນເຮົາທົ່ວໆໄປ. ນາງລຸນຮູ້ສຶກເສຍ ໃຈຕໍ່ຄຳດູຖູກຢຽດຫຍາມຂອງພວກເອື້ອຍ ນາງຈຶ່ງໄດ້ຂາບລາພໍ້ລົງຈາກຫໍພາສາດ ພວກນາງທັງຫົກກໍ່ລົງມາພ້ອມຈາກນັ້ນພວກສະຫນົມຮັບໃຊ້ກໍ່ຍົກພາເຂົ້າແລງຂຶ້ນໄປຖວາຍພະອົງ ແລະ ເສບງັນພາແລງຂອງພະອົງດ້ວຍເຄື່ອງດົນຕີອັນມ່ວນຊື່ນ ຈົນເດິກດື່ນທ່ຽງຄືນຈຶ່ງເລີກລາ ກັບໄປຫລັບນອນ ຕາມປົກກະຕິ.

## 13 : ບັ້ນພະຍາເມືອງຄາດຄ່າດອງນາງລຸນ

ບັດນີ້ ກ່າວເຖິງຍ່າກັບຫລານທີ່ຢູ່ເຮືອນນ້ອຍໃນສວນ. ພໍຕື່ນເຊົ້າມາຫລັງຈາກພາກັນກິນງາຍແລ້ວທ້າວຈຶ່ງອ້ອນວອນຍ່າວ່າ: ຍ່າເອີຍໄປອີກດູ່ມັ້ນພະຍາເພິ່ນຊິໃຫ້ຄຳຕອບແນວໃດ ໄດ້ຫລືບໍ່ໄດ້ກໍຢາກຮູ້ ໄປເທາະຍ່າອີກເອົາ ໄປເທື່ອດຽວສຸດທ້າຍທີ່ນີ້ແຫລະ, ເມື່ອຍ່າໄດ້ຍິນກໍຮ້າຍຂຶ້ນພ້ອມບາດໂລດນຶ່ງສັ່ງມາກະດັກກະດໍ້ຈຳໃຫ້ແຕ່ກູໄປຫາພະຍາແທ້ກູຢ້ານບໍ່ມີຫວັງດອກຄຳໂອມຊິເສຍເປົ່າທັ້ນແລ້ວແຫນງວ່າບັກ ບັ້ງໄມ້ແຂວນ ໄວ້ຜູກແອວດີກວ່າ ເວົ້າແລ້ວຍ່າກໍຫົວເຕາະຫົວເຕີ່ນຂຶ້ນ ທ້າວກ່ຳກາດຳກໍຫົວນຳຍ່າ ທັງເວົ້າວ່າ ແຂວນກໍແຂວນໂລດບັ້ງເກືອກໍໄດ້ໄວ້ຄັ້ນສົ້ມໃຫ້ມັນອ່ອນນີ້ ຄັນວ່າເຫັນຫມາກສົ້ມຊິ ໒ ເກືອກິນງ່າຍ ຍ່າເອີຍ ກິນບໍ່ໄຮ້ໂດຍໄດ້ດັ່ງໃຈແທ້ໃດ. ເວົ້າແລ້ວຍ່າກັບຫລານກໍພາກັນຫົວຂຶ້ນດ້ວຍຄວາມມ່ວນຊື່ນ.

ທ້າວກ່ຳກາດຳເຫັນວ່າເຖິງລຶກງາມຍາມດີແລ້ວ ຈຶ່ງຈຳຍ່າໃຫ້ລົງເຮືອນໄປເຝົ້າພະຍາດ່ວນຈັກຫນ້ອຍມັນຊິກາຍຍາມດີມີໂຊກ ຍ່າ ຈຶ່ງປະເຕີປະເຕຟ້າວລົງເຮືອນ ໄວຮີບຫນ້ອຍບໍ່ຊ້າເຖິງຄຸ້ມພະຍອດເມືອງພໍຍ່າຂຶ້ນ ໄປຫາພະຍາແນມເຫັນກໍທ້ວງຂຶ້ນກ່ອນ ໂອ! ຍ່າມາແທ້ ນໍຄິດວ່າຍ່າຊິມາຕົວະຊົ້ນດອກ ອັນນີ້ສະແດງວ່າຍ່າມີຄວາມປະສົງຕໍ່ລູກສາວເຮົາແທ້ຈຶ່ງມາຕາມທີ່ໄດ້ນັດຫມາຍເອົາໄວ້ຢ່າງຖືກຕ້ອງ. ຍ່າຈຶ່ງເວົ້າວ່າ ຂ້ານ້ອຍປະຕິບັດຕາມຄຳສັ່ງທີ່ພະອົງໄດ້ສັ່ງໃນມື້ນັ້ນ ບັດ ນີ້ຂ້ານ້ອຍກໍໄດ້ມາເຖິງແລ້ວສຸດແທ້ແຕ່ພະອົງຈະໂຜດພາຍດີຮ້າຍ ເປະ

ການໃດ. ພະຍາຈຶ່ງເວົ້າເປັນຄຳເດັດຂາດຕໍ່ຍ່າວ່າ ໄດ້ຕົກລົງປົງ ໃຈ ຈະໃຫ້ລູກສາວຫລ້າຄືນາງລຸນເອົາກັບທ້າວກ່ຳກາດຳຫລານຂອງ ຍ່າ ດັ່ງບົດກອນຂຽນວ່າ.

ເມື່ອນັ້ນພະຍາຫລວງເຈົ້າ   ມີຄຳໂອວາດ
ເຈົ້າກໍຕັດຂາດໃຫ້   ຍາຍແທ້ຊູ້ອົນ
ອັນວ່າກາດຳນ້ອຍ   ປະສົງນາງນົງຖ່າວ ເຮົານັ້ນ
ເຮົາຊິປຸນປູກໃຫ້   ບາທ້າວດັ່ງປະສົງ ຍ່າເອີຍ

ພະຍາເມືອງເວົ້າວ່າ ເຕັມທີແຕ່ຄ່າສອດສິນດອງຂອງນາງ ນັ້ນແຫລະຍ່າເອີຍ ເພາະວ່າເຮັດສິນຫຽດສັກສີຂອງນາງແຕ່ນັ້ນຄື ຈະເຕັມທີຫລານຊາຍຍ່ານັ້ນລະ, ພະຍາເວົ້າເຖິງຄ່າດອງຂອງນາງ ລຸນຊູ່ຍ່າຟັງວ່າ ມັນຫນັກຫນ່ວງເຫລືອທີສຸດແທ້ໃດ ທ້າວຈະມີຄວາມ ສາມາດຫາມາໄດ້ບໍ່ ຄ່າດອງມີດັ່ງນີ້ ຊ້າງພັນໂຕພ້ອມດ້ວຍຄວານຊ້າງປະຈຳທຸກໂຕ. ມ້າກໍໃຫ້ໄດ້ພັນໂຕມີຄົນຂີ່ປະຈຳທຸກໂຕ. ເງິນແລະຄຳ ໃຫ້ໄດ້ຫນັກເຖິງແສນຊັ່ງ ຂ້ອຍຮັບໃຊ້ໃຫ້ໄດ້ພັນຄົນສະເພາະສາວ ສະຫນົມນາງໃນໃຫ້ໄດ້ພັນຄູ່ ອັນຫນຶ່ງໃຫ້ທ້າວສ້າງຂົວເງິນພ້ອມຂົວ ຄຳຮຽງຮາບ ຕັ້ງແຕ່ເຮືອນຍ່າກ່າຍມາເຖິງພະລາຊະວັງພໍ້ ຖ້າ ທ້າວກ່ຳກາດຳຫາກປະຕິບັດຕາມນີ້ທຸກອັນ ເຮົາຈະຍົກລູກສາວໃຫ້ໂລດຍ່າຈຳສວນໄດ້ຟັງດັ່ງນັ້ນຈຶ່ງຍິ້ມຂານຮັບ ຄວາມປະສົງຂອງພະ ອົງແລ້ວຍ່າກໍທູນລາກັບຄືນເຮືອນນ້ອຍຢູ່ສວນ.

ພໍແຕ່ຍ່າປ້າຍກົ້ນລົງນັ່ງກະຟາກເຮືອນ ທ້າວກ່ຳກາດຳກໍຖາມ ຍ່າຂຶ້ນໂລດ ເປັນແນວໃດຍ່າ ໄປຂໍນາງມັນພະຍາເຫັນດີບໍ? ຫລືວ່າ ຍ່າ

ບໍ່ໄດ້ໄປມິແຕ່ໄປພົບບັກເຖົ້າຫົວຂາວລ້ານແຍ່ເຈົ້າຫາກຊັບຊຶ້ມແລ້ວ ອີຍາຍເຖົ້າກໍຕ່າວມາບົ້ນເດ. ຍ່າເອົາຝ່າມືຕົບເອິກບາດຫນຶ່ງແລ້ວ ກໍເວົ້າອອກມາດ້ວຍຄວາມຕ່ຳຄ້ອຍນ້ອຍໃຈຊູ່ຫລານຟັງວ່າ ພະຍາເມືອງເພິ່ນຄາດຄ່າດອງຕັ້ງຫລວງຫລາຍພາຍມາກ ມິງຢ່າມາ ຈາຄວາມຫລົ້ນຫົວໃຈກູຊິຂາດຕາຍແລ້ວບັກເວນເອີຍ ຂອງຢູ່ເຮືອນກູບໍ່ມີຫຍັງຈັກອັນຊິໄປເອົາທາງໃດມາໃຫ້ເພິ່ນແມ່ນຊິຂາຍກູຂາຍມຶງ ແລະຂາຍເຮືອນໃສ່ ລວມທັງສວນຫມາກໄມ້ທຸກອັນກໍບໍ່ພໍຊິແຕ່ງນາງ ດອກຍ່າໄດ້ເລົ່າເຖິງຄ່າດອງໃຫ້ທ້າວຟັງດັ່ງບົດກອນຂຽນວ່າ.

ພະຍາກໍຫາກຄາດຄ່າກ້ວາງ    ຊ້າງໃຫ່ຍພັນໂຕ
ນາຍຄໍ່ຊັບ    ຊູ່ຕົວທາງທ້າຍ
ອາຊະໄນ້ມາ    ພັນຕົວນາຍຂີ່ ພ້ອມນັ້ນ
ເງິນຄຳແສນຊັ່ງຊິງຄາດໄວ້    ເຖິງຖ້ອນຈັ່ງຊິເອົາ
ອັນຫນຶ່ງເພິ່ນໃຫ້ສ້າງ    ຂົວຄຳຕາມໄຕ່
ທັງຂົວເງິນພ່ຳພ້ອມ    ເຖິງເທົ້າຮອດໂຮງ
ອັນຫນຶ່ງຝູງສາວໃຊ້    ສະນົມໃນນ້ອຍຫນຸ່ມ
ມີພຽບພ້ອມ    ພັນຖ້ອນຄູ່ນາງ ແຫນາ

ຍ່າວ່າຄ່າດອງຂອງເພິ່ນຄາດໄວ້ນ ແມ່ນວ່າມຶງກັບກູຕາຍ ແລ້ວເກີດຈັກຫ້າຊາດກໍບໍ່ມີປັນຍາຫາໄດ້ລອກ ກູກໍບໍ່ເຄີຍພໍ້ເຄີຍເຫັນຄືນ ອີຫຍັງມາຂາຍກັນກິນກະດັດກະດ້ແຫ. ຍ່າທັງຈົ່ມທັງເຮັດຂສີບອອມ ໆ ນ້ຳຫມາກເຮັຍລົງທັງສອງຂ້າງ ທ້າວກ່ຳກາດຳແນມເຫັນກໍເລີຍ ຫົວຂວັນຍ່າພ້ອມທັງເວົ້າວ່າ ຍ່າຢ່າໄດ້ຮ້ອນໄດ້ເດືອງນຳຂ້ອຍຖ້ອນເງິນ

ຄຳສ່ຳນວັນຂອຍຊິຫາເຂົາດອກ ຂໍແຕ່ໄດ້ນາງລຸນມາເປັນເມຍ ເສຍທີ່ໃດກໍ່ບໍ່ວ່າດອກນາຍຢ່າເອີຍແມ່ນຊິຫນັກເກີ້ງຟ້າຊາຊ້ງທໍລະນີກໍຊິຫາມາຈົນໄດ້ ຢ່າບໍ່ຕ້ອງຈ້ອນບໍ່ຕ້ອງເຄືອງນຳຂ້ອຍຈົ່ງຢູ່ຢ່າງສະບາຍໆ.

## 14. ບັ້ນທ້າວກ່ຳກາດຳຊອກຫາເງິນຄ່າດອງ

ເມື່ອຍ່າກັບຫລານໂສເຫລັກັນເລື່ອງເງິນຄ່າດອງທີ່ພະຍາ ເມືອງເປັງຈານຄາດໄວ້ແລ້ວ, ຕໍ່ມາທ້າວ ໄດ້ບອກຍ່າວ່າຈະ ໄປທ່ຽວຫລິ້ນປ່າເພື່ອຊອກຄວ່າເຕົ່າຄວ່າແລນບາງເທື່ອໂຊກດີໄດ້ແລນມາຕ້ອນຍ່າໃຫ້ຍ່າຖ້າຢູ່ເຮືອນບໍ່ຕ້ອງຮ້ອນເຄືອງອັນໃດຫມົດຈື່ງຢູ່ຢ່າງສະບາຍໆ ຜູ້ເປັນຍ່າ ໄດ້ຍິນທ້າວບອກແນວນັ້ນຈື່ງຖາມວ່າ: ມຶງຊິ ໄປທ່ຽວຫລິ້ນທາງໃດໂອນສາວແລ້ວຊິເປັນໃຈສະຫວັດຢູ່ຊົ້ນບໍ່ເປັນຫຍັງບໍ່ໄປຊອກ ເງິນຫາຄຳມາໃສ່ດອງມຶງແນ່. ທ້າວກ່ຳກາດຳຫຳທ່າເວົ້າຢົກແກມຢອກຍ່າວ່າ: ກະຍັງວ່າຂ້ອຍຊິພາຫມາ ໄປຊອກເຕົ່າຊອກແລນລາງເທື່ອ ໄດ້ມາຕ້ອນຍ່າຈັກສອງໂຕ, ເຈົ້າບໍ່ຕ້ອງເດືອດຮ້ອນດອກນ່າເລື່ອງ ຄ່າແກ່ວຄ່າດອງສະບາຍໂລດຍ່າເອີຍ. ເວົ້າແລ້ວທ້າວກໍເອີ້ນ ເອົາຫມາມຸ່ງຫນ້າເຂົ້າສູ່ປ່າ ຝ່າຍຍ່າເຖົ້າ ໄດ້ ແຕ່ ນັ່ງ ແນມ ນຳ ຫລັງຂອງທ້າວ.

ທ້າວກ່ຳກາດຳພາຫມາ ໄປເຖິງດົງໃຫ່ຍແຫ່ງຫນື່ງທີ່ຮາບຮຽງພຽງງາມອຸດົມສົມບູນ ໄປດ້ວຍທິວທັດທຳມະຊາດອັນສວຍງາມ, ທ້າວ ໄດ້ເອົາແຫວນມາສຸບໃສ່ນີ້ວມືແລ້ວກໍອະທິຖານ ໃຫ້ວອນເຖິງສິ່ງສັກ ສິດແລ້ວກໍແກ່ວງແຫວນ ໄປທາງເມືອງນາກຈື່ງຮ້ອນເຖິງພະຍານາກ ຢູ່ເມືອງບາດານ ພະຍານາກຈື່ງແປງຕົວເປັນຄົນຂື້ນມາຫາທ້າວ. ພ້ອມດຽວກັນນັ້ນທ້າວກໍແກ່ວງແຫວນ ໄປທາງເບື້ອງບົນຈື່ງຮ້ອນເຖິງພະ ຍາຟ້າຊູ່ແຖນ ແລະຮ້ອນ ໄປເຖິງຫູງຂອງພະຍາແຖນຟ້າຄືນດັ່ງນັ້ນ ພະ

ຍາແຖນຟ້າຄື້ນຈຶ່ງສົ່ງໃຫ້ບັນດາແຖນທັງຫລາຍລົງມາສູ່ໂລກ ມະນຸດບ່ອນທ້າວກ່ຳກາດລ້ຳຖ້າຢູ່ດັ່ງບົດກອນຂຽນວ່າ

ຮ້ອນຮອດໜິ້ງເຈົ້າ ພະຍາແຖນຟ້າຄື້ນ
ພະຈຶ່ງຕົນໄພ່ນ້ອຍ ພົນລ້ານລ່ວງລົງ
ແຖນຫລວງເຈົ້າ ແຖນລໍແຖນຫລໍ່
ກັບທັງແຖນຫລໍ້ຟາ ລົງພ້ອມຊູ່ແຖນ

ເປັນອັນວ່າ ບັນດາແຖນມີໜ້າທີ່ຮັບຜິດຊອບແຕ່ລະຂະແໜງການໄດ້ພ້ອມກັນລົງມາໝົດ ຟັງສຽງແຫ່ແຫນກັນລົງມາພໍປານວ່າຟ້າດິນຊິປົ້ນ. ເມື່ອລົງມາແລ້ວກໍໄດ້ເຂົ້າໄປຫາທ້າວ ເພື່ອຂໍຮູ້ຈຸດປະສົງ, ດັ່ງນັ້ນທ້າວຈຶ່ງໄດ້ໃຫ້ຮູ້ວ່າດຽວນີ້ຄົດໄດ່ສູກຢູ່ສ້າງເປັນເຈົ້ານັ່ງປອງ ທັງພ່ອງຢາກໄດ້ນາງລຸນມາເປັນເມຍຈຶ່ງຂໍໃຫ້ຊ່ອຍສ້າງບ້ານແປງເມືອງ ແລະຊ່ອຍຈັດຫາຄ່າແກ່ວຄ່າດອງໃຫ້ພ້ອມ. ບັນດາພະຍາແຖນອັນມີພະຍາແຖນຟ້າຄື້ນເປັນຕົ້ນ ກໍໄດ້ຮັບປາກຈະຈັດການໃຫ້ທຸກຢ່າງຕາມທີ່ຕ້ອງການ. ບຶດໜຶ່ງພະຍາອິນກໍລົງມາຫາຕື່ມອີກ ເມື່ອໄດ້ຮູ້ຈຸດປະສົງຂອງທ້າວແລ້ວກໍຮັບປາກວ່າຍິນດີຊ່ວຍທຸກອັນ ຝ່າຍພະຍານາກຮັບປາກວ່າບໍ່ຍາກຫຍັງໝົດ ຈຶ່ງເຮັດໃຫ້ທ້າວກ່ຳກາດລ້ຳມີຄວາມດີອົກດີໃຈ.

ໃນເວລາຕໍ່ມາພະຍາອິນ, ພະຍາແຖນແລະພະຍານາກກໍພາກັນນິລະມິດເມືອງໃຫ້ທ້າວພ້ອມດ້ວຍເງິນຄຳແກ້ວແຫວນຂ້ອຍຂ້ານ້າ ໃຊ້ສາງເງິນສາງຄຳ ແລະເຮັດຂົວເງິນຂົວຄຳກ່າຍໄປເຖິງພະລາຊະວັງຂອງພະຍາ. ໝາຍຄວາມວ່ານິລະມິດໃຫ້ເກີດມາຄືບຕາມທີ່ພະ

ຍາ ໄດ້ຄາດເປັນຄ່າດອງເອົາ ໄວ້ທຸກຢ່າງ. ພ້ອມກັນນັ້ນກໍໄດ້ສ້າງ ເປັນ ສວນອຸດທິຍານ ໄວ້ເຊິ່ງໂດຍລະດາດໄປດ້ວຍດອກໄມ້ນາໆຊະ ນິດ ແລະໝາກໄມ້ທັງຫວານທັງສົ້ມມີຄົບ. ບັນດາກຳລັງພົນຂອງພະ ຍານາກທີ່ມາຮ່ວມສ້າງເມືອງໃນຄາວນັ້ນມາກມາຍຟັງສຽງເມືອງນັ້ນສະ ນັ້ນ ຫວັ່ນໄຫວ ສຽງດັ່ງກ່າວ ໄດ້ດັງກ້ອງໄປຮອດພາສາດຂອງພະຍາ ເມືອງຈີນວ່ານອນກໍບໍ່ໄດ້.

ດັ່ງນັ້ນ ພະອົງຈຶ່ງສັ່ງໃຫ້ເສນາອາມາດອອກໄປຊອກເບິ່ງສຽງນັ້ນ ນັ້ນແມ່ນສຽງຫຍັງແທ້ ຫລືວ່າມີເສິກຕ່າງດ້າວຈະມາຍຶດເອົາ ເມືອງ ບໍ? ເປັນສັງເຂົາຈຶ່ງບໍ່ສົ່ງສານມາບອກລ່ວງຫນ້າກ່ອນ. ພວກ ເສນາ ຮັບໃຊ້ຈຶ່ງຟ້າວພາກັນໄປຫາເຮືອນຍ່າເຖົ້າຈຳສວນ ເມື່ອໄປຮອດປະ ກົດວ່າຍ່າເຖົ້ານອນຫລັບສະບາຍບໍ່ຮູ້ເລື່ອງຫຍັງພວກເສນາຈຶ່ງປຸກໃຫ້ ລຸກຂຶ້ນ ເພື່ອຈະໄດ້ໄຕ່ຖາມຫາກົກປາຍສາຍເຫດ ແຕ່ຍ່າພັດຄຶດ ວ່າ ແມ່ນທ້າວກ່ຳກາດຳມາປຸກຈຶ່ງຮ້ອງອອກໄປໃສ່ວ່າຫລານກັບມາ ແລ້ວ ບໍ? ເມື່ອເບິ່ງຄັກໆພັດແມ່ນເສນາຮັບໃຊ້ຂອງພະອົງ ຍ່າຈຶ່ງຕົກ ໃຈ ກົວແລະຟ້າວຖາມວ່າ ພວກພີ້ນອງພາກັນມາມີວຽກຫຍັງແນ່ນໍ່, ພວກ ເສນາຈຶ່ງບອກໃຫ້ຍ່າຮູ້ດັ່ງບົດກອນຂຽນວ່າ.

ແຕ່ນັ້ນຂຸນຫລວງເຈົ້າ    ເສນາອາມາດ
ເຂົາຮໍ່ແຫນຮ່າງໃຫ້    ຍາຍຮູ້ຊູ້ອົ້ນ
ບັດນີ້ເສິກເຂົ້າບ້ານ    ຊິຊິງຍາດເອົາຂອງ ຍ່າແລ້ວ
ຍ່າສັງມາເຢັນໃຈ    ບໍ່ກົ້ວເກງຢ້ານ
ແຕ່ນັ້ນຍ່າກໍຕົກໃຈແທ້    ນຳຫລານທ້າວກ່ຳ

ມັນກໍໄປແຕ່ເຊົ້າ    ປານນີ້ຕ່າວມາ

ພວກເສນາອາມາດ ໄດ້ເລົ່າສະພາບສູ່ຍ່າເຖົ້າຟັງແລ້ວ ເຂົາກໍລາຍ່າມຸ່ງໜ້າໄປສູ່ຄຸ້ມຫລີ່ວ່າເຕົວເມືອງສ້າງໃໝ່ຂອງທ້າວກ່ຳກາ ດຳເມື່ອໄປຮອດກໍຖາມພວກທີ່ເປັນລູກນ້ອງຂອງພະຍາຟ້າຄື້ນຢູ່ໃນເມືອງນັ້ນວ່າ ພວກເຈົ້າມາຈາກໃສຈະມາຍາດຊິງເອົາບ້ານເອົາ ເມືອງຂອງພວກເຮົາບໍ? ພວກລູກນ້ອງຂອງພະຍາຟ້າຄື້ນຈຶ່ງຕອບເຂົາ ວ່າພວກຕົນເປັນຄົນເມືອງຟ້າເປັນຊາວແຖນ ໄດ້ລົງມາຈາກຟ້າ ພ້ອມດ້ວຍພະຍາອິນ, ນອກຈາກພວກຕູແລ້ວຍັງມີພະຍານາກຕື່ມອີກ. ພວກຕູທັງໝົດ ໄດ້ພາກັນມາຊ່ວຍທ້າວກ່ຳກາດຳເພື່ອສ້າງບ້ານແປງເມືອງໃຫ້ທ້າວ ແລະນຳເອົາເຄື່ອງຂອງຕ່າງໆມີທັງແກ້ວແຫວນເງິນຄຳຕະຫລອດຮອດຂ້ອຍຂ້ານ້ຳໃຊ້ມາມອບໃຫ້ທ້າວ ເພື່ອວ່າທ້າວຈະ ໄດ້ນຳໄປຖວາຍແກ່ພະຍາເມືອງ, ພວກທ່ານຢ່າເຂົ້າໃຈຜິດອັນນີ້ແມ່ນຕົວເສິກຈາກທາງໃດດອກອັນວ່າເມືອງພຸ້ນພຫ້ຽວຄາຮອດກັນ.

ພວກເສນາອາມາດຂອງພະຍາເມືອງ (ພີ່ນາງລຸນ) ໄດ້ຟັງ ການບອກກ່າວຄືແນວນັ້ນກໍພາກັນແນມເບິ່ງທໍໂຮງພາສາດລາຊະມຸນທຽນມີຄົນຢູ່ເຕັມນັບເປັນລ້ານໆດັ່ງບົດກອນຂຽນວ່າ

ເຫັນທັງເມືອງໃຫ່ຍກ້ວາງ    ສຸດຊື່ວຕາຄອຍ
ຕັ້ງທາກດູງາມເໝືອນ    ດັ່ງດາວວະດິງຟ້າ
ຄອມວ່າເຂົາຈາແລ້ວ    ໜີເມືອເມືອງເກົາ
ຂຶ້ນຂາບໄຫ້ວ    ທູນເຈົ້າທ່ານພະຍາ

ພວກເສນາອາມາດ ໄດ້ຂາບທູນໃຫ້ພະຍາເມືອງຮູ້ວ່າເຂົາ ໄດ້ໄປ

ເບິ່ງແລ້ວ ປະກົດວ່າມີຄົນນັບເປັນລ້ານເປັນໂກດເຫັນທັງຫໍ ຜາສາດ
ລາຊະມົນທຽນອັນສວຍງາມປະດັບປະດາໄປດ້ວຍເງິນຄຳຮຸ່ງ ເຮືອງ
ເຫລືອງເຫລື້ອມມີທັງກຳແພງເມືອງກໍ່ດ້ວຍຫີນອັນແໜ້ນໜາຍາວສຸດ
ຊື່ວສາຍຕາ. ຄົນຈຳນວນນັ້ນໄດ້ບອກວ່າເຂົາແມ່ນພົນໄພ່ຟ້າທີ ມາ
ຈາກເມືອງສະຫວັນ ເປັນພົນຂອງພະຍາແຖນຟ້າຄື້ນ. ພົນຂອງພະຍາ
ອິນແລະພົນຂອງພະຍານາກ. ພະຍາເມືອງໄດ້ຮູ້ດັ່ງນັ້ນແລ້ວຈຶ່ງຄິດໃນ
ໃຈວ່າທ້າວກ່ຳກາດຳເປັນຜູ້ມີບຸນຍາປາລະມີອັນແກ່ກ້າເປັນທີ່ ກ່າວ
ຂານແລະເກັງຂາມແກ່ຊາວໂລກທັງມວນ, ພະຍາເມືອງມີຄວາມປິ ຕິ
ຊົມຊື່ນເປັນຢ່າງຍິ່ງທັງເວົ້າວ່າ ບັດນີ້ເຂົາຊິເອົາກຳລັງຄົນແລະຊ້າງ
ມ້າເຂົ້າຂອງເງິນຄຳມາຊ່ອຍເມືອງເຮົາແລ້ວ.

ກ້າວເຖິງພະຍາແຖນຟ້າຄື້ນກັບທັງພະຍາອິນແລະພະຍານາກ ໄດ້
ພ້ອມກັນສ້າງເມືອງໃຫ້ທ້າວແລ້ວຕໍ່ມາພະຍາອິນກໍນິລະມິດຂົວເງິນຂົວ
ຄຳໃຫ້ແກ່ທ້າວກ່ຳກາດຳ, ຂົວນີ້ທາງກ້ວາງເຈັດສອກທາງຍາວນັ້ນນັບ
ແຕ່ເມືອງຂອງທ້າວກ່າຍຢຽດໄປຈົນເຖິງໂຮງພະຍາເມືອງພ້ອມ ທັງ
ນິລະມິດໃຫ້ມີຂອງທິບທຸກຢ່າງ ແລະສາວສະໜົມກົມມະວັງ ຊຶ່ງ ແຕ່
ລະຄົນກໍລ້ວນແລ້ວແຕ່ຈົບງາມ. ພ້ອມກັນນີ້ພະຍາແຖນຟ້າຄື້ນກໍຖວາຍ
ລູກສາວຊື່ວ່າຄຳຢາດແກ່ທ້າວກ່ຳກາດຳ, ພະຍານາກກໍຖວາຍລູກສາວ
ຊື່ວ່າບົວລອຍໃຫ້ແກ່ທ້າວເໝືອນກັນ, ບໍ່ພຽງແຕ່ຖວາຍລູກສາວ ໃຫ້
ເທົ່ານັ້ນຍັງຖວາຍສາວໃຊ້ຕື່ມອີກ

ຕໍ່ມາພະອິນກໍໄດ້ສັ່ງສອນກ່ຽວກັບຮີດຄອງຂອງທ້າວທຸກອັນ ຄື ໃຫ້
ທ້າວມີອາຍຸໝັ້ນຂວັນຍືນ ປົກຄອງໄພ່ຟ້າປະຊາກອນທົ່ວທຸກຂອບເຂດ

ແລະຍ່າໄດ້ມີໃຈຄຶດລ້ຽວຕໍ່ນາງທັງຫລາຍທີ່ຢູ່ທຽມຂ້າງ ທັງໃຕ້ ສ້າງບຸນທຳທານເພື່ອຈະໄດ້ຢູ່ດີມີສຸກແລະມີບຸນປາລະມີແຜ່ຂະຫຍາຍ ໄປທົ່ວແຜ່ນດິນ, ທ້າວກ່ຳກາດຈຳກໍຍິນດີຮັບເອົາຄຳສັ່ງສອນຂອງພະຍາ ອິນທຸກປະການ.

ເມື່ອສັ່ງສອນທ້າວແລ້ວພະອິນກໍກັບຄືນສູ່ເມືອງສະຫວັນ, ພະ ຍາແຖນຟ້າຄື້ນແລະພະຍານາກຫລວງກໍກັບຄືນສູ່ທີ່ຢູ່ແຫ່ງຕົນເຊັ່ນດຽວກັນ ຕື່ນເຊົ້າຂອງມື້ນັ້ນຊາວເມືອງໃພງກໍພາກັນງຶດງໍ້ອັດສະຈັນໃຈທີ່ ໄດ້ເຫັນບ້ານເມືອງອັນສວຍງາມເກີດຂຶ້ນໂດຍມີທ້າວກ່ຳກາດຈຳເປັນຜູ້ສະຫວັຍເມືອງ. ບາງຄົນກໍວ່າທ້າວເປັນຜູ້ມີບຸນວາດສະໜາແທ້ຈຶ່ງ ໄດ້ນັ່ງເມືອງ, ດັ່ງນັ້ນຜູ້ໃດກໍ່ຫຸ້ມທີ່ພາກັນຈູງລູກອຸ້ມຫລານໄປເບິ່ງ ບາງຄົນກໍເວົ້າວ່າກ່ອນນີ້ຕອນທີ່ທ້າວໄປທ່ຽວຫລິ້ນນັ້ນ ພວກເຮົາຍັງພາກັນເອົາໄຟໄລ່ຈູດທ້າວຢູ່ ບັດນີ້ທ້າວໄດ້ເປັນຜູ້ສະຫວັຍເມືອງນັ້ງ ແທນເສຍແລ້ວ.





# 15: ຂັ້ນທ້າວກ່ຳກາດຳແຕ່ງດອງ ກັບນາງລຸນ

ກ່າວເຖິງທ້າວກ່ຳກາດຳເມື່ອພະຍາອິນພະຍາແຖນຟ້າຄື່ນແລະພະຍານາກໄດ້ນິລະມິດເມືອງໃຫ້ພ້ອມດ້ວຍເຂົ້າຂອງເງິນຄຳຊ້າງມ້າໄພ່ພົນແລ້ວ, ຕໍ່ມາທ້າວກໍໄດ້ແຕ່ງຕັ້ງໃຫ້ເສນາຂີ່ມ້າໄປຂາບທູນຕໍ່ພະຍາເມືອງ (ພໍ່ຂອງນາງລຸນ) ໃຫ້ກະກຽມຮັບຕ້ອນຂະບວນທີ່ຈະຍົກມາໃຫ້ປຸກຜາມພັກເຊົາໄວ້ 3 ຫລັງ ເພາະວ່າພິທີແຫ່ເຂີຍຄັ້ງນີ້ເປັນຂະບວນໃຫຍ່ອັນປະກອບໄປດ້ວຍຂະບວນເສນາອາມາດແລະ ຂະບວນຊ້າງມ້າເຂົ້າຂອງເງິນຄຳອັນຫລວງຫລາຍຕາມທີ່ພະຍາ ເມືອງໄດ້ຄາດຄ່າດອງເອົາໄວ້ ແລະໃນໂອກາດນີ້ພະຍາອິນພະຍາແຖນ ແລະພະຍານາກກໍຈະໄປຮ່ວມນຳພ້ອມ.

ຝ່າຍເສນາໄດ້ຮັບຄຳສັ່ງຂອງທ້າວດັ່ງນັ້ນແລ້ວ ກໍຂີ່ມ້າ ເດີນທາງໄປແຈ້ງຂ່າວນີ້ໃຫ້ພະຍາເມືອງໄດ້ຮູ້ເພື່ອກຽມການຮັບຕ້ອນຕາມແຜນການທີ່ທ້າວໄດ້ແນະນຳນັ້ນທຸກຢ່າງແລະຢ້ຳຕື່ມວ່າຕອນທ່ຽງທ້າວຈະນຳສິນສອດຄ່າດອງມາຖວາຍພະອົງພ້ອມ. ຝ່າຍພະ ຍາ ເມືອງໄດ້ຮູ້ແນວນັ້ນແລ້ວກໍສັ່ງໃຫ້ຕີຄ້ອງຮ້ອງປ່າວເປັນການເຕືອນໃຫ້ ຊາວເມືອງໄດ້ຮູ້ແລ້ວພາ ກັນມາເຕົ້າໂຮມ, ເມື່ອຊາວເມືອງມາພ້ອມພຽງກັນແລ້ວພະຍາຈຶ່ງມີຄຳສັ່ງໃຫ້ເອົາປຸກຜາມຮັບຕ້ອນເຖິງ 3 ຜາມ ຢູ່ທີ່ສະໜາມຫລວງເປັນການດ່ວນ, ດັ່ງນັ້ນ ພວກເສນາອາມາດແລະຊາວເມືອງຈຶ່ງໄດ້ພາກັນລົງມືປຸກຜາມ 3 ຫລັງໂດຍແບ່ງ ປັນ ວຽກງານໃຫ້ກັນຢ່າງລະອຽດ, ບໍ່ພໍເທົ່າໃດຜາມທັງ 3 ຫລັງກໍ ແລ້ວຮຽບ

ຮ້ອຍພວກເສນາອາມາດຈຶ່ງຂຶ້ນໄປຂາບທູນໃຫ້ພະຍາເມືອງ ຮູ້ວ່າໄດ້ປຸກຜາມສຳເລັດຕາມຄຳສັ່ງທຸກປະການແລ້ວ. ພະຍາຈຶ່ງສັ່ງຕື່ມວ່າໃຫ້ທຸກຄົນເອົາສາດໄປປູລົງລະພື້ນຕາມເສັ້ນທາງຕັ້ງແຕ່ຜາມໄຊຮັບຕ້ອນຈົນເຖິງໂຮງຫລວງ.

ປະຊາຊົນຊາວເມືອງຜູ້ໃດກໍເຝົ້າຄອຍທາງເພື່ອວ່າຢາກເຫັນໂຕທ້າວກ່ຳກາດຳ ຢູ່ຕາມແຄມທາງມີຊາວເມືອງເປັນແຖວຍາວຢຽດເພື່ອຄອຍຖ້າ ບາງຄົນຟ້າວຫລາຍຢ້ານບໍ່ທັນຫມູ່ກໍໂຕນເຮືອນແລ່ນຫົວປີກຫົວຂວາ້ ບາງຄົນຈົນວ່າສົ້ນເສື້ອເຮັ່ຍຊະຊາຍປະຕີນປະໂຕບາງຄົນຕ່ຳຫູກກໍຫລົງເອົາກະສວຍສອດທາງກອງເຄືອຫູກເພາະວ່າຈິດໃຈມິແຕ່ຈົດຈໍ່ຟ້າວຟັ່ງຢາກໄປເບິ່ງທ້າວ.

ເຖິງເວລາທີ່ຮຽງຂອງມັ້ນນັ້ນ ຂະບວນແຫ່ທ້າວກ່ຳກາດຳກໍໄດ້ຈັດໃຫ້ມີຂຶ້ນເປັນຂະບວນອັນໃຫຍ່ໂຕມະໂຫຖານ ອັນປະກອບດ້ວຍຂະບວນຊ້າງຂະບວນມ້າແລະຂ້ອຍຂ້າຍິງຊາຍດັ່ງບົດກອນຂຽນວ່າ.

ແຕ່ນັ້ນຄືນງກອງ ພົນຫລວງຫລາຍມາກ
ເອົາກໍຕົກແຕ່ງທ້າງ ປະໂຄມຊ້າງຊູຕົວ
ອັນວ່າອາຊະໄນມ້າ ຕົວດີອງອາດ
ເອົາກໍຕົກແຕ່ງທ້າງ ອານແກ້ວໃສ່ດາວ
ຟັງສຽງຄືນງກອງ ຊ້າງໃຫຍ່ພາຍວັນ
ຕົວຫນຶ່ງຖືກອງດຸມ ເສບບາບຸນກວາງ
ຕົວຫນຶ່ງໃສ່ປຫາ້ ຫັງແຖແຖນຂຸ່ຍ
ເອົາຕາກໍເສບເຈົ້າ ບາທ້າວຄືນຄັງ ເຈົ້າເອີຍ

ສ່ວນວ່າທ້າວກ່ຳກາດຄຳກໍເອ້ຍ້ອງດ້ວຍເຄື່ອງມ້າວເຊິອດ ຄຳໃສ່ກະໂຈມຫົວຄຳຕື່ມອີກ ເຖິງແມ່ນຕົວຂອງທ້າວຈະຖືກໂອບໄປດ້ວຍຄຳກໍຈິງ ແຕ່ວ່າຣູບຮ່າງຮ້າຍຂອງທ້າວກໍຍັງປະກົດໃຫ້ເຫັນຢູ່. ທ້າວກ່ຳກາດຄຳລົງຈາກທີ່ພາສາດແລ້ວກໍຍ່າງໄປຕາມຂົວເງິນຂົວຄຳ ໂດຍ ມີເສນາອາມາດແຫ່ແຫນຕາມຫລັງແລະໃນຂະບວນນີ້ ພະຍາອິນພະຍາແຖນພະຍານາກກໍໄດ້ເຂົ້າຮ່ວມນຳ, ພວກຂະບວນແຫ່ພາກັນ ກວັດແກວ່ງທຸງກະດາດແກ້ວ ທຸງຊໍ່ທຸງໄຊແລະທຸງພົນຫາງໄປຕາມ ທາງຢ່າງຟົດຟື້ນເຊິ່ງທຸງດັ່ງກ່າວແມ່ນພະຍາອິນນິລະມິດເອົາໃຫ້, ນອກຈາກທຸງດັ່ງກ່າວແລ້ວກໍຍັງມີການເສບຢູ່ໃນຂະບວນແຫ່ຢ່າງຄຶກ ຄື້ນມ່ວນຊື່ນທັງພ້ອງຫລິ້ນຕະຫລົກເຮຮາ ທັງພ້ອງຟ້ອນພ້ອງລຳແລ້ວ ແຕ່ໃຜຈະຄິດອອກເຮັດແນວໃດເພື່ອໃຫ້ຂະບວນແຫ່ມີຄວາມຟົດຟື້ນ, ພວກຊາວເມືອງທີ່ຄອຍຖ້າເບິ່ງຕາມສອງຟາກທາງໄດ້ເຫັນແລ້ວກໍມີຄວາມເບີກບານມ່ວນຊື່ນຕົບມືພິພ້າໂຮ່ແຊວຮັບຕ້ອນຂະບວນດັ່ງກ່າວ.

ຊາວເມືອງທັງຫລາຍໄດ້ພາກັນແນມເບິ່ງຮູບທ້າວກ່ຳກາດຄຳ ປານຮ່ານັ່ງຢູ່ໃນເບົ້າຄຳເພາະວ່າຕົວຂອງທ້າວຖືກໂອບດ້ວຍເຄື່ອງຄຳປະດັບເອ້ຍ້ອງເອົາໄວ້. ເມື່ອຂະບວນແຫ່ໄປເຖິງພານໄຊຮັບຕ້ອນທີ່ສະຫນາມຫລວງ ທ້າວຈຶ່ງພາຂະບວນຢຸດພັກເຊົາຢູ່ທີ່ນັ້ນ, ຕໍ່ມາທ້າວ ກ່ຳກາດຄຳກໍໄດ້ເຂົ້າໄປໃນໂຮງຂອງພະຍາ (ພໍ່ຂອງນາງລຸນ) ທ້າວ ໄດ້ຂາບທູນໃຫ້ພະອົງຮູ້ວ່າ ທ້າວໄດ້ຈັດຫາສິ່ງຂອງຕ່າງໆຕາມທີ່ພະ ອົງຕ້ອງການນັ້ນໄດ້ຄົບແລ້ວຈຶ່ງໄດ້ນຳມາຖວາຍດັ່ງບົດກອນຂຽນວ່າ.

ບັດນີ້ ລູກມະຫາລາຊະເຈົ້າ ໄດ້ເຄື່ອງຂອງຖວາຍ

ຂ້າຈັກນຳມາຖວາຍ ພະຍອດເມືອງເປັນເຈົ້າ
ມີທັງນາເຄນຊາງ ພັນຕົວຍໍຍືນ
ກັບທັງມ້າພ່າພ້ອມ ປະມານໄດ້ໜຶ່ງພັນ
ອັນໜຶ່ງເງິນຄຳພ້ອມ ພໍແສນຕາຊັ່ງ
ຂ້ອຍຊ່ວງໃຊ້ ໂດຍໄດ້ຮອດພັນ
ບັດນີ້ລູກມະຫາລາຊະເຈົ້າ ເອົາມອບຍໍຖວາຍ
ໂດຍດັ່ງຄຳພູມີຕັດ ຄ່ານາງແພງລ້ານ
ອັນວ່າການໃດເຈົ້າ ມີປະສົງບົນບອກ
ຂ້າຂໍຈັດແຕ່ງຫ້າງ ຕາມເຈົ້າບໍ່ຂືນ ພະເອີຍ

ຝ່າຍພະຍາເມືອງໄດ້ຮັບຟັງຄຳດັ່ງນັ້ນແລ້ວຈຶ່ງກ່າວກັບທ້າວກ່ຳກາດຳວ່າ ນີ້ນເປັນມິ່ງມຸງຄຸນອັນດີເຮົາຈະໄດ້ຈັດພິທີແຕ່ງດອງໃຫ້ເຈົ້າກັບນາງລຸນໃນຕອນທ່ຽງນໂລດ. ຕໍ່ມາພະອົງຈຶ່ງສັ່ງໃຫ້ເສນາອາ ມາດກະກຽມພິທີແຕ່ງດອງຂຶ້ນ ທັງໄດ້ສັ່ງໃຫ້ເຊີນມະເຫສີອອກມາເຂົ້າພາຂວັນນຳພ້ອມ, ເມື່ອທຸກຄົນມານັ່ງອ້ອມຢູ່ພາຂວັນເປັນທີຮຽບ ຮ້ອຍແລ້ວ ພະຍາເມືອງຜູ້ເປັນພໍ່ກໍຈຶ່ງສັ່ງໃຫ້ນາງສະໜົມໄປເຊີນ ເອົານາງລຸນຢູ່ທີ່ຜາສາດຂອງນາງໃຫ້ມາເຂົ້າພາຂວັນເພື່ອແຕ່ງດອງ ກັບທ້າວກ່ຳກາດຳ.

ເມື່ອນາງລຸນໄດ້ຮັບຄຳເຊີນຈາກນາງສະໜົມແລ້ວກໍພັດເນື້ອແຕ່ງຕົວປະດັບປະດາເອ້ຍ້ອງໄປດ້ວຍເຄື່ອງຄຳທັງມວນ ຈາກນັ້ນຈຶ່ງ ລົງຈາກທີ່ຜາສາດໄປສູ່ພິທີແຕ່ງດອງໂດຍມີສາວສະໜົມກົມມະວັງ ແຫ່ແຫນໄປຢ່າງຄັບຄາໜາແໜ້ນ; ພໍແຕ່ນາງໄປເຖິງໂຮງຂອງພະຍາ

ເມືອງບ່ອນກຽມພິທີແຕ່ງດອງ ນາງລຸນແນມເຫັນທ້າວກ່ຳກາດຳ ອັນມີຮູບໂສມຜິວພັນເຮິະຮ້າຍ ເຮັດໃຫ້ນາງກະເຫິນຍ້າຍບາດຕີນລົມ ຊິກັບຄືນກໍຈະເຮັດໃຫ້ອັບອາຍຂາຍໜ້າ. ດັ່ງນັ້ນ ນາງຈິ່ງຕັດສິນ ໃຈເຂົ້າໄປຫາທ້າວກ່ຳກາດຳຢູ່ໃນພາຂວັນ, ນາງໄດ້ຍໍມືນົບຕໍ່ທ້າວແລ້ວກໍນັ່ງຢູ່ຢ່າງສະຫງຽມຈຽມຕົວ. ຫລັງຈາກນັ້ນພະຍາເມືອງຈິ່ງສັ່ງໃຫ້ໝໍພອນເລີ່ມສູດຂວັນຕາມຮີດຄອງປະເພນີ, ເມື່ອສູດຂວັນອ່ານ ຄຳຖວາຍພອນແລ້ວ ພະຍາເມືອງຈິ່ງຜູກຂໍ່ຕໍ່ແຂນໃຫ້ທ້າວແລະນາງແລ້ວກໍທຳການຫົດສົງທ້າວ ພ້ອມສຽງເສບອັນນັນເມືອງ. ເມື່ອເສດພິ ທີເປັນທີ່ຮຽບຮ້ອຍແລ້ວໃພງກໍພາກັນກັບຄືນສູ່ຢາວເຮືອນແຕ່ງຕົນສຳລັບທ້າວກ່ຳກາດຳກໍລາລົງຈາກທີ່ຜາສາດກັບຄືນສູ່ຜາສາດຂອງທ້າວ ໂດຍການເດີນທາງໄປຕາມຂົວເງີນຂົວຄຳເຊິ່ງມີຂະບວນເສນາອາ ມາດແຫ່ແຫນໄປຕາມ. ທ້າວໄດ້ຢູ່ທີ່ຜາສາດທີເມືອງຂອງທ້າວດ້ວຍຄວາມຜາສຸກສຳລານມີບໍລິວານແວດລ້ອມ ແລະຄອງຄອຍໃຫ້ນາງລຸນ ເມືອຢູ່ທີ່ຜາສາດໃນເມືອງໃໝ່ ດ້ວຍຈິດໃຈອັນຈົດຈໍ່.

# 16ະ ບັ້ນທ້າວກ່ຳກາດຳຍອມ ຖອດຄາບ

ຫລັງຈາກພິທີແຕ່ງດອງແລ້ວ ແທນທີ່ວ່ານາງລຸນຈະໄປ ຢູ່ໄປນອນ ດອມທ້າວກ່ຳກາດຳ ນາງລຸນພັດກັບຄືນເມືອຢູ່ທີ່ຜາສາດຂອງ ນາງເອງ ປະໃຫ້ທ້າວກ່ຳກາດຳກັບຄືນເມືອສູ່ທີ່ຜາສາດທີ່ເມືອງຂອງທ້າວຜູ້ດຽວ. ສາເຫດທີ່ນາງລຸນບໍ່ຍອມໄປຢູ່ຮ່ວມທ້າວນັ້ນ ເພາະວ່ານາງໄດ້ເຫັນຮູບຮ່າງຮ້າຍຂອງທ້າວ ເຮັດໃຫ້ນາງຄຶດຄະນຶງໃນໃຈແບບວ່າກືນບໍ່ເຂົ້າຄາຍບໍ່ອອກ. ກ່ອນໜ້ານີ້ເວລາທີ່ທ້າວກ່ຳກາດຳໄດ້ລັກເຂົ້າໄປຫານາງໃນບ່ອນນອນນັ້ນທ້າວມີຮູບໂສມຜິວພັນອັນງາມຫາໃຜປຽບບໍ່ໄດ້, ແຕ່ເວລາເຂົ້າພາຂວັນນຳກັນນັ້ນທ້າວມີຮູບເຮີະຮ້າຍຈິງ ນາງລຸນບໍ່ພໍໃຈ.

ສ່ວນວ່າທ້າວກ່ຳກາດຳນັ້ນ ເມື່ອກັບເມືອຢູ່ຜາສາດຜູ້ດຽວ ກໍມີຄວາມຄຶດຮອດຫານາງລຸນເອົາແທ້ເອົາວ່າ ດັ່ງນັ້ນທ້າວຈຶ່ງແຕ່ງ ໃຫ້ສາວຮັບໃຊ້ ໄປເຊີນນາງລຸນມາຢູ່ນຳພວກສາວໃຊ້ຈຶ່ງໄປເຊີນຕາມສັ່ງ ແຕ່ນາງລຸນໄດ້ເວົ້າກັບສາວໃຊ້ຂອງທ້າວວ່າ ເມື່ອໄດ້ເຫັນຮູບ ຮ່າງຂອງທ້າວມີຄວາມເຮີະຮ້າຍຄືແນວນັ້ນເປັນອັນອັບອາຍຂາຍໜ້າ ຈຶ່ງບໍ່ກ້າຈະໄປຢູ່ນຳທ້າວໄດ້, ແຕ່ກ່ອນນັ້ນເວລາທ້າວມາຫາຄືວ່າຜູ້ຈົບ ຜູ້ງາມເອົາແທ້ເອົາວ່າ ດັ່ງບົດກອນຂຽນວ່າ.

ຍາມທ້າວຫຼອນມາຕ້ອງ ທີ່ປາງຜາສາດ ກູນັ້ນ
ຕັ້ງຫາກງາມຍິ່ງແຍ້ມ ພະອິນແຕ້ມແຕ່ງລີງ
ບັດນີ້ເຫັນຮູບເຈົ້າ ບໍ່ດີສິ່ງສັນລືນ ແທ້ດາຍ

ຕັ້ງຫາກເປັນຄືນນິມ ດັ່ງຈະນີ້ດັ່ງກ້ວາງ

ຄັນຫາກໂສມບາທ້າວ ຍັງງາມດີເກົ່າ

ກູຈັກໄປຢູ່ຊ້ອນ ບາທ້າວຮ່ວມຮຽງ ແທ້ນາ

ວ່າແລ້ວນາງລຸນກໍຈຳໃຫ້ສາວຮັບໃຊ້ຄືນໄປບອກທ້າວກ່ຳກາດຳໃຫ້ຮູ້ເຖິງຄວາມນຶກຄຶດຂອງນາງທີ່ມີຕໍ່ໂຕຂອງທ້າວ. ເມື່ອພວກສາວຮັບໃຊ້ກັບຄືນເມືອຮອດກໍໄດ້ແຈ້ງໃຫ້ທ້າວໄດ້ຮູ້ຕາມຄຳສັ່ງຂອງນາງ ລຸນທຸກປະການດັ່ງນັ້ນ ທ້າວກ່ຳກາດຳຈຶ່ງໄດ້ຫວນລະນຶກເຖິງຊາດ ປາງກ່ອນທີ່ທ້າວໄດ້ນຳມາໃຊ້, ຈາກນັ້ນທ້າວຈຶ່ງຕັດສິນໃຈຖອດຄາບ ຮ້າຍຂອງທ້າວອອກ ກາຍເປັນຜູ້ຈົບຜູ້ງາມຈົນບໍ່ມີບ່ອນຕິໄດ້ ໃຜໄດ້ ເຫັນກໍຫລົງໄຫລໃນຄວາມງາມຂອງທ້າວ.

ຕໍ່ມາທ້າວໄດ້ບອກໃຫ້ເດັກນ້ອຍທີ່ຢູ່ໃນວັງເອົາໝາກບ້າໄປຫລິ້ນຢູ່ບໍລິເວນໃກ້ງທີ່ພາສາດຂອງນາງລຸນ ແລ້ວຈຶ່ງພາກັນຝຶກແຊ່ວຢ່າ ໃຫ້ນາງໄດ້ນອນພ້ອມກັນມກໍໃຫ້ສູພາກັນເວົ້າວ່າ ທ້າວກ່ຳກາດຳນັ້ນ ຈຶ່ງແມ່ນເປັນຜູ້ຈົບຜູ້ງາມ ອັນວ່າຄວາມງາມຂອງນາງລຸນນັ້ນລືຈະ ໄປປຽບທ້າວໄດ້.

ເມື່ອເດັກນ້ອຍໄດ້ຮັບຄຳສັ່ງດັ່ງນັ້ນແລ້ວ ກໍພາກັນເອົາໝາກ ບ້າໄປຫລິ້ນຢູ່ໃກ້ງພາສາດທາງເບື້ອງຫົວບ່ອນນອນຂອງນາງລຸນ. ເອົາພາກັນຍິງໝາກບ້າແລ້ວກໍໂສເຫລກັນເຖິງຄວາມງາມຂອງທ້າວ ກ່ຳກາດຳຕາມທີ່ທ້າວໄດ້ແນະນຳໄວ້ນັ້ນ. ເມື່ອນາງລຸນໄດ້ຍິນເອົາ ເວົ້າເຖິງຄວາມງາມຂອງທ້າວກ່ຳກາດຳ ກໍມີຄວາມສົນໃຈຈຶ່ງຟ້າວ ເອີ້ນເອົາເດັກນ້ອຍຊຸມນັ້ນມາຖາມວ່າ ທ້າວກ່ຳກາດຳມີຮູບໂສມພວ ພັນ

ເປັນແນວໃດແທ້? ເດັກນ້ອຍຈຶ່ງໄດ້ບອກໃຫ້ນາງລຸນຮູ້ຕາມ ທີ່ທ້າວໄດ້ແນະນຳເອົາໄວ້ແລ້ວນັ້ນ ຈາກການບອກເລົ່າຂອງເດັກນ້ອຍ ເຮັດໃຫ້ນາງລຸນມີຄວາມປິຕິຍິນດີຈຶ່ງສັ່ງໃຫ້ຫາເຂົ້ານ້ຳມາສູ່ເດັກນ້ອຍ ກິນ

ຫລັງຈາກກິນເຂົ້າອີ່ມແລ້ວ ເດັກນ້ອຍຊຸມນັ້ນກໍລານາງລຸນກັບເມືອທີ່ພາສາດບ່ອນທ້າວກ່ຳກາດຢູ່ ແລ້ວຂຶ້ນລາຍງານໃຫ້ທ້າວໄດ້ຮູ້ ວ່າພວກເຂົາໄດ້ພາກັນໄປປະຕິບັດຕາມທີ່ທ້າວໄດ້ສັ່ງນັ້ນທຸກຢ່າງ ຮຽບຮ້ອຍແລ້ວ. ກ່າວເຖິງນາງລຸນພາຍຫລັງເດັກນ້ອຍລາໄປແລ້ວ ນາງກໍຄິດຮອດຫາທ້າວຈົນໃຈຊິຂາດ, ໃນທີ່ສຸດນາງກໍຕັດສິນໃຈໄປຢູ່ ຮ່ວມທ້າວ ນາງຄິດວ່າບໍ່ສົມຄວນທີ່ນາງຈະຂັດຂືນແນວໃດທ້າວກໍເປັນ ຜົວຂອງນາງທີ່ຖືກຕ້ອງຕາມຮີດຄອງປະເພນີ, ດັ່ງນັ້ນນາງຈຶ່ງເອີ້ນ ສາວໃຊ້ໃຫ້ເອົາຜ້າເຄື່ອງປະດັບເອ້ຍ້ອງເຂົ້າໄປໃຫ້ແລ້ວນາງກໍນຸ່ງ ສິ້ນເສື້ອຜືນໃຫມ່ເອ້ຍ້ອງໄປດ້ວຍເຄື່ອງປະດັບຕ່າງໆດັ່ງບົດກອນຂຽນວ່າ

ແຕ່ນັ້ນນາງຈຶ່ງບາຍເອົາສິ້ນ ຜືນງາມສຸບສອດ
ນາງຈຶ່ງເອ້ ອາດຢ້ອງ ຖືນ້າວເຊີດຄຳ
ບໍລະບວນແລ້ວ ດູງາມຖ້ວນຖີ
ອົບກິ່ນແລ້ວ ຫອມເຫົ້າທົ່ວກາຍ
ນາງຈຶ່ງສະເດັດຍ່າງຍ້າຍ ລົງຈາກຫໍຄຳ
ສາວສະຫນົມນຳ ແຫ່ແຫນລຸນນ້ອຍ
ກອຍໃຈດັ້ນ ເຖິງໂຮງທ້າວກ່ຳ
ເຂົ້າສູ່ຫ້ອງ ຫາທ້າວກ່ຳກາ

ພໍແຕ່ໄປເຖິງພາສາດກໍໄດ້ເຫັນຮູບໂສມຂອງທ້າວງາມປານວ່າພະ

ອິນທີ່ສະເດັດມາຈາກເທິງຟ້າ ປະກົດວ່າຕົນໂຕຂອງທ້າວຖືກ ໂອບຄຳເອົາໄວ້, ເມື່ອໄດ້ເຫັນຄືແນວນັ້ນນາງລຸນຈຶ່ງຄິດໃນໃຈວ່າ ອັນນີ້ມັນບໍ່ແມ່ນຫລານຍ່າເຖົ້າຈຳສອນທີ່ມີຊື່ວ່າທ້າວກ່ຳກາດຳດອກ. ດັ່ງນັ້ນນາງຈຶ່ງຍິ້ມໃຫ້ແລ້ວກໍຖາມດ້ວຍຄວາມຊື່ວ່າ ອັນວ່າທ້າວກ່ຳກາ ດຳຫລານຂອງຍ່າເຖົ້າຈຳສອນນັ້ນແມ່ນຜູ້ດຽວກັບພະອົງນີ້ບໍ່ຂໍພະອົງ ຈົ່ງບອກດ້ວຍຄວາມຊື່ແດ່ທ້ອນ, ເມື່ອທ້າວໄດ້ຟັງດັ່ງນັ້ນຈຶ່ງບອກກັບ ນາງລຸນວ່າ ນ້ອງເອີຍຍ່າໄດ້ເຫັນແຕ່ຕ່ອນຮ້າຍທ້າວກ່ຳກາດຳນັ້ນເນີອ້າຍນີ້ຫາກແມ່ນທຳມະຊາດເຊື້ອຫລານເຈົ້າຍ່າຍາຍນັ້ນແລ້ວ, ອ້າຍ ໄດ້ຫລິ້ງຜິດເຊພະເນຈອນມາອາໃສຢູ່ນຳຍ່າຈຳສອນນັ້ນກໍເພື່ອຊອກຕາມຫານ້ອງນີ້ແລ້ວ. ຝ່າຍນາງລຸນໄດ້ຍິນທ້າວເວົ້າແນວນັ້ນກໍມີຄວາມ ຊົມຊື່ນຍິນດີຫາອັນປຽບບໍ່ໄດ້.

ຈາກນັ້ນທັງສອງກໍໄດ້ລົມກັນເຖິງຄວາມຮັກຄວາມມັກທີ່ທັງສອງມີຕໍ່ກັນ ໂດຍສະເພາະນາງລຸນນັ້ນຕື່ນເຕັ້ນໃນຄວາມງາມຂອງທ້າວເອົາແທ້ເອົາວ່າ, ນັບຕັ້ງແຕ່ນັ້ນເປັນຕົ້ນມາທັງສອງກໍໄດ້ຢູ່ຮ່ວມກັນເປັນຜົວເມຍຢູ່ສຸກສະບາຍ ທຸກເຊົ້າຄ່ຳວັນຄືນກໍມີແຕ່ຄວາມສຸກສົດຊື່ນ ທ່າມກາງສຽງເສບສຽງວົ້ນຂອງເຫລົ່ານັກສິລະປິນປະຈຳພະລາຊະສຳນັກຂອງທ້າວ.

# ໑໗. ບັ້ນທ້າວກ່ຳກາດຳທົດສອງ ຍ່າເຖົ້າໃຫ້ເປັນສາວ

ເຖິງວ່າທ້າວກ່ຳກາດຳຈະໄດ້ນັ່ງເມືອງແລະໄດ້ນາງລຸນມາ ເປັນເມຍ ທັງມີຄວາມສຸກກາຍສະບາຍໃຈແລ້ວກໍຕາມ, ແຕ່ວ່າໃນໃຈຂອງທ້າວຍັງຄຶດຮອດຫາຍ່າເຖົ້າບໍ່ລືມ ເພາະເວລາທ້າວຕົກທຸກໄດ້ຍາກກໍອາໄສຢູ່ນຳຍ່າກິນເຂົ້າກິນປາຢູ່ນຳຍ່າ, ບັດນີ້ຈະໄດ້ສົມມະນາບຸນຄຸນຂອງຍ່າໃຫ້ສົມດັ່ງຄວາມມຸ່ງມາດປາຖະໜາຂອງຍ່າ. ດັ່ງນັ້ນທ້າວຈຶ່ງສັ່ງໃຫ້ເສນາໄປເຊີນຍ່າເຖົ້າຢູ່ສວນມາຫາທ້າວເປັນການດ່ວນ.

ເມື່ອໄດ້ຮັບຄຳສັ່ງເສນາຈຶ່ງຟ້າວໄປເຊີນຍ່າເຖົ້າຈຳສວນ, ແລະໄດ້ແຈ້ງໃຫ້ຍ່າເຖົ້າຮູ້ວ່າ ດຽວຫລານຂອງຍ່າຄືທ້າວກ່ຳກາດຳນັ້ນໄດ້ສະເຫວີຍລາດບ້ານເມືອງມີຄວາມສຸກສະບາຍພຶ່ງພ້ອມໄປດ້ວຍທຸກສິ່ງທຸກຢ່າງແລ້ວ. ຝ່າຍຍ່າເຖົ້າໄດ້ຟັງດັ່ງນັ້ນກໍມີຄວາມດີໃຈຫາອັນ ປຽບບໍ່ໄດ້ ເຖິງກັບຕົບເອິກແວ້ນແບນຫວາຍທັງເຕືອກ ເພາະໄດ້ຮູ້ຂ່າວວ່າຫລານຊາຍໄດ້ສະເຫວີຍລາດບ້ານເມືອງມີຄວາມສຸກສຳລານ. ຍ່າຈຶ່ງຟ້າວມ້ຽນສິ່ງຂອງເຮືອນແລ້ວກໍຟ້າວອອກຈາກເຮືອນໄປພ້ອມກັບ ເສນາອາມາດເພື່ອໄປຫາທ້າວກ່ຳກາດຳຫລານຊາຍຂອງຍ່າ.

ພໍແຕ່ໄປຮອດຍ່າກໍລ່ວງຂຶ້ນໄປເທິງຜາສາດຫາຫລານຊາຍຈຶ່ງເຫັນທ້າວກ່ຳກາດຳນັ່ງຢູ່ເທິງອາດສະໜາຄຳແລະເຫັນວ່າທ້າວມີຮູບໂສມອັນຈົບງາມປານວ່າພະອິນລົງມາຈາກສະຫວັນຊັ້ນຟ້າ ເຫັນທັງຫໍ ຜາສາດລາຊະມຸນທຽນອັນຮຸ່ງເຮືອງເຫລືອງເຫລື້ອມ ສະເພາະໂຕຂອງທ້າວນັ້ນຍ່າໄດ້ເຫັນຈົນຄຶດວ່າບໍ່ແມ່ນຫລານຂອງຕົນ. ຝ່າຍທ້າວກ່ຳກາ

ດຳແນນເຫັນຍ່າເຖົ້າຂຶ້ນໄປຫາກໍເອີ້ນຖາມທັນທີໂລດ ດັ່ງ ບົດກອນ
ຂຽນວ່າ.

ມາລືບຸນຊູຂ້ອຍ　　　　ສາຍໃຈເຈົ້າຍ່າ ຣຽມເອີຍ
ເຈົ້າຈຶ່ງມານຶ້ງພ　　　　ນຳຂ້ອຍອາດສະໜາ ຍ່າເອີຍ

ເມື່ອທ້າວເອີ້ນຖາມແລະບອກໃຫ້ຍ່າຂຶ້ນໄປນຶ່ງເທິງອາດສະ ໜາ ຄຳນຳທ້າວ, ຍ່າຈຶ່ງຄຸກເຂົ່າຄານເຂົ້າໄປຫາພ້ອມທັງຍິ້ມໃຫ້ ທ້າວ ທັງເວົ້າວ່າ ອັນນເປັນເພາະບຸນກຸສົນຂອງທ້າວທີ່ໄດ້ສ້າງໄວ້ ແຕ່ ປາງກ່ອນ, ຍ່າຍັງໄດ້ເວົ້າຍ້ອນຄືນເຖິງມື້ທີ່ທ້າວ ໄດ້ລາຍ່າວ່າຈະ ໄປ ທ່ຽວປ່າຫາຊອກເຕົ້າຊອກແລນມາຕ້ອນ ຍ່າໄດ້ຄອງຫາທ້າວທັງ ວັນ ທັງຄືນນອນກໍບໍ່ຫລັບເພາະຄຶດຮອດຫາຫລານ ແຕ່ແລ້ວຫລານກໍໄດ້ມາ ສ້າງບ້ານແປງເມືອງສ້າງຄອບສ້າງຄົວແລະກໍກາຍເປັນຜູ້ມີຮູບ ໂສມ ອັນຈົບງາມພິປານວ່າພະອິນສະເດັດລົງມາຈາກຟ້າ.

ຕໍ່ມາທ້າວກໍ່ກາດຳໄດ້ເອົາແຫວນໃສ່ລົງໃນນ້ຳເຕົ້າແລ້ວກໍທົດສົງ ຍ່າເຖົ້າໃຫ້ເປັນສາວ ມີຮູບຮ່າງຜິວພັນອັນຈົບງາມພິປານນາງ ສະ ຫວັນຊັ້ນຟ້າພ້ອມດຽວກັນນ ທ້າວກໍໄດ້ທົດສົງນາງລຸນແລະນາງ ຄຳ ຢາດລູກຂອງພະຍາແຖນກັບນາງບົວລອຍລູກສາວຂອງພະຍານາກ ທີ່ ເປັນເມຍຂອງທ້າວນຳພ້ອມ ປະກົດວ່າແຕ່ລະນາງກໍມີຄວາມ ສວຍ ຄວາມງາມສະເໝີກັນ.

ຫລັງຈາກທົດສົງຍ່າເຖົ້າໃຫ້ເປັນສາວແລ້ວ ທ້າວກໍເອົາແຫວນໃຫ້ ຍ່າໃສ່ເອົາເຄື່ອງນຸ່ງເຄື່ອງເອ້ຕ່າງໆໃຫ້ຍ່ານຸ່ງ ເພື່ອເປັນການຕອບ ບຸນແທນຄຸນຂອງຍ່າທີ່ໄດ້ມີຕໍ່ທ້າວໃນເວລາຜ່ານມາ, ຍັງບໍ່ພໍທັ້ນນທ້າວ

ຍັງໄດ້ມີລະມຶດໂຮງຊາວໃຫ້ຍ່າເຕີ້ມອີກໜຶ່ງຫລັງພ້ອມດ້ວຍສາວ ໃຊ້ຕື່ມອີກ ຍ່າຈຶ່ງມີຄວາມສຸກສົດຊື່ນດ້ວຍບຸນຂອງທ້າວແຕ່ລະມື້ຜູ້ບ່າວສ່ຳນ້ອຍກໍຫລູໄປຫລິ້ນນຳບໍ່ຂາດສາຍ, ເຖິງວ່າຍ່າຈະໄດ້ເປັນສາວໃໝ່ມີຜູ້ບ່າວຫຸ້ມຊໍ່ຕໍ່ຕາມແຕ່ຍ່າກໍມີຈິດໃຈກຸສົນໃຫ້ທານບໍ່ຂາດ.

ສ່ວນວ່າທ້າວກ່ຳກາດຳທ້າວກໍສຸກຢູ່ສ້າງເປັນເຈົ້ານັ່ງເມືອງ ທຸກແຫ່ງທີ່ນັບແຕ່ເມືອງຄີນເຖິງເມືອງນາກຕ່າງກໍໃຫ້ການຍົກຍ້ອງແລະກົງຂານຕໍ່ທ້າວ ແຕ່ລະປີນຳເອົາຊັບສິນເງິນຄຳເຂົ້າຂອງມາ ເສຍສ່ວຍເປັນປະຈຳ, ສຳລັບນາງລຸນກໍມີຄວາມສຸກຢູ່ໝົນບາທ້າວອື່ນ ວ່ານາງຄຳຢາດລູກສາວຂອງພະຍາແຖນນັ້ນເປັນເມຍຝ່າຍຊ້າຍນາງບົວລອຍລູກສາວຂອງພະຍານາກນັ້ນເປັນເມຍຝ່າຍໜ້າ ສ່ວນວ່າ ນາງລຸນນັ້ນເປັນເມຍຝ່າຍຂວາ. ທັງທ້າວແລະນາງຕ່າງກໍມີຄວາມຜາສຸກສຳລານທຸກເຊົ້າຄ່ຳວັນຄືນຮ່ວມກັນ.

ຄັນເວລາຕໍ່ມາທ້າວກໍພານາງລຸນໄປຢາມພໍ່ພະຍາ (ພໍ່ຂອງ ນາງລຸນ) ທ້າວກ່ຳກາດຳໄຕ້ຂົວຄຳນາງລຸນໄຕ້ຂົວເງິນ ໂດຍມີເສນາ ອາມາດສາວສະໜົມກໍມະວັງແຕ່ແຫນມີນມາຄອຍເບິ່ງທ້າວແລະນາງຢ່າງຄັບຄາໜາແໜ້ນ ພວກຊາວເມືອງໄດ້ເຫັນທ້າວແລະນາງມີຮູບໂສມອັນສວຍງາມພໍ່ງກັນ, ເມື່ອໄດ້ເຫັນຄວາມງາມຂອງທ້າວ ແລະນາງແລ້ວຜູ້ໃດກໍຫລົງໄຫລໃນຄວາມງາມຈົນຫລົງຕົບເອິກຕອງບາງຄົນກໍເບິ່ງຈົນວ່າຕາຄ້າງທີ່ລີ້.

ເມື່ອທ້າວແລະນາງໄປເຖິງໂຮງຫລວງຂອງພໍ່ແລ້ວຝ່າຍພະ ຍາມືອງຜູ້ເປັນພໍ່ ແນມເຫັນລູກເຂີຍລູກສາວມີຮູບໂສມອັນງົດງາມ ພໍ່

ປານວ່າພະອິນລົງມາຈາກຊັ້ນຟ້າເມືອງສະຫວັນ ເຊິ່ງຕ່າງຈາກຕອນເຂົ້າພາຂວັນໃນມື້ແຕ່ງດອງນັ້ນຈົນບໍ່ມີຫຍັງຈະປຽບປານໄດ້. ເມື່ອຂຶ້ນໄປຫາພໍ່ແລ້ວທັງສອງກໍໄດ້ພ້ອມກັນຖວາຍທຽນສິນມາຄາລະວະພໍ່ຕາມຮີດຄອງປະເພນີ, ຕອນນພວກເອື້ອຍທັງຫົກຂອງນາງລຸນກໍຊວນກັນມາເບິ່ງຄູ່ຜົວເມຍໃໝ່ ພວກເອື້ອຍທັງຫົກພາກັນຕົບເອິກແວ້ນກິນແຫນງລົ້ມທ່າວ ເພາະວ່າເຫັນຮູບທ້າວງາມລົ້ນລື້ນຄົນ, ທັງຫົກນາງຄິດ ເສຍໃຈໃຫ້ຕົນເອງທັງຢາກກອດຢາກຊົມທ້າວນຳນາງລຸນຜູ້ເປັນນ້ອງ ຄັນຊິພາກັນໂດດເຂົ້າກອດຊົມທ້າວພັດຢ້ານພໍ່ຮ້າຍໃຫ້ ເພາະວ່າພໍ່ ເຄີຍຖາມແລ້ວວ່າໃຜຈະຂານອາສາເປັນເມຍຂອງທ້າວກ່ຳກາດຳແຕ່ພວກຕົນໄດ້ພາກັນປະຕິເສດ ບັດນີ້ຈຶ່ງໄດ້ແຕ່ພາກັນຈົ່ມເສຍໃຈແລະ ເສຍດາຍທ້າວດັ່ງບົດກອນຂຽນວ່າ

ໂອນໍ້ສິບຂໍ້ເຮືອນ ສ້ວງມາປາກຜິດຄວາມ ນັ້ນເດ
ກູຢາກເອົາເບັດຊັກ ປາດເສຍປາຍລີ້ນ
ອັນວ່າທັງຫົກພ້ອມ ຈາກັນຊັບຊຶມ
ເມື່ອຈັກເອົາແກ່ງແກ້ ກໍກົວຢ້ານພໍ່ພະຍາ ແທ້ນາ

ທັງຫົກນາງໄດ້ຈົ່ມແຕ່ເສຍດາຍຈົນໃຈຈະຂາດ ຄັນຈະພາກັນເຂົ້າໄປນອນນຳທ້າວຮ່ວມກັບນາງລຸນຜູ້ເປັນນ້ອງກໍບໍ່ສົມມາພາຄວນ, ເມື່ອສິນມາຄາລະວະພໍ່ແລ້ວ ທັງສອງກໍລາພໍ່ກັບຄືນ. ຝ່າຍພະຍາຜູ້ເປັນ ພໍ່ກໍໄດ້ອວຍພອນໃຫ້ທັງສອງມີຄວາມສຸກໝັ້ນຄົງຂະນົງແກ່ນເພື່ອ ສາວບ້ານແປງເມືອງ ຂໍຢ່າໄດ້ມີໂພຍໄພອັນໃດມາບຽດບຽນ ໃຫ້ມີຍົດຖາບັນດາສັກແຜ່ກະຈາຍໄປທົ່ວແຜ່ນດິນແລະເມືອງສະຫວັນ.

ພາຍຫລັງຮັບພອນຈາກພະຍາຜູ້ເປັນພໍ່ແລ້ວ ທັງສອງກໍໄດ້ລາ ພໍ່ກັບຄືນສູ່ທີ່ຜາສາດຂອງຕົນ, ຕາມທາງຈາກຜາສາດຂອງພະຍາພໍ່ ໄປຫາຜາສາດຂອງທ້າວແລະນາງນັ້ນຊາວເມືອງພາກັນຫລັ່ງໄຫລມາຊຸມເບິ່ງຈົນຕາກະດ້າງຄິງແຂງກໍມີບາງຄົນທັງຕາເບິ່ງທັງມີພັດຊູດ ເກົາໂຕຂອງຈົນບາດຈົນສ້ອຍຫລາຍຄົນກໍຫລາຍເປັນຫລາຍຍວາດ ຫລາຍເຊິງຊີເປັນບ້ານຈໍາຄວາມງາມຂອງທ້າວ. ອັນນີ້ເປັນເພາະເວນ ຂອງພວກຊາວບ້ານຊາວເມືອງທີ່ເຄີຍເອົາໄຟຫລິວໄລ່ຈູດທ້າວໃນຕອນໄປເປົ່າແຄນ.

ເມື່ອທ້າວແລະນາງເມືອຮອດທີ່ຜາສາດແລ້ວກໍຢູ່ຢ່າງສະບາຍ ພັ່ງພ້ອມໄປດ້ວຍເສນາອາມາດສາວສະໜົມກົມມະວັງເຝົ້າຮັກສາບົວລະບັດທຸກເຊົ້າຄໍ່າວັນຄືນ, ທ້າວແລະນາງຢູ່ທ່າງຄອງຄໍາສຸກໄປດ້ວຍຂ້ອຍຂ້ານ້າໃຊ້ເຂົ້າຂອງເງິນຄໍາແກ້ວແຫວນທີ່ພະຍາອິນໄດ້ນິລະມິດ ເອົາໄວ້ໃຫ້ລ້ວນແຕ່ແມ່ນເຄື່ອງທິບທັງມວນ.

# 18: ບັ້ນທ້າວກ່ຳກາດຳໃຊ້ຄົນໄປນຳເອົາພໍ່

ທ້າວກ່ຳກາດຳ ໄດ້ສະເຫວີຍເມືອງ, ໄດ້ນາງລຸນມາເປັນ ເມຍ ໄດ້ຕອບບຸນແທນຄຸນຍ່າເຖົ້າຈຳສວນແລ້ວກໍຈິງ. ແຕ່ວ່າທ້າວຍັງບໍ່ ລືມ ຄິດຮອດຫາພໍ່ຜູ້ໃຫ້ກຳເນີດຂອງທ້າວທີ່ຍັງຢູ່ທາງບ້ານເກົ່າເມືອງເດີມ ພູ້ນ, ດັ່ງນັ້ນທ້າວຈິ່ງໃຫ້ຕົກແຕ່ງສະເພົາໃຫ່ຍຫລາຍລຳນັບເປັນ ຈຳນວນຮ້ອຍ ເມື່ອໄດ້ຮັບຄຳສັ່ງໃຫ້ຕົກແຕ່ງສະເພົາ ພວກຊາວ ເມືອງ ພ້ອມແສນພະຍາຂຸນໝື່ນ ຈຶ່ງພ້ອມພຽງກັນຕົກແຕ່ງສະເພົາແຕ່ເນື່ອງ ດ້ວຍບຸນຂອງທ້າວແລະນາງມາເຫລືອມສະເພົາທຸກລຳຈຶ່ງບັງເກີດຂຶ້ນ ດ້ວຍການນິລະມິດເອົາທັງນວນ.

ຫລັງຈາກໄດ້ສະເພົາຕາມທີ່ຕ້ອງການແລ້ວ ທ້າວຈຶ່ງສັ່ງໃຫ້ ເອົາ ເຄື່ອງຂອງມີຄ່າລົງໃສ່ໃນສະເພົາທຸກໆລຳດັ່ງນັ້ນຊາວເມືອງທັງບ່າວ ທັງສາວຈຶ່ງພາກັນຂົນເຄື່ອງລົງສູ່ສະເພົາດ້ວຍຄວາມຟົດຟື້ນມ່ວນ ຊື່ນ ດັ່ງບົດກອນຂຽນວ່າ.

ຍ່າວງພ້ອມ ຂົນຂອງລົງທ່າ
ສາວບ່າວເຮົ້າ ລົງພ້ອມຊູ້ຄົນ
ລາງພ່ອງເມຍຂົນພ້ອມ ດອມຜົວຊິສວ່າ
ຊູ້ກໍຂົນຊ່ວຍຊູ້ ນຳແຫ້ສັ່ງກັນ
ລາງພ່ອງຊູ້ສັ່ງຊູ້ ຊູ້ສັ່ງສະອອນອົກ
ລາງພ່ອງເມຍຊົມຜົວ ສັ່ງກັນຄິ້ຄອຍ
ຍາມເຈົ້າໄກໄປໜ້າ ຄືນມາຢ່າລືມອຸ່ນ

ບຸນທິວເອີຍຢູ່ບ້ານ ຄອງຖ້າອ້າຍຊິມາ ແທ້ນາ

ກ່ອນທີ່ສະເພົາທຸກລຳຈະອອກຈາກທ່າ ບ່າວສາວກໍເອີ້ນ ສັ່ງກັນ ຜົວກໍສັ່ງເມຍດ້ວຍຄວາມຫ່ວງໃຍອາໄລຫາ. ຝ່າຍທ້າວກ່ຳກາດຳກໍໄດ້ສັ່ງສອນພວກຈະເດີນທາງໄປກັບສະເພົາວ່າພວກສູເຈົ້າຈົ່ງໄປ ນຳເອົາພໍ່ມາໃຫ້ຮອດໃຫ້ເຖິງເຮົາພ໌ແທ້ງເນີ, ເມື່ອໄດ້ລຶກງານຍາມ ດີແລ້ວສະເພົາທຸກລຳກໍອອກຈາກທ່າ ແນມເບິ່ງເປັນຂະບວນຍາບ ໆ ໄປຕາມໜ້ານ້ຳ ມຸ່ງໜ້າສູ່ເມືອງພໍ່ຂອງທ້າວກ່ຳກາດຳຟັງສຽງ ລົມຕີເສົາກະໂດງດັງສະໜັ່ນຢ່າງບໍ່ຂາດໄລຍະ ສະເພົາກໍເຕັ້ນໄຕ່ ໄປຕາມໂຂຟອງຟາດຍອາກຍູ້ ດ້ວຍບຸນສົມພານຂອງທ້າວລົມຈົ່ງຍູ້ ສະເພົາໄປຢ່າງໄວ, ນັບເປັນເວລາໄດ້ຫລາຍວັນຫລາຍຄືນແຕ່ສະ ເພົາອອກເດີນທາງໄປ ເຮັດໃຫ້ບ່າວສາວນ້ອຍພາກັນ ຄິດຮອດຫາຊູ້ຢູ່ທາງບ້ານເກົ່າເມືອງຫລັງ ຜູ້ມີເມຍກໍຄິດຮອດເມຍ.

ເມື່ອສະເພົາໄປເຖິງທ່າເມືອງແລ້ວ ປັນດາຊາວເມືອງກໍພາ ກັນມາຄອຍເບິ່ງສະເພົາ ໃຜກໍພາກັນຫ້ວງເປັນແຊວງວ່າ ສະ ເພົາຫລວງມາຈອດຢູ່ທ່ານ້ຳນັບເປັນຮ້ອຍລຳບາງຄົນກໍວ່າບໍ່ເຄີຍພໍ້ ເຄີຍເຫັນສະເພົາແບບນີ້ ມີລວງລາຍຕ່າງໆອັນສວຍງາມປານວ່າລາຍທີ່ມາຈາກຊັ້ນຟ້າດາວະດຶງຕົກແຕ່ງໃຫ້. ຕໍ່ມານາຍສະເພົາຈົ່ງ ທ້າງ ທາເຄື່ອງອັນມີຄ່າເພື່ອເຂົ້າເຝົ້າພະຍາເມືອງອິນທະປັດທະນະຄອນໂດຍຜ່ານລ່າມຂອງພະຍາເມືອງນັ້ນ ເມື່ອເຂົ້າໄປເຝົ້າຖວາຍເຄື່ອງບັນນາການ ພະຍາເມືອງກໍໄດ້ຖາມຂ່າວແຂກເມືອງວ່າເດີນທາງມາ ໂດຍສະເພົາຕາມເສັ້ນທາງອັນຍາວໄກກໍຍັງຢູ່ດີມີແຮງແດ່ບໍ? ທັງໄດ້ຖາມ

ຂ່າວເຖິງທ້າວກ່ຳກາດຳເຊິ່ງເອີ້ນວ່າສະຫາຍແພງ ກໍຍັງຢູ່ດີບໍ ພ້ອມດ້ວຍກິດຈະການທຸກຢ່າງ. ນາຍສະເພົາຈຶ່ງຕອບວ່າພະສະຫາຍຂອງພະອົງນັ້ນຍັງຢູ່ສຸກສະບາຍຢູ່ດອກ ແຕ່ວ່າຍັງທີ່ຄິດຮອດຫາຜູ້ເປັນພໍ່ ທີ່ຍັງຢູ່ໃນເມືອງແຫ່ງນີ້ ເພາະວ່າທ້າວເກີດຢູ່ໃນເມືອງລາຊະຈອມທ້ວນແລ້ວ ຈົນອາຍຸໄດ້ 3 ປີ ຈຶ່ງມີໄພມາບັງບຽດ ຍ້ອນວ່າທ້າວໄດ້ເອົາກະໂຈມຄຳສຸບສອດ ຈຶ່ງກາຍເປັນຮູບຮ້າຍກ່ຳກາດຳບໍ່ດີຄືນ, ດັ່ງ ນັ້ນຜູ້ເປັນແມ່ຈຶ່ງເຫັນຈິ່ງອິດສາບັງບຽດລັງກຽດໃນຮູບຮ້າງອັນກ່ຳ ດຳຂອງທ້າວ ຈົນໃນທີ່ສຸດແມ່ກໍເອົາທ້າວໃສ່ແພໄຫລນ້ຳ, ດຽວນີ້ທ້າວ ໄດ້ໄປສິ້ນສ້າງສົມພານຍົດຍິ່ງອົນກໍລົງແຕ່ງຕັ້ງເມືອງໃຫ້ແກ່ບາ.

ນາຍສະເພົາໄດ້ຂາບທູນຕໍ່ພະຍາເມືອງອິນທະປັດຖະນາຄອນ ວ່າບັດນີ້ທ້າວໄດ້ແຕ່ງຕັ້ງໃຫ້ພວກເຮົານຳມາຫາທ່ານພະອົງເພື່ອວ່າ ຈະໄດ້ເຊີນເອົາພໍ່ຂອງທ້າວກັບໄປເມືອງຂອງທ້າວພ້ອມກັນ. ຝ່າຍພະຍາເມືອງໄດ້ຮັບຟັງດັ່ງນັ້ນກໍຄຶດຄະນຶງໃນໃຈເປັນອັນມາກ ທັງເວົ້າ ວ່າເຮົາບໍ່ຮູ້ວ່າທ້າວເກີດໄດ້ໃຫຍ່ເປັນຢູ່ເມືອງເຮົານີ້ ດັ່ງບົດກອນ ຂຽນວ່າ.

ພໍວ່າເຮົາຫາກຮູ້ ທ້າວເກີດໃນເມືອງ
ບໍ່ມີໄລອວນປະ ປ່ອຍໄປຊິເອົາໄວ້
ພະຈຶ່ງມີອາດໃຫ້ ນາຍສະເພົາທຸກເຍື່ອງ
ຕາມແຕ່ພະບາດເຈົ້າ ຄຳພ້ຽນສົ່ງມາ ນັ້ນຖ້ອນ

ພະຍາເມືອງໄດ້ເວົ້ານຳນາຍສະເພົາວ່າ ໃຫ້ທ່ານຊອກຫາ ເອົາເອງຕາມໃຈມັກເຮົາບໍ່ຊ່າງຈະຊອກໃຫ້ເພາະບໍ່ຮູ້ວ່າພໍ່ຂອງທ້າວ ນັ້ນ

ປັດຈຸບັນນີ້ຢູ່ຄຸ້ມຂ່ວງໃດ. ນາຍສະເພົາຈຶ່ງໄດ້ຂາບລາພະອົງ ກັບຄືນສູ່ສະເພົາຢູ່ທ່ານ້ຳ ຕາມເສັ້ນທາງແຕ່ໂຮງຂອງພະຍາເມືອງໄປ ຫາສະເພົາຈອດ ປະກົດວ່າສາວສ່ຳນ້ອຍເອນຢອກຕໍ່ແຍພວກຜູ້ບ່າວພໍ່ຄ້າສະເພົາທີ່ເປັນຄົນຕ່າງເມືອງດ້ວຍຖ້ອຍຄຳກ້ຽວພາລາສີຕ່າງໆນານາເຮັດໃຫ້ບ່າວພໍ່ຄ້າສະເພົາສະອອນອົກສະອອນໃຈ.

ເມື່ອໄປຮອດສະເພົາແລ້ວ ນາຍສະເພົາຈຶ່ງໄດ້ເວົ້າກັບພວກ ຜູ້ບ່າວໃນສະເພົາວ່າ ໃຫ້ທຸກຄົນເອົາເຄື່ອງຄ້າຂອງຂາຍໃນສະເພົານຂຶ້ນໄປເລາະຂາຍຕາມຕົວເມືອງເພື່ອວ່າຈະໄດ້ຊອກຮູ້ພໍ່ຂອງທ້າວກ່ຳກາດຳໄປໃນຕົວພ້ອມພວກຜູ້ບ່າວຊາວສະເພົາຈຶ່ງນຳສິ່ງຂອງຂຶ້ນ ໄປເລາະທ່ຽວຂາຍຕາມຄຸ້ມຂ່ວງຕ່າງໆ ບັງເອີນພໍ່ຂອງທ້າວກ່ຳກາ ໄດ້ຍິນວ່າມີແຂກຕ່າງເມືອງມາຂາຍເຄື່ອງຈຶ່ງເຂົ້າໄປຖາມຂ່າວຄາວສຸກທຸກ ທັງຢາກຮູ້ວ່າມາຈາກເມືອງໃດປະເທດໃດ ບາງເທື່ອອາດເປັນພີ່ນ້ອງກັນກໍເປັນໄດ້, ຈຶ່ງໄດ້ຮັບຄຳຕອບຈາກພໍ່ຄ້າສະເພົາວ່າ ພວກເຂົານັ້ນຢູ່ເມືອງອິນທາ (ອາດໝາຍເຖິງເມືອງຂອງທ້າວກ່ຳກາ ດຳທີ່ພະອິນສ້າງ, ເພາະວ່າເມືອງຂອງພະຍາພໍ່ຂອງນາງລຸນນັ້ນ ແມ່ນເມືອງເປັງຈານ) ພວກພໍ່ຄ້າສະເພົາເລົ່າວ່າພວກເຂົາໄດ້ຖືກ ແຕ່ງຕັ້ງໃຫ້ມາຊອກນຳຫາພໍ່ຂອງທ່ານພະຍາເມືອງ (ໝາຍເຖິງທ້າວ ກ່ຳກາດຳ) ເພາະທ່ານໄດ້ເກີດຢູ່ເມືອງແຫ່ງນີ້ຈົນອາຍຸໄດ້ 3 ປີ ຈຶ່ງຖືກແມ່ເອົາໃສ່ແພໄຫລລ່ອງນ້ຳໜີ ເພາະເຂົ້າໃຈວ່າເປັນຄົນ ປາກກືກ ແລະທັງມີຮູບຮ່າງໜ້າຕາກ່ຳດຳພິປານຜີຕາຍຊາກ, ເມື່ອຜູ້ເປັນພໍ່ໄດ້ຟັງພໍ່ຄ້າສະເພົາເວົ້າເຖິງຄວາມຫລັງດັ່ງນັ້ນກໍເປັນລົມລົ້ມ ລົງ

ດ້ວຍຄວາມສະເທືອນໃຈໃນອະດີດ, ຄົນທັງຫລາຍຈຶ່ງຟ້າວພາກັນ ປຸ້ມເຂົ້າຊ່ວຍພັດວີແລະໂຊມເອົາລຸກອື້ນ. ຈາກນັ້ນຈຶ່ງພາ ໄປຫາເຮືອນ.

ຫລັງຈາກຕັ້ງສະຕິໄດ້ແລ້ວຜູ້ເປັນພໍ່ຂອງທ້າວຈຶ່ງໄດ້ເວົ້ານຳພວກຜູ້ບ່າວພໍ່ຄ້າສະເພົາວ່າ ຜູ້ທີ່ພວກເຈົ້າເວົ້າເຖິງນັ້ນຕັ້ງຫາກແມ່ນ ລູກຊາຍຂອງຂ້ອຍແນ່ແລ້ວ, ໂອນໍລູກເອີຍບັດນີ້ເຈົ້າເປັນຜູ້ມີບຸນປາລະມີໄດ້ນັ່ງບ້ານຄອງເມືອງແລ້ວກໍຍັງບໍ່ລືມພໍ່ນີ້ ເຈົ້າໄດ້ແຕ່ງຄົນໃຫ້ມາ ນຳເອົາພໍ່ໄປຢູ່ນຳພໍ່ສຸດແສນມີຄວາມດີໃຈດອນລູກ. ຕໍ່ມາເຂົາຈຶ່ງເຊີນ ພໍ່ຂອງທ້າວລົງສູ່ສະເພົາ ແລ້ວນາຍສະເພົາຈຶ່ງໄດ້ຖວາຍເຄື່ອງ ນຸ່ງຂອງຖືແລະໄດ້ເລົ່າເຖິງຄວາມປະສົງຂອງທ້າວທີ່ໃຊ້ໃຫ້ພວກເຂົານຳມາເອົາພໍ່ໃນຄັ້ງນີ້, ບັດນີ້ໄດ້ມາພົບຜູ້ເປັນພໍ່ຂອງທ້າວສົມດັ່ງຄວາມ ຕັ້ງໃຈເອົາໄວ້ຈຶ່ງຂໍເຊີນພໍ່ເດີນທາງໄປພ້ອມກັບພວກເຮົາເລີຍ ໂລດດຽວນີ້ລູກຂອງພໍ່ໄດ້ນັ່ງບ້ານຄອງເມືອງ ເຊິ່ງພະຍາອິນພະຍາ ແຖນແລະພະຍານາກນິລະມິດຖວາຍພັ້ງພ້ອມໄປດ້ວຍຂ້ອຍຂ້ານ້າໃຊ້ ເຂົ້າຂອງເງິນຄຳແກ້ວແຫວນແລະທຸກສິ່ງທຸກຢ່າງບໍ່ມີຄວາມເດືອດ ຮ້ອນເຄືອງໃຈແນວໃດຈັກສິ່ງ.

ເມື່ອໄດ້ຟັງນາຍສະເພົາເລົ່າພໍ່ຍິ່ງຄິດຮອດຫາທ້າວຜູ້ເປັນລູກເອົາແທ້ເອົາວ່າ, ຈາກນັ້ນຈຶ່ງຟ້າວລານາຍສະເພົາກັບເມືອເຮືອນຂອງຕົນຈັດແຈ່ງແຕ່ງເຄື່ອງຂອງເພື່ອອອກເດີນທາງໄປກັບສະເພົາພ້ອມ ທັງສັ່ງລາພົນອງດັ່ງບົດກອນຂຽນວ່າ.

ບັດນີ້ຂ້ອຍຈັກໄປເຂົ້າຫ້ອງ ສະເພົາທອງເຮືອຮົບ

ຢາມແຈ່ມເຈົ້າ ບຸນກວ້າງລູກຄົງ ກ່ອນແລ້ວ

ຝູງໝູ່ລຸງແລະປ້າ ອາວອາຄ່ອຍຢູ່ ດີເຢີ
ຂ້ອຍຈັກລາຈາກເຈົ້າ ໄປພ້ອມພ່ຳສະເພົາ
ບັດນີ້ທາວ ໄດ້ສຸກຢູ່ສ້າງ ສະເຫວີຍລາດກິນເມືອງ
ເຈົ້າກໍເຄືອງໃຈຄຶດ ແຕ່ງສະເພົາມາພ້
ເຮົາຈັກໄປຢາມເຈົ້າ ຕາມຄຳລູກສັ່ງ
ອັນວ່າດີແລະຮ້າຍ ເມື່ອໜ້າສິ່ງໃດ ບໍ່ຮູ້

ຈາກນັ້ນກໍມຸ່ງໜ້າລົງສູ່ສະເພົາ ພວກພີ່ນ້ອງກໍພາກັນໄປສົ່ງ ຈົນເຖິງສະເພົາຢູ່ທ່ານ້ຳ ໃຜງກໍຍິນທຸກຍິນໂສກຄຶດຮອດຫາ ໂດຍ ສະເພາະຜູ້ເປັນແມ່ທັງ ໄທ້ທັງເອັ້ນສັ່ງວ່າໃຫ້ຮີບໄປຮີບມາບ້ານມາເຮືອນ ຜູ້ເປັນພໍ່ຂອງທ້າວກ່ຳກາດດຳກໍ ໄດ້ເອັ້ນສັ່ງແມ່ວ່າ ບໍ່ຕ້ອງຄຶດຮ້ອນ ຄຶດເຄືອງສິ່ງໃດນຳລູກດອກ. ກ່ອນອອກເດີນທາງນາຍສະເພົາກໍ ໄດ້ເຂົ້າເຝົ້າເພື່ອທູນລາພະຍາເມືອງ ທາງຝ່າຍພະຍາເມືອງກໍໄດ້ຝາກຄວາມຢັ້ຢາມຖາມຂ່າວເຖິງພະສະຫາຍພ້ອມທັງສັ່ງໃຫ້ຈັດເອົາເຄື່ອງບັນນາການໄປເປັນຂອງຕ້ອນແກ່ພະສະຫາຍນຳພ້ອມ.

ເມື່ອໄດ້ເວລາແລ້ວນາຍສະເພົາກໍສັ່ງໃຫ້ສະເພົາເຄື່ອນອອກຈາກທ່າມຸ່ງໜ້າກັບສູ່ເມືອງແຫ່ງຕົນ, ພວກຜູ້ສາວຜູ້ບ່າວຕ່າງກໍເອັ້ນສັ່ງລາຊູ້ສາວສຽງສະໜັ່ນສະເພົາກໍເຄື່ອນໄປຕາມໜ້ານ້ຳເລື້ອຍໆນັບເປັນເວລາໄດ້ຫລາຍວັນຫລາຍຄືນກໍຈຶ່ງໄປເຖິງທ່າເມືອງແຫ່ງຕົນ. ເມື່ອສະເພົາໄປຮອດໃຜງກໍມີຄວາມດີອົກດີໃຈຮ້ອງໂຮບິນແຊວສະ ແຄງຄວາມເບີກບານມ່ວນຊື່ນທີ່ໄດ້ກັບມາຮອດບ້ານຮອດເມືອງ ຊຸມ ລູກເມຍຊູ້ສາວກໍພາກັນໄປຮັບໄປຕ້ອນ.

ຕໍ່ມານາຍສະເພົາກໍໄດ້ເຂົ້າເຝົ້າຂາບທູນໃຫ້ທ້າວກ່ຳກາດຳ ຜູ້ເປັນພະຍາປົກຄອງເມືອງຣູ້ວ່າ ເຂົາໄດ້ນຳເອົາພໍ່ມາຣອດເມືອງ ພແລ້ວ, ດັ່ງນັ້ນທ້າວກ່ຳກາດຳຈຶ່ງລົງມາຄອຍຖ້າພົບພໍ່ຢູ່ສະໜາມຫລວງ ນາຍສະເພົາຈຶ່ງຟ້າວກັບໄປເຊີນພໍ່ຂອງທ້າວຢູ່ໃນສະເພົາໃຫ້ຂຶ້ນ ມາຫາທ້າວຢູ່ສະໜາມ (ອາດແມ່ນບ່ອນຮັບຕ້ອນ) ຜູ້ເປັນພໍ່ຈຶ່ງຟ້າວ ອອກຈາກສະເພົາໂດຍດ່ວນ ເຊິ່ງມີຊາວສະເພົາແຫ່ແຫນ. ພໍ່ແຕ່ແນມເຫັນລູກຜູ້ເປັນພໍ່ກໍ່ຕົກສະເງີ້ ເພາະວ່າຣູບຮ່າງຜິວພັນບໍ່ຄືທ້າວກ່ຳກາດຳ ທີ່ພໍ່ເຄີຍລ້ຽງມາຈັກດ, ດຽວນີ້ທ້າວເປັນຜູ້ມີຣູບໂສມອັນຈົບງາມພໍ ປານວ່າພະອິນສະເດັດລົງມາຈາກຊັ້ນຟ້າດາວະດຶງ, ສ່ວນທ້າວກ່ຳກາດຳນັ້ນພໍແຕ່ໄດ້ເຫັນໜ້າພໍ່ກໍ່ຈື່ໄດ້ໂລດ ທັງພໍ່ແລະລູກໄດ້ພົບພໍ້ກັນກໍ ເລົ່າລື້ນເຖິງຄວາມເກົ່າຄວາມຫລັງດັ່ງບົດກອນຂຽນວ່າ.

ແຕ່ນັ້ນໂສມສະເຫລົາທ້າວ ຫລຽວເຫັນຕົນພໍ່
ທ້າວກໍຍັງຈື່ໜ້າ ຈຳໄດ້ບໍ່ລືມ
ພໍ່ແຈ່ມເຈົ້າ ຣຽງລູກບາດານ
ສອງກໍຈາດຳທຸກ ແຕ່ຫລັງມາເວົ້າ
ພໍ່ບໍ່ຫລົງເຫັນໜ້າ ສາຍໃຈຕົນພໍ່
ຄຶດວ່າຈົມຢູ່ພື້ນ ວັງນ້ຳຊີບໍ່ເຫັນ ອີກນໍ
ພໍ່ກໍອະທິຖານຕັ້ງ ປາລະມີທຸກແຫ່ງ
ບັດນີ້ບຸນສົ່ງໃຫ້ ເຖິງເຈົ້າພະຍອດອິນ ພໍ່ແລ້ວ

ທ້າວກ່ຳກາດຳໄດ້ເວົ້ານຳພໍ່ ລູກກໍໄຫລລ່ອງນ້ຳໄປຄ້າງທາດຈ່າຍ ເປັນເວລາຫລາຍມື້ທັງອຶດເຂົ້າຢາກປາແສນທຸກແສນຍາກລຳ ບາກ

ເປັນເວລານານໄດ້ 3 ເດືອນ ຈຶ່ງຮ້ອນຮອດພະອິນໄດ້ລົງມາ ນຳ ເອົາຕົວຂອງລູກອອກຈາກຫາດອນຊາຍໄປໄວ້ແຄມຝັ່ງນ້ຳ, ຕໍ່ມາ ລູກ ກໍໄດ້ຈັດເຊພະເນຈອນໄປອາໄສຢູ່ນຳຍ່າເຖົ້າຈຳສວນ. ລູກໄດ້ອາໄສ ຢູ່ນຳຍ່າຈຳສວນເປັນເວລາຫລາຍປີ ຍ່າຈຶ່ງໄດ້ໄປຂໍໂອມນາງລຸນໃຫ້ ເປັນເມຍ ຈຶ່ງພະຍາເມືອງກໍໄດ້ກະລຸນາໂຜດພາຍພະອົງໄດ້ຄາດຄ່າ ດອງນາງຢ່າງຫລວງຫລາຍພາຍນາກມີຄົບທຸກສິ່ງທຸກຢ່າງແຕ່ວ່າ ລູກ ກໍບໍ່ອັດດິນຍອມປະຕິບັດຕາມທີ່ພະອົງຄາດຄ່າເອົາໄວ້. ລູກໄດ້ ໄຫວ້ວອນເຖິງພະຍາອິນ, ພະຍາແຖນແລະພະຍານາກໃຫ້ມາຈັດຊ່ອຍສ້າງ ບ້ານແປງເມືອງໃຫ້ພ້ອມດ້ວຍຂ້ອຍຂ້ານ້ານາໃຊ້ເຂົ້າຂອງເງິນຄຳ ແລະ ຫລອດຮອດເຄື່ອງຕ່າງໆຢ່າງພຽງພໍກັບຄວາມຕ້ອງການຈຶ່ງພະຍາອິນ ພະຍາແຖນແລະພະຍານາກນິລະມິດໃຫ້ພຽງເວລາຄືນດຽວຄົບ ໝົດ ທຸ່ເບື້ອງພໍ່ເອີຍ.

ຫລັງຈາກນິລະມິດເປັນບ້ານເປັນເມືອງໃຫ້ຕາມທີ່ລູກໄດ້ຮ້ອງ ຂໍ ແລ້ວ ພະຍາອິນ, ພະຍາແຖນແລະພະຍານາກກໍພາກັນກັບຄືນທີ່ຢູ່ຈາກ ນັ້ນລູກຈຶ່ງໄດ້ນຳຄ່າສອດສິນດອງໄປຖວາຍພະຍາເມືອງຕາມປະ ສົງ ຂອງພະອົງທຸກຢ່າງ. ພໍ່ລູກລົມກັນເຖິງຄວາມເກົ່າຄວາມຫລັງອັນຄ້ອຍ ໃຈ ທັງສອງທັງລົມທັງໄຫ້ໄປນຳ ພວກເສນາອາມາດເຫັນແນວ ນັ້ນ ກໍໄຫ້ຕາມເພາະຄຶດພໍ້ຄາວທີ່ພໍ່ລູກໄດ້ພັດພາກຈາກກັນ.

ຕໍ່ມານາຍສະເພົາແລະແສນເມືອງໄດ້ເຊີນທັງສອງຂຶ້ນສູ່ທີ່ພາສາດ ພໍ່ລູກນັ່ງຮຽງກັນຢູ່ໃນພາສາດພວກນາງທັງຫລາຍກໍໄດ້ເຂົ້າມາ ຂາບ ໄຫວ້ແລະຖາມຂ່າວຄາວໂດຍສະເພາະແມ່ນນາງລຸນໄດ້ຖາມຂ່າວ ປູ່

ເຖິງພີ່ນ້ອງວົງວານທຸກຄົນຍັງຢູ່ດີມີແຮງແນ່ບໍ່? ຜູ້ເປັນປູ່ກໍຕອບວ່າພໍ່ແມ່ພີ່ນ້ອງປ້າລຸງທຸກຄົນຍັງຢູ່ດີມີແຮງທຸກເຊົ້າຄ່ຳວັນຄືນພ້ອມທັງການສ້າງຢູ່ກະທຳກິນ ແຕ່ຫາກຍັງຄິດຮອດຫາແຕ່ລູກຜູ້ຢູ່ຫ່າງພັ້ນ ເພາະຫາວ ໄດ້ພັດພາກຈາກມາເປັນເວລາເຕີ່ງນານບໍ່ຮູ້ວ່າເປັນຕາຍຮ້າຍດີ ແນວໃດຍັ້ດນບຸນມີຈຶ່ງມາເຫັນໜ້າລູກ. ຄວາມເກົ່າຄວາມຫລັງທີ່ປູ່ເລົ່າມານັ້ນເຮັດໃຫ້ນາງລຸນເກີດມີຄວາມຄ້ອຍຍ້ຽງໄປນຳ.

# 19ະ ບັ້ນທ້າວກ່ຳກາດຳຫົດສົງພີ່

ໃນເວລາຕໍ່ມາ ທ້າວກ່ຳກາດຳກໍໄດ້ທຳພິທີຫົດສົງພີ່ໃຫ້ກາຍ ເປັນຄົນໜຸ່ມ ມີຮູບໂສມຜິວພັນອັນຜ່ອງໃສຈົບງາມປານອ່າພະອິນລົງ ມາຈາກຟ້າເມືອງສະຫວັນ, ທ້າວ ໄດ້ເອົາເສື້ອຜ້າອາພອນຜືນໃໝ່ອັນຈົບງາມໃຫ້ພີ່ນຸ່ງ ທັງປະດັບເອ້ຍ້ອງ ໄປດ້ວຍເຄື່ອງສ້ອຍສັງວານ, ເມື່ອເປັນທີ່ຮຽບຮ້ອຍແລ້ວກໍ່ ໄດ້ນຳເອົາຍ່າມາເຂົ້າພາຂວັນດອມພີ່, ບັນດາສາວສະໜົມແລະເສນາອາມາດກໍພາກັນມານັ່ງອ້ອມພາຂວັນແລ້ວ ກໍພາກັນເສບງັນຍ່າງມ່ວນຊື່ນດັ່ງບົດກອນຂຽນວ່າ.

ເມື່ອນັ້ນ ໄທຟາດຄ້ອງ ຕີຄ່ອຍສວນໄລ
ໄທລະບຳອັບ ຊຸ່ຍເພງແຄນໄດ້
ຝູງຊໍ ໄດ້ ເອົາຕີເຕາະຕ່ອຍ
ເອົາກໍເຕາະຕ່ອຍຕ້ອງ ສຽງກອງກ່ອມລະບຳ
ສຽງມ່ວນແມ້ງ ຕີເສບພາຂວັນ
ດູດັ່ງ ນັນເມືອງສຽງ ຄືນເຄັງໂຮງທ້າວ
ປຸໂລຫິດເຈົ້າ ຖວາຍພອນພ້ອມພ່ຳ
ຖວາຍແກ່ເຈົ້າ ໃຫ້ຍືນໝັ້ນໝື່ນວັດສາ

ຫລັງຈາກສູດຂວັນຕາມຮີດຄອງປະເພນີແລ້ວທ້າວກ່ຳກາດຳກໍ ໄດ້ມອບທີ່ພາສາດຫລັງໜຶ່ງໃຫ້ພີ່ກັບຍ່າ ໂດຍມີສາວສະໜົມຮັບໃຊ້ ທຸກເຊົ້າຄ່ຳວັນຄືນ, ທັງສອງ ໄດ້ຢູ່ຮ່ວມກັນດ້ວຍຄວາມຜາສຸກສຳລານຍ່າເອງກໍ ໄດ້ຮັບຄວາມສຸກກາຍສະບາຍໃຈ ຍ້ອນບຸນປາລະມີຂອງ ທ້າວກ່ຳກາດຳ, ປະກົດວ່າຮູບໂສມທັງພີ່ແລະຍ່າມີແຕ່ຜູ້ງາມໆເທົ້າກັນປານ

ວ່າອອກຈາກແມ່ພົມແຫ່ງດຽວເຂົາໂລດ ແລະຢູ່ຫ່າງທັງສອງ ຄອງຄວາມສຸກບໍ່ໄດ້ເດືອດຮ້ອນເຄືອງໃຈ ສິ່ງໃດເລີຍ. ສຳລັບທ້າວກ່ຳກາດຳກໍໄດ້ສະເຫວີຍລາດບ້ານເມືອງຂອງຕົນຮ່ວມກັບນາງລຸນພົ່ງ ພ້ອມໄປດ້ວຍເງິນຄຳເຂົ້າຂອງຊ້າງມ້າຂ້າຍິງຂ້າຊາຍນັບເປັນຮ້ອຍ ເປັນພັນ ຢູ່ຫ່າງຮັກສາສິນກິນທານບໍ່ໄດ້ຂາດ.

ສຸດບໍລະບວນ

ວັນທີ 3/8/1992

# ສາລະບານ


| | |
|---|---|
| ບັ້ນທ້າວກ່ຳກາດຳລົງມາເກີດ | ໜ້າທີ 1 |
| ບັ້ນນາງຫລ້ານ້ອຍເອົາທ້າວໃສ່ແພ ໄຫລໄປຕາມແມ່ນ້ຳ | 12 |
| ບັ້ນພະອິນໃຫ້ກາດຳລົງມາເອົາ ທ້າວອອກຈາກດອນຊາຍ | 17 |
| ບັ້ນຍ່າຈຳສອນທ້າງບ້ວງໃສ່ທ້າວ | 22 |
| ບັ້ນທ້າວກ່ຳກາດຳຖືກບ້ວງຂອງ ຍ່າຈຳສອນ | 27 |
| ບັ້ນທ້າວກ່ຳກາດຳຂໍຮ້ອຍດອກໄມ້ ດອນຍ່າໄປຖວາຍນາງລຸນ | 31 |
| ບັ້ນນາງລຸນຢາກເຫັນເຈົ້າຂອງຮວດດອກໄມ້ | 37 |
| ບັ້ນພະຍາໃຫ້ຊອກຫາເຈົ້າຂອງສຽງແຄນ | 45 |
| ບັ້ນທ້າວກ່ຳກາດຳຖອດຄາບໄວ້ແລ້ວເຂົ້າ ໄປຫານາງລຸນ | 50 |
| ບັ້ນນາງລຸນສົ່ງຂອງຝາກໄປໃຫ້ທ້າວກ່ຳກາດຳ | 55 |
| ບັ້ນພະຍາແລະນາງລຸນຫລົງໄຫລໃນສຽງແຄນ | 59 |
| ບັ້ນທ້າວກ່ຳກາດຳຈຳໃຫ້ຍ່າໄປຂໍນາງລຸນ ມາເປັນເມຍ | 66 |
| ບັ້ນພະຍາເມືອງຄາດຄ່າດອງນາງລຸນ | 72 |

ບັ້ນທ້າວກ່ຳກາດຈຊອກຫາເງິນຄ່າດອງ 76
ບັ້ນທ້າວກ່ຳກາດຈແຕ່ງດອງກັບນາງລຸນ 82
ບັ້ນທ້າວກ່ຳກາດຈຍອມຊອດຄາບ 87
ບັ້ນທ້າວກ່ຳກາດຈທືດສິງຢ່າເຖົ້າ 91
ໃຫ້ເປັນສາວ
ບັ້ນທ້າວກ່ຳກາດຈໃຊ້ຄືນໄປນຳເອົາພໍ່ 96
ບັ້ນທ້າວກ່ຳກາດຈ໌ທືດສິງພໍ່ 105

- ພິມທີ່ໂຮງພິມຊາວໜຸ່ມ ຖະໜົນຫລວງພະບາງ ໂທ : 216338 - 215721 ຕຸ ປ ນ 2536

900